ຄູ່ມື
ລະບົບນ້ຳສະອາດແບບຍືນຍົງ
ໃນຊຸມຊົນຊົນນະບົດທາງພາກເໜືອ ຂອງສປປລາວ

ວິທີການ-ບົດຮຽນທີ່ຖອດຖອນໄດ້-ຂໍ້ສະເໜີແນະ
ຈາກໂຄງການການຮ່ວມມືປັບປຸງດ້ານໂພຊະນາການ (SCALING)

ທັນວາ 2021

ການສື່ສານປ່ຽນແປງດ້ານພຶດຕິກຳແບບຍືນຍົງຈາກການເຊື່ອມໂຍງການປັບປຸງ ແລະ ຄຸ້ມຄອງດ້ານໂພຊະນາການ

ພາກສະເໜີ

ເປັນຫຍັງຈຶ່ງສ້າງປຶ້ມຄູ່ມືນີ້ຂຶ້ນມາ:

- ເຖິງວ່າຈະມີຄວາມຄືບໜ້າບາງດ້ານນັບຕັ້ງແຕ່ 10 ປີຜ່ານມາ, ການຂາດສານອາຫານຍັງເປັນບັນຫາໃຫຍ່ຢູ່ໃນ ສປປ ລາວ. ການປະຕິບັດດ້ານສຸຂະອະນາໄມທີ່ຍັງບໍ່ທັນໄດ້ດີ ແລະ ການເຂົ້າເຖິງນ້ຳສະອາດແມ່ນຍັງຢູ່ໃນລະດັບຕ່ຳແມ່ນ ສາເຫດພື້ນຖານຂອງການຂາດສານອາຫານ ທີ່ຈະຕ້ອງໄດ້ເອົາໃຈໃສ່ເພື່ອປັບປຸງສະພາບທາງດ້ານໂພຊະນາການ ແລະ ສຸຂະພາບຂອງຊຸມຊົນໃນຊົນນະບົດຂອງປະເທດລາວ.

  ປຶ້ມຄູ່ມືສະບັບນີ້ມີຈຸດປະສົງເພື່ອແບ່ງປັນຄວາມຮູ້ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການໂຄງການຮ່ວມມືປັບປຸງດ້ານໂພຊະນາການ (SCALING) ໃຫ້ກັບຄູ່ຮ່ວມພັດທະນາ ແລະ ຄູ່ຮ່ວມງານພາກລັດຖະບານ ເພື່ອໃຫ້ການຊ່ວຍເຫຼືອ ຫຼື ປະຕິບັດໂຄງການໃນອະນາຄົດທີ່ແນໃສ່ປັບປຸງສຸຂະພາບ ສຸຂະອານາໄມໃນຊຸມຊົນໃນພາກເໜືອຂອງ ສປປ ລາວ.
- ຄູ່ມືສະບັບນີ້ປະກອບສ່ວນສ້າງຄວາມສາມາດກ່ຽວກັບນ້ຳສະອາດ ແລະ ຄູ່ຮ່ວມງານພາກລັດຖະບານທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການຮ່ວມມືປັບປຸງດ້ານໂພຊະນາການ (SCALING), ເຊິ່ງເປັນສ່ວນໜຶ່ງຂອງຍຸດທະສາດ ແລະ ຄວາມຍືນຍົງຂອງໂຄງການ (SCALING) ທີ່ໄດຈັດຕັ້ງປະຕິບັດໂຄງການໃນ 4 ແຂວງ.
- ຄູ່ມືສະບັບນີ້ເພື່ອເປັນເອກະສາກ່ຽວກັບການພັດທະນາວິທີການໃໝ່ຂອງນ ໂຄງການ SCALING, ໄລຍະການຈັດຕັ້ງ ປະຕິບັດຢູ່ ໂດຍສະເພາະການຕິດຕັ້ງລະບົບກົງເຕີນ້ຳເຂົ້າໃນຄົວເຮືອນ.

ສຳລັບຜູ້ໃດ:

- ພະນັກງານວິຊາການສິ່ງເສີມສຸຂະພາບ ແລະ ສຸຂະອານາໄມ (WASH), ວິຊາການນ້ຳສະອາດ ແລະວິຊາການທັງໝົດທີ່ຮັບຜິດຊອບການກໍ່ສ້າງ/ປັບປຸງລະບົບນ້ຳສະອາດໃນຊຸມຊົນ.
- ຜູ້ອຳນວຍຄວາມສະດວກໃນຊຸມຊົນ (ທີ່ມີລະດັບສູງ) ແລະ ພາກສ່ວນກ່ຽວຂ້ອງທັງໝົດທີ່ຮັບຜິດຊອບການຈັດຕັ້ງທາງ ສັງຄົມ ແລະ ການປຸກລະດົມຊຸມຊົນທີ່ກ່ຽວຂ້ອງກັບການກໍ່ສ້າງ/ປັບປຖງລະບົບນ້ຳສະອາດໃນຊຸມຊົນ.
- ຄູ່ຮ່ວມພັດທະນາ, ອົງການປົກຄອງທ້ອງຖິ່ນ, ຄູ່ຮ່ວມງານພາກລັດຖະບານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມໃນການກໍ່ສ້າງ/ຟື້ນຟູລະບົບນ້ຳສະອາດໃນຊຸມຊົນ.

ນຳໃຊ້ແນວໃດ:

- ອ່ານເທື່ອລະພາກ. ປຶ້ມຄູ່ມືດັ່ງກ່າວຊຶ່ງປະກອບມີຂໍ້ມູນ ແລະ ຄຳແນະນຳຫຼັກມີຈຸດປະສົງເພື່ອໃຫ້ນຳໄປປະຕິບັດໃຫ້ໄດ້ ຫຼາຍທີ່ສຸດ.
- ລາຍລະອຽດ ແລະ ຮ່າງແບບຢ່າງໄດ້ຖືກສະເໜີໄວ້ຢູ່ໃນເອກະສານຊ້ອນທ້າຍເພື່ອເປັນເອກະສານອ້າງອີງ ແລະ ສາມາດ ປັບປ່ຽນໃຫ້ເໝາະສົມໄດ້.
- ຫຼີກລ້ຽງການນຳໃຊ້ຄຳສັບທາງວິຊາການ (ຫຼືຄຳນິຍາມທີ່ກຳນົດໄວ້) ຫຼາຍທີ່ສຸດ. ລາຍລະອຽດແລະຄຳແນະນຳດ້ານ ວິຊາການແມ່ນໄດ້ນຳສະເໜີຢູ່ໃນເອກະສານຊ້ອນທ້າຍ.

ຄູ່ມືນີ້ມີສອງພາສາຄື: ພາສາລາວ ແລະ ພາສາອັງກິດ ເພື່ອເຜີຍແຜ່ຢ່າງກວ້າງຂວາງ ແລະ ເປີດກ້ວາງ.

ການຈັດພິມໃນຄັ້ງນີ້ແມ່ນໄດ້ຮັບການສະໜັບສະໜູນດ້ານການເງິນຈາກສະຫະພາບເອີຣົບ ແລະ ອົງການຜຣັ່ງເພື່ອການພັດທະນາ. ເນື້ອໃນຂອງ ເອກະສານນີ້ແມ່ນຄວາມຮັບຜິດຊອບພຽງຜູ້ດຽວຂອງຄູ່ຮ່ວມງານໂຄງການ SCALING ແລະ ບໍ່ຈຳເປັນຕ້ອງສະທ້ອນເຖິງທັດສະນະຂອງສະຫະ ພາບເອີຣົບ.

Save the Children · care · ສະຫະພາບ ເອີຣົບ European Union · CCL · ChildFund Laos

ສາລະບານ

1. ສະເໜີໂຄງການຮ່ວມມືປັບປຸງດ້ານໂພຊະນາການ (SCALING) 1
2. ພາກວິຊາການ : ການກໍ່ສ້າງ/ສ້ອມແປງລະບົບນ້ຳສະອາດ 5
2.1. ການປະເມີນຜົນຄວາມເປັນໄປໄດ້ເບື້ອງຕົ້ນ (ຂັ້ນຕອນ 1) 12
2.2. ການອະນຸມັດແບບກໍ່ສ້າງທີ່ໄດ້ມາດຕະຖານ (ຂັ້ນຕອນ 2) 14
2.3. ການສຳຫຼວດດ້ານວິຊາການ ແລະ ການຈັດຕັ້ງທາງສັງຄົມໃນຂັ້ນຊຸມຊົນ (ຂັ້ນຕອນ 3) 15
2.4. ການອອກແບບກໍ່ສ້າງ (ຂັ້ນຕອນ 4) 18
2.5. ການຄາດຄະເນມູນຄ່າ ແລະ ວາງແຜນການກໍ່ສ້າງ (ຂັ້ນຕອນ 5) 22
2.6. ການລະດົມຊຸມຊົນ (ຂັ້ນຕອນ 6) 25
2.7. ຂະບວນການຈັດຊື້ (ຂັ້ນຕອນ 7) 27
2.8. ການກະກຽມ (ຂັ້ນຕອນ 8) 32
2.9. ການສິ່ງວັດສະດຸ (ຂັ້ນຕອນ 9) 36
2.10. ການດຳເນີນການກໍ່ສ້າງ ແລະ ຕິດຕາມກວດກາ (ຂັ້ນຕອນ 10) 38
2.11. ການກວດວຽກ 50 % ແລະ 100 % (ຂັ້ນຕອນ 11) 41
2.12. ການມອບໃຫ້ຊຸມຊົນ (ຂັ້ນຕອນ 12) 44
2.13. ການຕິດຕາມຫຼັງຈາກການນຳໃຊ້ 6 ເດືອນ (ຂັ້ນຕອນ 13) 46
3. ການສະໜັບສະໜູນຂອງການຈັດຕັ້ງທາງສັງຄົມໃຫ້ແກ່ຄະນະກຳມະການຄຸ້ມຄອງນ້ຳ 47
3.1. ຄະນະກຳມະການຄຸ້ມຄອງນ້ຳແມ່ນຫຍັງ ? 47
3.2. ການຄັດເລືອກສະມາຊິກຄະນະກຳມະການຄຸ້ມຄອງນ້ຳ 50
3.3. ການບຳລຸງຮັກສາ 51
3.4. ການຄຸ້ມຄອງການເງິນ 53
3.5. ບົດຮຽນທີ່ຖອດຖອນໄດ້ ແລະ ກໍລະນີສຶກສາ 55
4. ການຕິດຕັ້ງກົ໊ກເຕີ້ນ້ຳໃນຄົວເຮືອນ: ວິທີແກ້ໄຂເພື່ອປະຫຍັດນ້ຳ ? 57
4.1. ກົ໊ກເຕີ້ນ້ຳແມ່ນຫຍັງ ? 57

4.2. ຂັ້ນຕອນທາງດ້ານເຕັກນິກສຳລັບການຕິດຕັ້ງກົງເຕົ່ານ້ຳ..... 58
4.3. ຂໍ້ດີ ແລະ ຂໍ້ເສຍຂອງກົງເຕົ່ານ້ຳສຳລັບຄົວເຮືອນແມ່ນຫຍັງ ? 61
4.4. ຂໍ້ແນະນຳກ່ຽວກັບກົງເຕົ່ານ້ຳ..... 63

ຄຳຫຍໍ້

AFD	ອົງການຝຣັ່ງເພື່ອການພັດທະນາ
BN	ເມືອງບຸນເໜືອ
BoQ	ໃບຄິດໄລ່ລາຄາ
CCL	ອົງການຮ່ວມມືກັບປະເທດລາວ
CF	ອົງການຊາຍຝັ່ນປະຈຳລາວ
DAFO	ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
DAO	ຫ້ອງວ່າການປົກຄອງເມືອງ
DHO	ຫ້ອງການສາທາລະນະສຸກເມືອງ
DREO	ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ
EU	ສະຫະພາບເອີຣົບ
GoL	ລັດຖະບານແຫ່ງ ສປປ ລາວ
HH	ຄົວເຮືອນ
HUA	ແຂວງ ຫົວພັນ
INGO	ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ
LNT	ແຂວງ ຫຼວງນ້ຳທາ
LPB	ແຂວງ ຫຼວງພະບາງ
MoA	ບົດບັນທຶກຂໍ້ຕົກລົງ
NNS	ຍຸດທະສາດແຫ່ງຊາດດ້ານໂພຊະນາການ
NNSAP	ແຜນປະຕິບັດງານງານຍຸດທະສາດແຫ່ງຊາດດ້ານໂພຊະນາການ
NO	ເມືອງ ຍອດອູ
PHO	ພະແນກສາທາລະນະສຸກແຂວງ
PIN	ການຮ່ວມມືເພື່ອປັບປຸງໂພຊະນາການ
PSL	ແຂວງ ຜົ້ງສາລີ
SCALING	ໂຄງການຮ່ວມມືປັບປຸງດ້ານໂພຊະນາການ
SCI	ອົງການຊ່ວຍເຫຼືອເດັກ
WASH	ນ້ຳ, ສຸຂະພິບານ ແລະ ສຸຂະອານາໄມ

ຄຳຂອບໃຈ

ປຶ້ມຄູ່ມືສະບັບນີ້ໄດ້ຖືກກະກຽມໂດຍທີມງານໂຄງການຮ່ວມມືປັບປຸງດ້ານໂພຊະນາການ (SCALING) ແລະ ໂດຍສະເພາະແມ່ນ ທ່ານ ສີສານ ໄຊນະວົງ ຊ່ຽວຊານ WASH ຈາກ ອົງການຮ່ວມມືກັບປະເທດລາວ (CCL) ແລະ ທ່ານ ແສງພະຈັນ ອຸ່ນແກ້ວ ທີ່ ປຶກສາດ້ານການຕະຫຼາດນ້ຳ, ສຸຂະພາບ ແລະ ສຸຂະອານາໄມ ຈາກ ອົງການຊ່ວຍເຫຼືອເດັກ (Save the Children).

ຂໍສະແດງຄວາມຂອບໃຈທີມງານ ແລະ ຄູ່ຮ່ວມງານທັງໝົດຂອງໂຄງການ SCALING ທີ່ປະກອບສ່ວນເຂົ້າໃນການພັດທະນາ ແລະ ເຮັດໃຫ້ປຶ້ມຄູ່ມືສະບັບນີ້ສຳເລັດລົງ.

1. ສະເໜີໂຄງການຮ່ວມມືປັບປຸງດ້ານໂພຊະນາການ (SCALING)

ເພື່ອຕອບໂຕ້ກັບການຂາດສານອາຫານຢ່າງຕໍ່ເນື່ອງ ແລະ ແຜ່ຫຼາຍ, ລັດຖະບານລາວ (ລັດຖະບານລາວ) ໄດ້ພັດທະນາຍຸດທະສາດດ້ານໂພຊະນາການແຫ່ງຊາດ (NNS) ແລະ ແຜນປະຕິບັດງານຍຸດທະສາດໂພຊະນາການແຫ່ງຊາດ (NNSAP) ສຳລັບປີ 2016-2025. ໃນວຽກງານດັ່ງກ່າວ,"ໂຄງການຮ່ວມມືປັບປຸງດ້ານໂພຊະນາການ - (ໂຄງການ SCALING) ມີຈຸດປະສົງເພື່ອສະໜັບສະໜຸນໃນລະດັບທີ່ໃຫ້ສອດຄ່ອງກັບເປົ້າໝາຍຂອງແຜນປະຕິບັດງານ NNSAP ຂອງລັດຖະບານ ແລະ ວິທີການທີ່ເຊື່ອມສານກັນ ເພື່ອໃຫ້, ສອດຄ່ອງກັບຈຸດປະສົງຂອງການຮ່ວມມືຂອງ ສະຫະພາບເອີຣົບ ເພື່ອການປັບປຸງໂພຊະນາການ (PIN). ໂຄງການ SCALING ແມ່ນໄດ້ຮັບການສະໜັບສະໜຸນທຶນຈາກສະຫະພາບເອີຣົບ ແລະໄດ້ຮັບການຈັດຕັ້ງປະຕິບັດລະຫວ່າງເດືອນ ທັນວາ ປີ 2017 ຫາ ເດືອນ ທັນວາ ປີ 2021 ໂດຍຄູ່ຮ່ວມຈັດຕັ້ງປະຕິບັດໂຄງການຂອງ INGOs 4 ອົງກອນຄື:

- ອົງການຊ່ວຍເຫຼືອເດັກ (Save the Children), ເປັນຫຼັກ, ໂດຍຮັບຜິດຊອບການຈັດຕັ້ງປະຕິບັດໂຄງການຢູ່ທີ່ແຂວງຫຼວງພະບາງ (ໃນ 7 ເມືອງເປົ້າໝາຍ ແລະ ມີ 140 ບ້ານ) ແລະ ສະໜອງທາງດ້ານວິຊາການກ່ຽວກັບສຸຂະພາບແລະໂພຊະນາການ.
- ອົງການໄຊຝັນປະຈຳລາວ (ChildFund Laos) ຮັບຜິດຊອບການຈັດຕັ້ງປະຕິບັດຢູ່ແຂວງຫົວພັນ (1 ເມືອງ, 30 ບ້ານ) ແລະ ໄດ້ສະໜອງວິຊາການທາງດ້ານໂພຊະນາການ
- ອົງການແຄຣ໌ປະຈຳລາວ (CARE in Laos) ຮັບຜິດຊອບການຈັດຕັ້ງປະຕິບັດຢູ່ແຂວງຫຼວງນ້ຳທາ (3 ເມືອງ, 100 ບ້ານ) ແລະໄດ້ສະໜອງວິຊາການທາງດ້ານໂພຊະນາການ ແລະ ບົດບາດຍິງຊາຍ,
- ອົງການຮ່ວມມືກັບປະເທດລາວ (CCL) ຮັບຜິດຊອບການຈັດຕັ້ງປະຕິບັດຢູ່ແຂວງຜົ້ງສາລີ (3 ເມືອງ, 80 ບ້ານ) ແລະໄດ້ສະໜອງວິຊາການດ້ານໂພຊະນາການ ແລະ ນ້ຳສະອາດແລະສຸຂະນາໄມ (WASH) ພາຍໃນກຸ່ມ.

ຈຸດປະສົງລວມຂອງໂຄງການ SCALING ແມ່ນເພື່ອປັບປຸງສະຖານະພາບທາງໂພຊະນາການຂອງໄວໜຸ່ມຍິງ, ແມ່ຍິງຖືພາ ແລະ ໃຫ້ນົມລູກ, ແລະ ເດັກນ້ອຍອາຍຸຕ່ຳກວ່າ 5 ປີ ຢູ່ໃນເມືອງເປົ້າໝາຍ, ໂດຍມີ 3 ຜົນໄດ້ຮັບໄລຍະກາງຕໍ່ໄປນີ້: **iOC1**: ພຶດຕິກຳ ທີ່ກ່ຽວຂ້ອງກັບໂພຊະນາການ ແລະ ສຸຂະນາໄມໄດ້ຮັບການປັບປຸງໃຫ້ດີຂຶ້ນຈົນເຖິງຄວາມສາມາດໃນການເຂົ້າເຖິງໂພຊະນາການທີ່ມີຄຸນນະພາບ ແລະ ການບໍລິການໄວຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ສຸຂະພາບເດັກ (RNMCH) ຢູ່ໃນ 14 ເມືອງ; **iOC2:** ສະພາບແວດລ້ອມໃນທ້ອງຖິ່ນຫຼຸດຜ່ອນສາເຫດທີ່ຕື້ນຕໍຂອງການຂາດສານອາຫານຢູ່ໃນ 14 ເມືອງ; **iOC3:** ການຄຸ້ມຄອງດ້ານໂພຊະນາການໄດ້ຮັບການສ້າງຄວາມເຂັ້ມແຂງຢູ່ຂັ້ນເມືອງ, ຂັ້ນກຸ່ມບ້ານ ແລະ ຊຸມຊົນໃນ 14 ເມືອງ.

ການເຊື່ອມສານກັນລະຫວ່າງໂພຊະນາການ ແລະ ນ້ຳ, ສຸຂະພິບານ ແລະ, ສຸຂະນາໄມ (WASH) ມີຫຍັງແດ່?

ການເຂົ້າເຖິງສິ່ງອຳນວຍຄວາມສະດວກທາງດ້ານນ້ຳສະອາດ ແລະ ສຸຂະນາໄມ (WASH) ຕ່ຳມີຜົນກະທົບໂດຍກົງຕໍ່ສະຖານະພາບທາງດ້ານໂພຊະນາການຂອງເດັກ (ເຊັ່ນ: ພະຍາດຖອກທ້ອງ, ການຕິດເຊື້ອແມ່ທ້ອງໃນລຳໄສ້ແລະພະຍາດລຳໃສ້ແປປວນ) ລວມທັງຜົນສະທ້ອນທາງອ້ອມ (ຕົວຢ່າງ: ຕ້ອງຍ່າງເປັນໄລຍະທາງໄກເພື່ອໄປຕັກນ້ຳ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ ແລະ ເຮັດໃຫ້ແມ່ມີເວລາໜ້ອຍໃນການດູແລລູກ). ຜົນກະທົບເຫຼົ່ານີ້ຖືກຮັບຮູ້ໃນຍຸດທະສາດໂພຊະນາການແຫ່ງຊາດ (NNS

) ແລະ ພາຍໃຕ້ທິດ 6 ສໍ ແລະ 13 ປໍ (ສຸຂະພາບ) ຂອງແຜນປະຕິບັດງານງານຍຸດທະສາດແຫ່ງຊາດດ້ານໂພຊະນາການ (NNSAP).

ໃນທິດສະດີການປ່ຽນແປງຂອງມັນ (ເບິ່ງຮູບສະແດງທີ 1), ໂຄງການ by a consortium of 4 INGOs (SCALING) ປະກອບມີວຽກງານນ້ຳ, ສຸຂະພິບານ ແລະ ສຸຂະນາໄມ (WASH) ແມ່ນໜຶ່ງໃນບັນດາອົງປະກອບຫຼັກເພື່ອແກ້ໄຂບັນຫາການຂາດສານອາຫານໃນລະດັບຊຸມຊົນທີ່ມີຜົນກະທົບຕໍ່ເດັກນ້ອຍທີ່ມີອາຍຸ ຕ່ຳກວ່າ 5 ປີ.



ຮູບສະແດງ 1 : ທິດສະດີການປ່ຽນແປງທາງນິເວດວິທະຍາຂອງໂຄງການ SCALING. WASH ແມ່ນໜຶ່ງໃນອົງປະກອບຫຼັກ (Op2.2)

ທິດສະດີການປ່ຽນແປງຂອງໂຄງການ SCALING ແມ່ນອີງໃສ່ວິທີການທາງດ້ານນິເວດວິທະຍາສັງຄົມ (ເບິ່ງແຜນວາດທິດສະດີການປ່ຽນ ແປງ ຂ້າງເທິງ), ຊຶ່ງໝາຍເຖິງການເຮັດວຽກແລະສ້າງຄວາມເຂັ້ມແຂງໃນການເຊື່ອມໂຍງລະຫວ່າງບຸກຄົນ/ຄົວເຮືອນ (ຊຶ່ງໃນໃຈກາງ), ຈົນເຖິງ ຂັ້ນບ້ານ, ລະບົບ, ແລະນະໂຍບາຍ (ວົງນອກ). ໂຄງການ SCALING ດຳເນີນການມຸມສິ່ງນີ້ໂດຍການແກ້ໄຂ 3 ບັນຫາຕົ້ນຕໍທີ່ເຮັດໃຫ້ເດັກ ນ້ອຍເຕ້ຍຢູ່ໃນປະເທດລາວຄື: 1) ການຄອບງຳຂອງການປະຕິບັດທີ່ບໍ່ສົມເຫດສົມຜົນຕໍ່ກັບສຸຂະພາບແລະໂພຊະນາການຂອງໄວໜຸ່ມແລະຂອງ ຜູ້ເປັນແມ່ (ສີແດງ), 2) ການຂາດການສະໜັບສະໜູນທາງດ້ານສະພາບແວດລ້ອມໃນທ້ອງຖິ່ນໃຫ້ກັບການປັບປຸງໂພຊະນາການ (ສີຟ້າ) 3) ຂີດຄວາມສາມາດໃນການຄຸ້ມຄອງທີ່ມີໜ້ອຍໂດຍສະເພາະໃນລະດັບແຂວງ, ເມືອງ ແລະ ຊຸມຊົນ. (ສີສົ້ມ)

ໂຄງການ SCALING ໄດ້ເຮັດຫຍັງແດ່ພາຍໃຕ້ອົງປະກອບນ້ຳ, ສຸຂະພິບານ ແລະ ສຸຂະອານາໄມ WASH?

- **ສ້າງຂີດຄວາມສາມາດໃຫ້ວິຊາການນ້ຳສະອາດ ແລະ ໃຫ້ກັບຄູ່ຮ່ວມງານທ້ອງຖິ່ນ:** ການຝຶກອົບຮົມ (ກ່ຽວກັບການກຳນົດ ລະບົບນ້ຳສະອາດ, ການອອກແບບ ແລະ ການກໍ່ສ້າງ ແລະ ການສົ່ງເສີມວຽກການຕະຫຼາດກ່ຽວກັບນ້ຳ, ສຸຂະພິບານ ແລະ ສຸຂະອານາໄມ), ການໄປຢ້ຽມຢາມແລກປ່ຽນບົດຮຽນ, ...ການເຜີຍແຜ່ຄູ່ມືສະບັບນີ້ແມ່ນສ່ວນໜຶ່ງຂອງຍຸດທະສາດການສ້າງຂີດຄວາມອາດສາມາດໃນ ໂຄງການ SCALING
- **ການກໍ່ສ້າງ ແລະ ສ້ອມແປງບົບນ້ຳສະອາດໃນຊຸມຊົນ,** ແລະ ການສ້າງຂີດຄວາມສາມາດໃຫ້ກັບຄະນະກຳມະການຄຸ້ມຄອງນ້ຳຢູ່ໃນແຕ່ລະຊຸມຊົນທີ່ກ່ຽວຂ້ອງເພື່ອຮັບປະກັນຄວາມຍືນຍົງຂອງສິ່ງກໍ່ສ້າງ/ສ້ອມແປງໃໝ່
- **ການສົ່ງເສີມດ້ານການຕະຫຼາດນ້ຳ, ສຸຂະພິບານ ແລະ ສຸຂະອານາໄມ:** ໂດຍຜ່ານການສົ່ງເສີມເຄື່ອງກອງນ້ຳ, ການສະໜັບສະ ໜູນການສ້າງວິດຖ່າຍຂອງຄົວເຮືອນ, ການສົ່ງເສີມດ້ານສຸຂະອະນາໄມທີ່ຈັດຢູ່ໃນໂຮງຮຽນມັດທະຍົມສຶກສາຕອນຕົ້ນ ແລະ ການອຳນວຍຄວາມສະດວກໃນການເຊື່ອມໂຍງລະຫວ່າງຜູ້ປະກອບການຂາຍຜະລິດຕະພັນສຸອະນາໄມໃນຊຸມຊົນ.

ເງິນໄດ້ຮັບຈຳນວນໜຶ່ງທີ່ເປັນຕົວເລກ

ຕາຕະລາງທີ 1: ເງິນໄດ້ຮັບຈຳນວນໜຶ່ງທີ່ເປັນຕົວເລກສຳລັບການກໍ່ສ້າງ ແລະ ການສ້ອມແປງພື້ນຖານໂຄງລ່າງ ທີ່ສະ ໜັບສະໜູນໂດຍ ໂຄງການ SCALING

ແຂວງ	ຜົ້ງສາລີ	ຫຼວງນ້ຳທາ	ຫົວພັນ	ຫຼວງພະບາງ
ຈຳນວນການກໍ່ສ້າງລະບົບນ້ຳ/ ສ້ອມແປງ	13	20	4	48
ຈຳນວນຜູ້ໄດ້ຮັບປະໂຫຍດການ ການກໍ່ສ້າງ/ຟສ້ອມແປງລະບົບນ້ຳ ສະອາດ	4,328 (ຍິງ 1,600 ຄົນ)	(ຍິງ xxx ຄົນ)	1,334 (ຍິງ 654 ຄົນ)	(ຍິງ xxx ຄົນ)
ການຕິດຕັ້ງກົງເຕີ້ນ້ຳ	ຕິດຕັ້ງກົງເຕີ້ນ້ຳເຂົ້າໃນແຕ່ລະຄົວເຮືອນ		ລະດັບຄົວເຮືອນໃນ 1 ບ້ານ	ລະດັບຄົວເຮືອນໃນ 6 ບ້ານ
ກ໊ອກນ້ຳໃນບ້ານ	ບໍ່ມີ	ບໍ່ມີ	3 ບ້ານ	42 ບ້ານ
ການປະກອບສ່ວນເປັນເງິນສົດ ເຂົ້າໃນການກໍ່ສ້າງ/ສ້ອມແປງ ລະບົບ ນ້ຳສະອາດ	700 000 ຫາ 1 ລ້ານ ກີບ / ຄົວເຮືອນ	470 000 ຫາ 1.6 ລ້ານກີບ/ຄົວເຮືອນ	150 000 ກີບ/ຄົວ ເຮືອນ	350 000 ກີບ/ຄົວ ເຮືອນ

ຕາຕະລາງທີ 2: ຜົນໄດ້ຮັບຈຳນວນໜຶ່ງຈອງການສົ່ງເສີມການຕະຫຼາດ WASH ພາຍໃຕ້ໂຄງການ SCALING

ແຂວງ	ຈຳນວນພະນັກງານສາທາເມືອງທີ່ໄດ້ຮັບການຝຶກອົບຮົມ	ຈຳນວນຈຸດເປົ້າໝາຍຕົວແທນຊຸມຊົນທີ່ໄດ້ຮັບການຝຶກອົບຮົມ	ຈຳນວນຜູ້ປະກອບການທີ່ຮັບການຝຶກອົບຮົມ	ຈຳນວນຄົວເຮືອນທີ່ໄດ້ສ້າງຫ້ອງນ້ຳ	ຈຳນວນຄົວເຮືອນທີ່ໄດ້ຈັດຊື້ເຄື່ອງກ່ອງນ້ຳ	ບ້ານທີ່ປະກາດບ້ານ ODF
ຫຼວງພະບາງ	14	210	9	4,169	89	118
ຫົວພັນ	6	20	3	762	57	7
ຫຼວງນ້ຳທາ	35	72	6	1,919	353	25
ຜົ້ງສາລີ	15	75	2	1,055	487	37
ລວມ	**70**	**377**	**20**	**7 905**	**986**	**187**

2. ພາກວິຊາການ : ການກໍ່ສ້າງ/ສ້ອມແປງລະບົບນ້ຳສະອາດ

ການກໍ່ສ້າງລະບົບນ້ຳສະອາດຕ້ອງປະຕິບັດຕາມ 13 ຂັ້ນຕອນດັ່ງທີ່ໄດ້ສັງລວມໄວ້ໃນຕາ/ຕະລາງຂ້າງລຸ່ມນີ້:

ເພື່ອເຕືອນ !

- ການກໍ່ສ້າງ ຫຼື ບູລະນະລະບົບນ້ຳສະອາດແມ່ນຕ້ອງໃຊ້ເວລາ! ໂດຍສະເລ່ຍຕ້ອງໃຊ້ເວລາ **11-12 ເດືອນ** ນັບແຕ່ມື້ກຳນົດສະຖານທີ່ກໍ່ສ້າງຈົນເຖິງມື້ມອບຮັບໃຫ້ກັບຊຸມຊົນ.
- ເພື່ອໃຫ້ການຈັດຕັ້ງປະຕິບັດງ່າຍດາຍ ແລະ ລຽບງ່າຍຂຶ້ນຄວນຈະຕ້ອງ**ວາງແຜນລ່ວງໜ້າ**ເພື່ອຫຼີກລ້ຽງຄວາມຊັກຊ້າທີ່ອາດເກີດຂຶ້ນ. ການປະເມີນສະພາບອາກາດ (ລະດູຝົນ) ແມ່ນມີຄວາມສຳຄັນເຊັ່ນກັນ, ເສັ້ນທາງເຂົ້າບ້ານໃນຫຼາຍບ້ານຍັງເຂົ້າບໍ່ໄດ້ເປັນເວລາຫຼາຍເດືອນໃນແຕ່ລະປີ.
- **ຂັ້ນຕອນການກະກຽມ** ແມ່ນຈຳເປັນ ແລະ ເດັດຂາດສຳລັບການຈັດຕັ້ງປະຕິບັດທີ່ລຽບງ່າຍ ແລະ ການນຳໃຊ້ແບບຍືນຍົງພາຍຫຼັງ.
- **ພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ** ຕ້ອງມີສ່ວນຮ່ວມໃນຂັ້ນຕອນຕ່າງເຊັ່ນ:
    - ພະແນກສາທາລະນະສຸກ (ນ້ຳສະອາດ)
    - ພະແນກກະສິກຳ ແລະ ປ່າໄມ້
    - ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
    - ເຈົ້າໜ້າທີ່ອົງການປົກຄອງທ້ອງຖິ່ນ (ເຈົ້າເມືອງ, ນາຍບ້ານ, etc.)
- ເພື່ອກໍ່ສ້າງລະບົບນ້ຳສະອາດແບບຍືນຍົງບໍ່ພຽງແຕ່ດ້ານວິຊາການເທົ່ານັ້ນ.ການສະໜັບສະໜູນຂອງອົງການຈັດຕັ້ງທາງສັງຄົມຕ່ຳກັບຊຸມຊົນເປັນສິ່ງຈຳເປັນ. ການສ້າງຄວາມອາດສາມາດໃນລະດັບຊຸມຊົນໃຊ້ເວລາຫຼາຍແຕ່ເປັນສິ່ງຈຳເປັນ.

ບາດກ້າວ	ກິດຈະຈຳທີ່ຈະເຮັດ	ແມ່ນໃຜ	ເມື່ອໃດ-ໄລຍະເວລາ	ຢູ່ໃສ	ຮູບແບບແລະເອກະສານທີ່ໃຊ້ເປັນຫຼັກຖານອ້າງອີງ
1. ການປະເມີນຄວາມເປັນໄປໄດ້ເບື້ອງຕົ້ນ	- ການປະເມີນສະຖານທີ່: ທາງເຂົ້າ, ແຫຼ່ງນ້ຳ, ຄວາມສົນໃຈຂອງຊຸມຊົນ, ຄວາມເປັນຜູ້ນຳຂອງຊຸມຊົນ - ປະເມີນຄວາມສ່ຽງ (ຄວາມປອດໄພ, ການປົກປ້ອງເດັກ, ຄວາມສ່ຽງຂອງຊຸມຊົນ ...)	- ອົງການປົກຄອງເມືອງ - ຜູ້ບໍລິຫານໂຄງການ - ອົງການປົກຄອງບ້ານ - ວິຊາການ WASH ແລະ ພັດທະນາຊຸມຊົນ - ຊ່ຽວຊານ WASH/ວິສະວະກອນກໍ່ສ້າງ	ບາດກ້າວທີ 1 1 ວັນ/ບ້ານຢ່າງໜ້ອຍ	ຂັ້ນບ້ານ	ເອກະສານຊ້ອນທ້າຍ 1: ມາດຖານການຄັດເລືອກສະຖານທີ່ ເອກະສານຊ້ອນທ້າຍ 2: ປະເມີນຄວາມສ່ຽງການປົກປ້ອງເດັກຈາກການກໍ່ສ້າງລະບົບນ້ຳປະປາ ເອກະສານຊ້ອນທ້າຍ 3: ປະເມີນຄວາມສ່ຽງຈາກ
2. ການອະນຸມັດແບບມາດຕະຖານ	- ຂະແໜ່ງນ້ຳສະອາດແຂວງ ຫຼື ວິສະວະກອນກໍ່ສ້າງຂອງໂຄງການອະນຸມັດແບບແຕ້ມມາດຕະຖານ	- ຂະແໜ່ງນ້ຳສະອາດແຂວງ - ຊ່ຽວຊານ WASH/ວິສະວະກອນກໍ່ສ້າງ	ກ່ອນຈັດຕັ້ງປະຕິບັດກິດຈະກຳ ຢ່າງຊ້ຳ 1 ອາທິດ	ຂັ້ນແຂວງ	ເອກະສານຊ້ອນທ້າຍ 4: ແບບແຕ້ມມາດຕະຖານລະບົບນ້ຳປະປາ
3. ເຕັກນິກແລະ ການສຳຫຼວດອົງການທາງສັງຄົມ	- ປະຊຸມຂັ້ນບ້ານ (ອົງການປົກຄອງບ້ານ, ຕົວແທນຊຸມຊົນ), ກຳນົດຄວາມຮັບຜິດຊອບ - ເກັບກຳຂໍ້ມູນກ່ຽວກັບຄວາມເປັນມາຂອງຊຸມຊົນ - ການສຳຫຼວດດ້ານວິຊາການ: ຜົນຜະລິດແຫຼ່ງນ້ຳ (L/s), ຂໍ້ມູນພື້ນດິນ (ຄວາມສູງ, ຄວາມຍາວຂອງສາຍທໍ່ແລະຈຸດຜິດ, ປະເພດຂອງລະບົບນ້ຳສະອາດທີ່ຕ້ອງການ)	- ທີມສຳຫຼວດ: ພະນັກງານຫ້ອງການສາທາລະນະສຸກເມືອງ, ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການຊັບພະຍາກອນ ແລະ ສິ່ງແວດລ້ອມ, ຫ້ອງວ່າການປົກຄອງເມືອງ, ພະນັກງານໂຄງການ (ພະນັກງານ WASH ແລະພັດທະນາຊຸມຊົນ) - ຊ່ຽວຊານ WASH/ວິສະວະກອນກໍ່ສ້າງ - ອົງການປົກຄອງບ້ານ	ອົງໃສ່ການຄັດເລືອກ ຄວນເປັນຊ່ວງຕົ້ນລະດູແລ້ງ ຢ່າງນ້ອຍ 2 ວັນ/ບ້ານ+ ຫຼາຍວັນເພື່ອກະກຽມ	ຂັ້ນບ້ານ ທີ່ແຫຼ່ງນ້ຳ	ເອກະສານຊ້ອນທ້າຍ 5: ວິທີການປຶກສາຫາລືກັບຊຸມຊົນກ່ອນການສຳຫຼວດລະອຽດ ເອກະສານຊ້ອນທ້າຍ 6: ຕາຕະລາງການກໍ່ສ້າງລະບົບນ້ຳປະປາ ເອກະສານຊ້ອນທ້າຍ 7: ການສຳຫຼວດໂດຍເຄື່ອງມື Abney ເອກະສານຊ້ອນທ້າຍ 8: ການສຳຫຼວດໂດຍ GPS ເອກະສານຊ້ອນທ້າຍ 9: ການນຳໃຊ້Abney ເອກະສານຊ້ອນທ້າຍ 10: ການນຳໃຊ້ GPS ເອກະສານຊ້ອນທ້າຍ 11: ວິທີການສຳຫຼວດ

					ລະອຽດ ເອກະສານຊ້ອນທ້າຍ 12: ຕົວຢ່າງ MoA ທີ່ເຊັນກັບຊຸມຊົນ ເອກະສານຊ້ອນທ້າຍ 13: ສັນຍາກັບຄົວເຮືອນສຳລັບການຕິດຕັ້ງກົງເຕົ້ນ້ຳ
4. ການອອກແບບກໍ່ສ້າງ	- ວິໃຈຂໍ້ມູນ: - ຄວາມຕ້ອງການໃຊ້ນ້ຳໃນແຕ່ລະວັນຂອງບ້ານ ໃນ 10 ປີຕໍ່ໜ້າ - ຂະນາດຂອງອ່າງເກັບນ້ຳເປັນ m^3 - ແລວທາງເກຣດທຳມະຊາດ, ສະຖິດແລະໄຮໂດລິກທີ່ມີກຣາຟິກເພື່ອຊອກຫາແຮງດັນຂອງນ້ຳໃນທໍ່ນ້ຳ - ການກະກຽມການອອກແບບ ແລະ ແຕ້ມແບບເຕັກນິກ: ຫ້ອງການ, ອ່າງເກັບນ້ຳ, ກອັກນ້ຳ, ວາວອາກາດ, ວາວເປີດປິດຕະກອນ, … - ການວາງທໍ່ນ້ຳຈາກຈຸດຫ້ອງການຫາບ້ານ, ພາຍໃນບ້ານ, ພື້ນທີ່ອ່າງຮັບນ້ຳ, ຈຸດຫ້ອງານ, ອ່າງເກັບນ້ຳ, ຈຸດກ໊ອກນ້ຳ.	- ນັກວິຊາການນ້ຳສະອາດ - ຊ່ຽວຊານ WASH/ວິສະວະກອນກໍ່ສ້າງ	ສະເລ່ຍ 2 – 3 ວັນ/ບ້ານ	ການຮ່ວມມືກັບທີມງານນ້ຳສະອາດຂັ້ນແຂວງແລະເມືອງ	
5. ການຄິດໄລ່ມູນຄ່າ ແລະ ວາງແຜນ	- ກະກຽມໃບຄິດໄລ່ບໍລິມາດວຽກ (BoQ) ພ້ອມການຄິດໄລ່ມູນຄ່າກໍ່ສ້າງ ແລະ ການສະໜີປະມູນລາຄາ	- ວິຊາການນ້ຳສະອາດ - ຊ່ຽວຊານ WASH/ວິສະວະກອນກໍ່ສ້າງ	1 ວັນ/ບ້ານ	ການຮ່ວມມືກັບທີມງານນ້ຳສະອາດຂັ້ນແຂວງແລະເມືອງ	ເອກະສານຊ້ອນທ້າຍ 14: ຕົວຢ່າງໃບຄິດໄລ່ບໍລິມາດວຽກ (BoQ) ເອກະສານຊ້ອນທ້າຍ 15: ໃບປະເມີນລາຄາ ແລະມູນຄ່າ ເອກະສານຊ້ອນທ້າຍ 16 : MoA ສຳລັບການກໍ່ສ້າງລະບົບນ້ຳປະປາ-ໂຄງການ

					SCALING
6. ການລະດົມຊຸມຊົນ	- ການສຶກສາ ແລະ ເຮັດຂໍ້ຕົກລົງຮ່ວມມືກັບພາກສ່ວນລັດ ແລະ ຊຸມຊົນ (ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ, ຄາດວ່າຈະໄດ້ຮັບການສະໜັບສະໜູນ ຈາກລັດຖະບານ, ການປະກອບສ່ວນຂອງຊຸມຊົນ ແລະ ການສະໜັບສະໜູນໂຄງການ). - ການປຸກຈິດສຳນຶກດ້ານຄວາມປອດໄພຢູ່ໃຫ້ຊຸມຊົນ - ການແນະນຳກ່ຽວກັບການເກັບຮັກສາວັດສະດຸກໍ່ສ້າງ	- ອົງກອນຂອງລັດແລະພະແນກການກ່ຽວຂ້ອງ - ອົງການປົກຄອງບ້ານ - ຊ່ຽວຊານ WASH/ວິສະວະກອນກໍ່ສ້າງ - ພະນັກງານພັດທະນາຊຸມຊົນ	ຫຼັງຈາກການອອກແບບແລະຄິດໄລ່ມູນຄ່າແລະການປະກອບສ່ວນທີ່ເປັນໄປໄດ້ ຢ່າງນ້ອຍ 1 ອາທິດກັບ 1 ວັນໃນຂັ້ນຊຸມຊຸມ	ຂັ້ນບ້ານ	ເອກະສານຊ້ອນທ້າຍ 12: ຕົວຢ່າງ MoA ທີ່ເຊັນກັບຊຸມຊົນ
7. ຂັ້ນຕອນການປະມູນສຳລັບການສະໜອງວັດຖຸ	- ການເປີດປະມູນ - ການຄັດເລືອກ - ການເຮັດສັນຍາກັບຜູ້ສະໜອງ *ຂັ້ນຕອນລະອຽດຂຶ້ນກັບລະບຽບທາງການເງິນສະເພາະ ແລະ ຄູ່ມືທີ່ນຳໃຊ້ (ອາດນຳມາປັບໃຊ້ເປັນແຕ່ລະກໍລະນີ)*	- ທີມງານບໍລິຫານການເງິນ - ຜູ້ບໍລິຫານໂຄງການ - ຕົວແທນພາກລັດ(ຫົວໜ້າຫ້ອງການ)	2 ເດືອນ	ວຽກຫ້ອງການ	ເອກະສານຊ້ອນທ້າຍ 17: ຮ່າງໃບຄິດໄລ່ບໍລິມາດວຽກສຳລັບການຈັດຊື້ ເອກະສານຊ້ອນທ້າຍ 18: ເອກະສານເງື່ອນໄຂການປະມູນແລະແບບຟອມຕ່າງໆ ເອກະສານຊ້ອນທ້າຍ 19: ແຈ້ງການປະມູນລະດັບຊາດ ເອກະສານຊ້ອນທ້າຍ 20: ຕາຕະລາງວິໄຈການປະມູນ (ຄວາມສອດຄ່ອງ, ຄຸນສົມບັດ) ເອກະສານຊ້ອນທ້າຍ 21: ຕົວຢ່າງວາລະປະຊຸມເປີດຊອງປະມູນແລະບົດບັນທຶກ ເອກະສານຊ້ອນທ້າຍ 22: ຕົວຢ່າງສັນຍາ
8. ການກະກຽມ	- ການນຳສະເໜີແລະການກະກຽມຢູ່ຂັ້ນຊຸມຊົນ (ການບັນທຶກຂັ້ນບ້ານ, ສະຖານທີ່ເກັບຮັກສາ, ດ້ານຄວາມປອດໄພ, ນະໂຍບາຍ	- ຊ່ຽວຊານ WASH - ພະແນກການເຕົ້ານົກພາກລັດ (DHO, DAFO, DONROE, DGO)	ຫຼັງຈາກປະກອບເອກະສານທັງໝົດສຳເລັດ, ກ່ອນການຈັດສົ່ງເອກະສານ	ວຽກຫ້ອງການ ແລະ ຂັ້ນບ້ານ	ເອກະສານຊ້ອນທ້າຍ 23: ຜ້າສາກສຳລັບການຝຶກອົບຮົມການວາງແຜນຄວາມປອດໄພຂອງນ້ຳ ເອກະສານຊ້ອນທ້າຍ 24: ທຳຄວາມສະ

	ຂອງລັດຖະບານ, ການວາງແຜນການກໍ່ສ້າງ, ...) - ຝຶກອົບຮົມແຜນນ້ຳປອດໄພ, ສ້າງຕັ້ງຄະນະກຳມະການແຜນນ້ຳປອດໄພຂັ້ນບ້ານ, ການຄຸ້ມຄອງລະບຽບການ (ຂັ້ນແຜນນ້ຳປອດໄພ (A)	- ຄະນະກຳມະການ ແລະ ອົງການປົກຄອງບ້ານ	1 ອາທິດ /ບ້ານ		ອາດແລະສ້ອມແປງລະບົບນ້ຳປະປາ ເອກະສານຊ້ອນທ້າຍ 25: ແບບຟອມການປະເມີນຜົນສຳລັບການວາງແຜນຄວາມປອດໄພຂອງນ້ຳໃນຊຸມຊົນ ເອກະສານຊ້ອນທ້າຍ 26: ການຝຶກອົບຮົມທາງດ້ານການເງິນໃຫ້ຄະນະກຳມະການຄຸ້ມຄອງນ້ຳ ເອກະສານຊ້ອນທ້າຍ 27: ແບບຟອມການເງິນສຳລັບກອງທຶນນ້ຳ ເອກະສານຊ້ອນທ້າຍ 28: ການວາງແຜນຄວາມປອດໄພຂອງນ້ຳແຕ່ລະຂັ້ນຕອນ ເອກະສານຊ້ອນທ້າຍ 29, 30,31,32,33: ໂປສເຕີໃນການຝຶກອົບຮົມຊຸມຊົນ
9. ການສົ່ງຈັດສົ່ງອຸປະກອນ	- ກວດກາຄຸນນະພາບ ແລະ ຈຳນວນທີ່ສົ່ງ - ກວດກາສະຖານທີ່ເກັບຮັກສາ	- ຄະນະກຳມະການ ແລະ ອົງການປົກຄອງບ້ານ - ຊ່ຽວຊານ WASH - ອົງການປົກຄອງທ້ອງຖິ່ນ - ຜູ້ບໍລິຫານໂຄງການແລະ ທີມງານການເງິນ	1 ມື້ /ບ້ານ	ຂັ້ນບ້ານ	ເອກະສານຊ້ອນທ້າຍ 34 : ໃບສົ່ງມອບເອກະສານລະບົບນ້ຳປະປາ ເອກະສານຊ້ອນທ້າຍ 35 : ໃບຢັ້ງຢືນການສົ່ງມອບ ເອກະສານຊ້ອນທ້າຍ 36 : ໃບຢັ້ງຢືນການຈ່າຍເງິນປະກອບສ່ວນຂອງຊຸມຊົນ
10. ການດຳເນີນການແລະ ການຕິດຕາມການກໍ່ສ້າງ	- ກອງປະຊຸມນຳສະເໜີຮ່ວມກັບຜູ້ຄຸມງານກໍ່ສ້າງພາກສະນາມ (ພະນັກງານນ້ຳ ສະອາດ) : ແບບກໍ່ສ້າງ, ດ້ານຄວາມປອດໄພ, ໄລຍະເວລາການກໍ່ສ້າງ - ກອງປະຊຸມສົນທະນາກ່ຽວກັບການວາງແຜນການກໍ່ສ້າງຮ່ວມກັບສະມາຊິກຊຸມຊົນ ແລະນາຍບ້ານ - ການແນະນຳປະຈຳວັນກ່ຽວກັບການກໍ່ສ້າງ ແລະ ຄວາມປອດໄພ - ການກວດກາ ແລະ ຕິດຕາມກໍ່ສ້າງ	- ພະນັກງານນ້ຳສະອາດ, - ຊ່ຽວຊານ WASH - ຊຸມຊົນ - ອົງການປົກຄອງບ້ານແລະ ຄະນະກຳມະການ	ໂດຍສະເລ່ຍ 30 ວັນ / ບ້ານ	ບ້ານເປົ້າໝາຍ	ເອກະສານຊ້ອນທ້າຍ 37 : ຂໍ້ຕົກລົງຂອງຫ້ອງການສາທາເມືອງສຳລັບການຕິດຕາມກວດກາ

	- ການກວດກາປະຈຳອາທິດໂດຍພະນັກງານຫ້ອງການສາທາເມືອງແລະໂຄງການ - ບົດລາຍງານຄວາມຄືບໜ້າປະຈຳອາທິດໂດຍພະນັກງານນ້ຳສະອາດປະຈຳພາກສະນາມແລະນາຍບ້ານ				
11. ການກວດກາກໍ່ສ້າງ 50% ແລະ ການກວດກາ 100%/	- ການກວດກາກໍ່ສ້າງ 50% ພາຍຫຼັງສຳເລັດກໍ່ສ້າງຫ້ອງນ, ການວາງທໍ່ຈາກຫ້ອງນຫາອ້າງເກັບນ້ຳ - ກວດກາ 100% / ກວດກາຄັ້ງສຸດທ້າຍຫຼັງຈາກໜ້າວຽກທັງໝົດສຳເລັດ 100%	- ຕົວແທນຈາກອົງການປົກຄອງເມືອງ - ພະນັກງານຈາກສາທາ, ກະສິກຳ, ຊັບພະຍາກອນ, - ນາຍບ້ານ - ຕົວແທນຊຸມຊົນ - ຊ່ຽວຊານ WASH - ຜູ້ຈັດການໂຄງການ	1 ຫຼື 2 ວັນ /ບ້ານ /ຄັ້ງ	ຂັ້ນບ້ານ	ເອກະສານຊ້ອນທ້າຍ 38: ລາຍການກວດສອບການກໍ່ສ້າງລະບົບນ້ຳປະປາສຳເລັດ 50% ເອກະສານຊ້ອນທ້າຍ 39: ລາຍການກວດສອບການກໍ່ສ້າງລະບົບນ້ຳປະປາສຳເລັດ 100%
12. ການມອບ-ຮັບໃຫ້ກັບຊຸມຊົນ	- ກຽມມອບຮັບໂຄງການໃຫ້ອົງການປົກ ຄອງທ້ອງຖິ່ນ - ພິທີມອບຮັບ: ການຄຸ້ມຄອງ, ການນຳໃຊ້ແຜນນ້ຳປອດໄພ; ປູກຈິດສຳນຶກທາງດ້ານການຄຸ້ມຄອງນ້ຳແລະການນຳໃຊ້ນ້ຳແບບຍືນຍົງ - ເອກະສານທີ່ຈະມອບໃຫ້ຕົວແທນຊຸມຊົນ	- ຕົວແທນຈາກອົງການປົກຄອງເມືອງ - ພະນັກງານຈາກສາທາ, ກະສິກຳ, ຊັບພະຍາກອນ - ນາຍບ້ານ - ຕົວແທນຊຸມຊົນ - ຊ່ຽວຊານ WASH - ຜູ້ບໍລິຫານໂຄງການ - ບ້ານ (ທຸກບ້ານ)	1 ວັນ /ບ້ານ	ບ້ານເປົ້າໝາຍ	ເອກະສານຊ້ອນທ້າຍ 40: ມອບເອກະສານໃຫ້ຊຸມຊົນ
13. **ການຕິດຕາມແລະປະເມີນຜົນແຜນນ້ຳປອດໄພຂັ້ນບ້ານ**	- ຕິດຕາມກວດກາ ແລະ ປະເມີນຜົນການຄຸ້ມຄອງ ແລະ ນຳໃຊ້ນ້ຳ - ກວດກາຄຸນນະພາບນ້ຳ - ຕິດຕາມກວດກາ ແລະ ປະເມີນຜົນແຜນນ້ຳປອດໄພແບບວົງຈອນ (A)	- ຕົວແທນຈາກອົງການປົກຄອງເມືອງ - ພະນັກງານຈາກ ສາທາ, ກະສິກຳ. ຊັບພະຍາກອນ - ນາຍບ້ານ - ຕົວແທນຊຸມຊົນ - ຊ່ຽວຊານ WASH	6 ເດືອນ ຫາ 1 ປີພາຍຫຼັງການມອບຮັບ 1 ຫາ 2 ວັນ/ບ້ານ + ກວດສອບໃນຫ້ອງວິເຄາະ	ບ້ານເປົ້າໝາຍ	ເອກະສານຊ້ອນທ້າຍ 41: ແບບຟອມການປະເມີນຜົນສຳລັບການວາງແຜນຄວາມປອດໄພຂອງນ້ຳພາຍໃນຊຸມຊົນຫຼັງຈາກການນຳໃຊ້ 6 ເດືອນ

		- ຜູ້ບໍລິຫານໂຄງການ - ບ້ານ (ທຸກຄົນ)			

2.1. ການປະເມີນຜົນຄວາມເປັນໄປໄດ້ເບື້ອງຕົ້ນ (ຂັ້ນຕອນ 1)

ຈຸດປະສົງ

- ກຳນົດຄວາມດຶງດູດສົນໃຈຂອງຊຸມຊົນ, ຄວາມຕ້ອງການ, ຄວາມເຂັ້ມແຂງ ແລະ ຂໍ້ຈຳກັດຂອງລະບົບນ້ຳສະອາດໃນປັດຈຸບັນ ແລະ ອະນາຄົດ (ການນຳໃຊ້ນ້ຳຕົວຈິງ, ແຫຼ່ງນ້ຳ ທີ່ໃຊ້ໃນປັດຈຸບັນ, ລະດັບສິ່ງປົນເປື້ອນ, ຄຳໝັ້ນສັນຍາຕໍ່ກັບເງື່ອນໄຂທີ່ໂຄງການສະເໜີ, ຄວາມເຂົ້າໃຈຕໍ່ກັບຄວາມຮັບຜິດຊອບລວມທັງການປົກປັກຮັກສາແຫຼ່ງນ້ຳ, ສະພາບສຸຂະນາໄມໃນພາຍບ້ານ, ...)
- ວິເຄາະຄວາມເປັນໄປໄດ້ໃນການສ້າງລະບົບນ້ຳສະອາດ (ມີແຫຼ່ງນ້ຳບໍ່, ນ້ຳສະອາດສາມາດຮັບໃຊ້ປະຊາຊົນໄດ້ບໍ, ການກໍ່ສ້າງຄຸ້ມຄ່າບໍ່, ມີບັນຫາທີ່ອາດເກີດຂຶ້ນຕໍ່ຄວາມຍືນຍົງບໍ່).

ຈະເຮັດແນວໃດ

- ປຶກສາຫາລືກັບຫ້ອງການສາທາລະນະສຸກເມືອງ (ນ້ຳສະອາດ), ໃນການກຳນົດບ້ານເປົ້າໝາຍ
- ການກະກຽມ ແລະ ການເກັບກຳຂໍ້ມູນທີ່ມີຢູ່ແລ້ວເຊັ່ນ: ຈຳນວນປະຊາກອນ, ຜ່ານມາໄດ້ຮັບການສະໜັບສະໜູນ/ໂຄງການຢູ່ໃນບ້ານ, ແຜນທີ່, ...
- ການກະກຽມ ແລະ ແຈ້ງໃຫ້ບ້ານຮັບຮູ້ລ່ວງໜ້າກ່ຽວກັບຈຸດປະສົງ, ແຜນການ ແລະ ເນື້ອໃນຂອງການລົງຢ້ຽມຢາມບ້ານ ແລະ ການສຳຫຼວດ

ເຮັດວິທີໃດ

1. ***ປະຊຸມຮ່ວມກັບອົງການປົກຄອງບ້ານ ແລະ ພະນັກງານກຸ່ມບ້ານ***
    - ນຳສະເໜີຈຸດປະສົງຂອງການຢ້ຽມຢາມ ແລະ ການປຶກສາຫາລືກ່ຽວກັບ: ການນຳໃຊ້ນ້ຳຂອງຊຸມຊົນໃນປັດຈຸບັນ, ຄວາມຕ້ອງການ ແລະ ການຊັ່ງຊາໃຈເນື່ອງຈາກບໍ່ມີລະບົບນ້ຳສະອາດເພື່ອໃຫ້ແນ່ໃຈວ່າປະຊາຊົນເຈົ້າຕ້ອງການ (ຫຼື ບໍ່) ສຳລັບການກໍ່ສ້າງລະບົບນ້ຳສະອາດໃໝ່.
    - ປຶກສາຫາລືກ່ຽວກັບການຊ່ວຍເຫຼືອຂອງໂຄງການທີ່ຜ່ານມາ ແລະ ການຮ່ວມມືພາຍໃນບ້ານ, ການລະດົມຊຸມຊົນ ແລະ ພາລະໜ້າທີ່ບົດບາດອົງການປົກຄອງບ້ານ
    - ນຳສະເໜີຂັ້ນຕອນທີ່ຈະຕ້ອງໄດ້ປະຕິບັດໃນການກໍ່ສ້າງລະບົບນ້ຳສະອາດ, ເງື່ອນໄຂທີ່ຊຸມຊົນຕ້ອງປະກອບສ່ວນຖ້າຫາກມີການກໍ່ສ້າງ, ລວມທັງການປະກອບສ່ວນເປັນເງິນສົດ ແລະ /ຫຼື ໃນຮູບແບບອື່ນໆ, ການບຳລຸງຮັກສາ, ການປົກປັກຮັກສາແຫຼ່ງນ້ຳ, ...
2. ***ຖ້າຫາກເປັນໄປໄດ້, ແມ່ນພະຍາຍາມສົນທະນາກັບບາງຄົວເຮືອນ*** ພາຍຫຼັງສຳເລັດກອງປະຊຸມກັບອົງການປົກຄອງ ເພື່ອກວດສອບຂໍ້ມູນຄືນ, ເພື່ອສຶກສາຄວາມຕ້ອງການຕົວຈິງ ເພື່ອປະເມີນຄວາມສົນໃຈ ແລະ ຄວາມກະຕືລືລົ້ນຕົວຈິງຂອງຊຸມຊົນ
3. ***ລົງສຳຫຼວດພື້ນທີ່ໂດຍລວມເຂດບ້ານ*** ເພື່ອສຶກສາແຫຼ່ງນ້ຳອື່ນທີ່ມີຄວາມເປັນໄປໄດ້ທີ່ສາມາດນຳໃຊ້ໄດ້ ເພື່ອການສະໜອງນ້ຳໃຫ້ກັບບ້ານຕື່ມ. ເມື່ອກຳນົດໄດ້ແລ້ວ, ໃຫ້ໝັ້ນໃຈວ່າແຫ່ງນ້ຳມີຄວາມປອດໄພ, ສະພາບແວດລ້ອມຂອງແຫຼ່ງນ້ຳ ແລະ ກຳນົດບັນຫາ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນເຊິ່ງຕ້ອງໄດ້ແກ້ໄຂກ່ອນດຳເນີນການສຳຫຼວດລາຍລະອຽດ

ຂໍ້ແນະນຳ

ການປະເມີນຄວາມເປັນໄປໄດ້ຂອງກິດຈະກຳໃດໜຶ່ງແມ່ນມີ **ຄວາມຈຳເປັນ** ແລະ ຄວາມສຳຄັນ ເພື່ອຮັບປະກັນຄວາມສຳເລັດແລະ ຄວາມຍືນຍົງ. ແມ່ນຕ້ອງແນ່ໃຈວ່າມີເວລາພຽງພໍສຳລັບເຮັດ! ***ຢ່າງໜ້ອຍໃຊ້ເວລາ 1 ວັນຕໍ່ບ້ານແມ່ນມີຄວາມຈຳເປັນ***. ຕ້ອງໝັ້ນໃຈ ວ່າຈະສາມາດເກັບກຳ ແລະ ກວດກາຂໍ້ມູນໄດ້ (ການສຳພາດອາດເຮັດເປັນທາງການໄດ້ແຕ່ກໍ່ຍັງບໍ່ເປັນທາງການເພື່ອໃຫ້ເຂົ້າໃຈ ສະພາບການຂອງບ້ານໄດ້ຢ່າງເລິກເຊິ່ງ). ຢ່າເບິ່ງພຽງແຕ່ດ້ານວິຊາການເທົ່ານັ້ນ, ຄວາມສົນໃຈ ແລະ ຄວາມມຸ່ງໝັ້ນຂອງຊຸມຊົນແມ່ນ ມີຄວາມສຳຄັນຫຼາຍຄືກັນ.

ເຊື່ອມໂຍງກັບແບບຟອມແລະເອກະສານທີ່ເປັນປະໂຫຍດ

ເອກະສານຊ້ອນທ້າຍ 1: ເງື່ອນໄຂການຄັດເລືອກບ້ານ
ເອກະສານຊ້ອນທ້າຍ 2: ແບບຟອມການປະເມີນຄວາມສ່ຽງດ້ານຄວາມປອດໄພຂອງເດັກສຳລັບການກໍ່ສ້າງລະບົບນ້ຳສະອາດ
ເອກະສານຊ້ອນທ້າຍ 3: ແບບຟອມປະເມີນຄວາມສ່ຽງດ້ານສິ່ງແວດລ້ອມຕໍ່ກັບການກໍ່ສ້າງລະບົບນ້ຳສະອາດ

2.2. ການອະນຸມັດແບບກໍ່ສ້າງທີ່ໄດ້ມາດຕະຖານ (ຂັ້ນຕອນ 2)

ຈຸດປະສົງ

- ລະບົບການສະໜອງນ້ຳສະອາດປະເພດຕ່າງໃຫ້ມີຄວາມເອກະພາບກັນແບບມາດຕະຖານທີ່ໄດ້ຮັບການອະນຸມັດຈາກຂະ ແໜ່ງນ້ຳສະອາດ ແລະ ຄູ່ຮ່ວມງານໂຄງການ - ຂັ້ນຕອນນີ້ແມ່ນແນະນຳໃຫ້ໃຊ້ຖ້າໂຄງການຫາກຖືກຈັດຕັ້ງປະຕິບັດຢູ່ໃນ ຫຼາຍແຂວງ. ຖ້າບໍ່ດັ່ງນັ້ນ, ມັນອາດໃຊ້ໄດ້ໃນແຂວງໃດນຶ່ງເທົ່ານັ້ນ.

ຈະເຮັດແນວໃດ

- ຈັດກອງປະຊຸມຮ່ວມກັບທີມງານນ້ຳສະອາດ ແລະ ຄູ່ຮ່ວມງານຂອງໂຄງການ
- ນຳສະເໜີຮູບແບບລະບົບນ້ຳສະອາດທີ່ນຳໃຊ້ໃນແຕ່ລະແຂວງ ແລະ ມາດຕະຖານທີ່ໂຄງການຈະນຳມາໃຊ້

ເຮັດວິທີໃດ

1. ***ປະຊຸມຮ່ວມກັບທີມງານນ້ຳສະອາດ ແລະ ອົງການປົກຄອງທ້ອງຖິ່ນ*** (ຈາກບັນດາແຂວງຕ່າງໆຖ້າຫາກໂຄງການຫາກຈັດຕັ້ງ ປະຕິບັດໃນຫຼາຍໆແຂວງ) :
    - ໃຫ້ຕົວແທນແຕ່ລະແຂວງນຳສະເໜີຮູບແບບລະບົບນ້ຳສະອາດຂອງຕົນເອງທີ່ເຄີຍນຳໃຊ້ໃນຜ່ານມາ.
    - ອຳນວຍຄວາມສະດວກການສົນທະນາລະຫວ່າງແຂວງຕ່າງໆກ່ຽວກັບຈຸດດີ ແລະ ຈຸດອ່ອນຂອງແຕ່ລະຮູບແບບ
    - ແນະນຳການປັບປຸງບາງຢ່າງເຊັ່ນ: ການປັບປຸງລະບົບຫົວງານ (ເພີ່ມຫ້ອງກ່ອງນ້ຳ, ເບຕົ້ງເສີມດ້ານຂ້າງເພື່ອປ້ອງ ກັນນ້ຳໜອງໃນກໍລະນີມີຝົນຕົກໜັກ, ຊຸດວັດສະດຸກັ້ນຕ່ອງນ້ຳ), ການນຳໃຊ້ວາວອາກາດ, ວາວທໍ່ສົ່ງຕະກອນ, ການປັບປຸງລະດັບອ່າງເກັບນ້ຳ (ການກໍ່ສ້າງຫ້ອງກ່ອງນ້ຳຢູ່ເທິງອ່າງເກັບນ້ຳ, ປະຕູປິດວາວ), ການຄັດເລືອກຄຸນ ນະພາບທໍ່ PE, ທໍ່ GI
    - ອຳນວຍຄວາມສະດວກໃນການຕົກລົງເຫັນດີຮ່ວມກັນກ່ຽວກັບການດັດແກ້ ແລະ ການເພີ່ມເຕີມເພື່ອໃຫ້ໄດ້ ແບບມາດຕະຖານເພື່ອນຳໃຊ້

2. ***ການອອກແບບມາດຕະຖານ***

3. ***ແບ່ງປັນແບບມາດຕະຖານທີ່ໄດ້ອອກແບບໃຫ້ກັບຄູ່ຮ່ວມງານພາກລັດ***

ແບບກໍ່ສ້າງມາດຕະຖານຖືກແບ່ງປັນໃຫ້ກັບຂະແໜ່ງນ້ຳສະອາດໃນແຕ່ລະແຂວງ ແລະ ແຕ່ລະເມືອງທີ່ເຂົ້າຮ່ວມໂຄງການ

ການເຊື່ອມໂຍງກັບແບບຟອມ ແລະ ເອກະສານທີ່ເປັນປະໂຫຍດ

ເອກະສານຊ້ອນທ້າຍ 4 : ແຜນວາດລະບົບນ້ຳສະອາ

2.3. ການສຳຫຼວດດ້ານວິຊາການ ແລະ ການຈັດຕັ້ງທາງສັງຄົມໃນຂັ້ນຊຸມຊົນ (ຂັ້ນຕອນ 3)

ຈຸດປະສົງ

- **ການເກັບກຳຂໍ້ມູນ**: ເກັບກຳຂໍ້ມູນດ້ານວິຊາການເພື່ອນຳໃຊ້ໃນການອອກແບບ; ຂໍ້ມູນທົ່ວໄປກ່ຽວກັບບ້ານ
- **ປະເມີນການຈັດຕັ້ງທາງສັງຄົມ** ຂອງບ້ານ, ການນຳພາ, ການນຳໃຊ້ໂດຍຊາວບ້ານ, ...
- **ປະເມີນຄວາມສ່ຽງ**: ຄວາມປອດໄພ, ການນຳໃຊ້ນ້ຳ, ການປົນເປື້ອນ,
- **ກຳນົດຄວາມຕ້ອງການຊ່ວຍເຫຼືອ** ຂອງຊຸມຊົນ: ການຊ່ວຍເຫຼືອທາງດ້ານວິຊາການ (ປະເພດລະບົບນ້ຳສະອາດທີ່ຕ້ອງການ...) ແລະ ການຊ່ວຍເຫຼືອທາງດ້ານການຈັດຕັ້ງທາງສັງຄົມໃຫ້ກັບຊຸມຊົນ

ຈະເຮັດແນວໃດ

1. ***ການກະກຽມໃນການສຳຫຼວດ***
   - ປະສານງານ ປະຊຸມຮ່ວມກັບຕົວແທນຫ້ອງການສາທາລະນະສຸກເມືອງ ແລະ ບັນດາພະແນກການທີ່ກ່ຽວຂ້ອງທັງໝົດ: ນຳສະເໜີຈຸດປະສົງ, ກຳນົດເວລາການລົງຢ້ຽມຢາມ, ການກຳນົດຈຸດປະສານງານພາຍໃນແຕ່ລະພະແນກການເພື່ອໃຫ້ມີສ່ວນຮ່ວມໃນທຸກຂະບວນການ
   - ແຈ້ງການໃຫ້ບ້ານຮັບຮູ້: ຈຸດປະສົງ, ລາຍລະອຽດຂອງຜູ້ເຂົ້າຮ່ວມທີ່ຄາດຄະເນໄວ້, ວັນທີ ແລະ ເວລາທີ່ກຳນົດໄວ້ສຳລັບການສຳຫຼວດ, ຄວາມຕ້ອງການທາງດ້ານການຈັດຫາ
   - ເກັບກຳຂໍ້ມູນເບື້ອງຕົ້ນ: ແບບຟອມເກັບກຳຂໍ້ມູນພື້ນຖານຂອງບ້ານ, ແບບຟອມການສຳຫຼວດພື້ນທີ່ດິນ, ສ້າງແຜນທີ່ເຂດແດນຂອງບ້ານ ແລະ ແຜນທີ່ແຫລ່ງນ້ຳຢູ່ໃກ້ກັບບ້ານໂດຍໃຊ້ໂປຼແກຣມ Google Earth
   - ການກະກຽມການສົນທະນາຊຸມຊົນ (ໃຊ້ບົດນຳສະເໜີຜ່ານໂອເລັກໂທນິກ ຫຼື ໃຊ້ເຈ້ຍແຜ່ນໃຫຍ່ A0): ຈຸດປະສົງຂອງໂຄງການ, ຕົວຢ່າງຂອງລະບົບນ້ຳສະອາດ, ພາລະບົດບາດ ແລະ ຄວາມຮັບຜິດຊອບ, ຕົວຢ່າງຂອງ“ ບົດເລື່ອງຄວາມສຳເລັດ”, ແບບຮ່າງບົດບັນທຶກການປຶກສາຫາລືຂັ້ນບ້ານ ແລະແບບຮ່າງບົດບັນທຶກການເຫັນດີ.

2. ***ການເກັບກຳຂໍ້ມູນ***
   - ບໍ່ແຫລ່ງນ້ຳ
   - ຂໍ້ມູນພື້ນທີ່ດິນ: ຄວາມສູງຊັນ, ຄວາມຍາວຂອງແລວທ່ຳ ແລະ ຈຸດຜິກັດ
   - ເກັບກຳຂໍ້ມູນທົ່ວໄປຂອງບ້ານ: ປະຊາກອນ

ເບິ່ງລາຍລະອຽດໃນເອກະສານຊ້ອນທ້າຍ 11

3. ***ການສົນທະນາຊຸມຊົນ***
   - ການສົນທະນາກ່ຽວກັບພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ
   - ການສົນທະນາກ່ຽວກັບລະບົບນ້ຳສະອາດທີ່ຈະນຳມາແນະນຳ, ຜົນກະທົບທາງດ້ານການນຳໃຊ້ທີ່ດິນ ແລະແຫລ່ງນ້ຳ, ...

ຄຳແນະນຳ: ບາດກ້າວນີ້ແມ່ນທີ່ສຳຄັນຫຼາຍ! ຜູ້ອຳນວຍຄວາມສະດວກຊຸມຊົນຕ້ອງໄດ້ເຂົ້າຮ່ວມ

ພາກສ່ວນເຮັດຫຍັງ

ຫ້ອງການປົກຄອງເມືອງ	ຊີ້ນຳລວມ ອຳນວຍຄວາມສະດວກໃນການແກ້ໄຂບັນຫາກັບຊຸມຊົນ (ບັນຫາທີ່ດິນ, ເຂດແດນຂອງບ້ານ, ບັນຫາທີ່ອາດເກີດຂຶ້ນລະຫວ່າງບ້ານກັບບ້ານສຳລັບການນຳໃຊ້ແຫຼ່ງນ້ຳ...) ການປະສານງານກັບບັນດາຫ້ອງການປົກຄອງເມືອງແລະນະໂຍບາຍຕ່າງໆ
ນ້ຳສະອາດຂັ້ນແຂວງ/ເມືອງກັບໂຄງການຊ່ວຍເຫຼືອ (ວິຊາການ)	ການສຳຫຼວດດ້ານວິຊາການ ການອອກແບບ ການວາງແຜນ ແລະ ການຂຶ້ນງົບປະມານການກໍ່ສ້າງ ການລົງຕິດຕາມ ແລະ ການປະເມີນຜົນ
ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ	ການຈັດສັນທີ່ດິນໃຫ້ແກ່ບ້ານ ເຜີຍແຜ່ນະໂຍບາຍນຳໃຊ້ທີ່ດິນ ແລະ ສົ່ງເສີມການຄຸ້ມຄອງທີ່ດິນໃຫ້ແກ່ບ້ານ (ບໍ່ໃຫ້ນຳໃຊ້ທີ່ດິນທີ່ຢູ່ໃກ້ແຫຼ່ງນ້ຳ, ບໍ່ໃຫ້ນຳໃຊ້ສານເຄມີໃກ້ກັບແຫຼ່ງນ້ຳ)
ຫ້ອງການຊັບພະກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ	ລົງຕິດຕາມສິ່ງແວດລ້ອມ ແລະ ການແກ້ໄຂຜົນກະທົບຕໍ່ສິ່ງແວດລ້ອມ (ການຜະລິດກະສິກຳ, ການນຳໃຊ້ສານເຄມີ ແລະ ຢາປາບສັດຕູພືດ, ການລ້ຽງສັດ)
ຫ້ອງການສາທາເມືອງ	ເປັນຜູ້ຮັບຜິດຊອບຫຼັກໃນການສຳຫຼວດ, ໂດຍສະເພາະ: ການປະສານງານກັບທຸກຂະແໜ່ງການທີ່ກ່ຽວຂ້ອງ, ບ້ານ ແລະ ພາກສ່ວນກ່ຽວຂ້ອງ
ໂຄງການ	ສະໜັບສະໜູນທາງດ້ານວິຊາການສຳລັບການສຳຫຼວດ ແລະ ການອຳນວຍຄວາມສະດວກຂັ້ນຊຸມຊົນ; ຄວາມຊຳນານດ້ານວິຊາການ ໃຫ້ການສະໜັບສະໜູນດ້ານງົບປະມານ

ວັດສະດຸທີ່ຕ້ອງການແລະງົບປະມານທີ່ຂຶ້ນໄວ້

- ແມັດວັດແທກເຫຼັກຍາວ 5m
- ກ໋ຳເທັບສາຍໃຍແກ້ວຍາວ 50 m
- ເຄື່ອງມືອັບນີ 1 ອັນ
- ເຄື່ອງມືວັດອຸນຫະພູມ 1 ອັນ
- ຈັກຄິດໄລ່ 1ອັນ
- ໂຟມເດີແຂງສຳລັບຂຽນ
- ບັນທັດ, ປົກ, ສໍ
- ແກ້ວເພື່ອເກັບຕົວຢ່າງນ້ຳມາກວດ
- LCD ເພື່ອນຳສະເໜີແບບລະບົບນ້ຳສະອາດທີ່ຈະກໍ່ສ້າງ
-
- ເຂັມທິດ
- ອຸປະກອນ GPS ເພື່ອໝາຍຈຸດພິກັດສຳຄັນ
- ຖັງ (12.5 L) ເພື່ອວັດແທກບໍລິມາດນ້ຳໃນສາຍນ້ຳ
- ໂມງຈັບເວລາ
- ມີດ
- ປົດນຳສະເໜີແບບກໍ່ສ້າງໃຫ້ກັບຊຸມຊົນ

ລາຍລະອຽດ	ຫົວໜ່ວຍ	ລາຄາຫົວໜ່ວຍ (ກ)	ຈຳນວນເງິນ (ກ)

ອັດຕາກິນ	8ຄົນ x2ວັນ	100,000	1,600,000
ນ້ຳມັນລິດ	2 ຄັນ	500,000	1,000,000
ອຸປະກອນຮັບໃຊ້	1 ຊຸດ	300,000	300,000
ສະເປຣ	3 ກ່ອງ	30,000	90,000
ຖານ GPS	2 Pair	15,000	30,000
ລວມ			3,020,000

ຂໍ້ແນະນຳ

- **ການສຳຫຼວດແມ່ນຂັ້ນຕອນສຳຄັນຫຼາຍ ແລະ ຄວນປະກອບດ້ວຍ:**
  - ການເຂົ້າເຖິງແຫຼ່ງນ້ຳ, ປະລິມານແຫຼ່ງນ້ຳສາມາດນຳໃຊ້ໄດ້ຈັກເດືອນ.
  - ການນຳໃຊ້ນ້ຳຕົວຈິງ ແລະ ໃນອະນາຄົດ (ໂດຍສະເພາະການຜະລິດກະສິກຳ, ການເຮັດສວນຄົວ…)
  - ເຂດແດ່ນຂອງແຫຼ່ງນ້ຳນເປັນເຂດແດນລະຫວ່າງບ້ານບໍ? ໃຊ້ແຫຼ່ງນ້ຳຮ່ວມກັບບ້ານອື່ນ
  - ຊາວບ້ານພ້ອມທີ່ຈະປະກອບສ່ວນໃນການກໍ່ສ້າງ ບໍ່ເປັນວັດຖຸ ແລະ/ຫຼື ເງິນສົດ

ການໃຊ້ເວລາດົນໃນການສຳຫຼວດ...ອາດປະຢັດເວລາໃນພາຍຫຼັງ

- **ການມີສ່ວນຮ່ວມຈະຮັດໃຫ້ຄວາມເປັນເຈົ້າການຂອງບ້ານເພີ່ມສູງຂຶ້ນ:** ພາກສ່ວນທີ່ກ່ຽວຂ້ອງຈະຫ້າວຫັນ ແລະ ມີສ່ວນຮ່ວມຫຼາຍຂຶ້ນໃນເວລາການສຳຫຼວດ (ວິຊາການ, ຊາວບ້ານ), ເມື່ອຄວາມເປັນເຈົ້າການຂອງປະຊາຊົນຫຼາຍຂຶ້ນ, ການນຳໃຊ້ລະບົບນ້ຳສະອາດກໍ່ຈະມີຄວາມຍືນຍົງ.
- **ການແບ່ງຄວາມຮັບຜິດຊອບ** ລະຫວ່າງຂະແໜ່ງການຂອງລັດ. ບ້ານ ແລະ ທີມງານຂອງໂຄງການ

ເຊື່ອມໂຍງໄປຫາແບບຟອມ ແລະ ເອກະສານທີ່ເປັນປະໂຫຍດ:

ເອກະສານຊ້ອນທ້າຍ 6: ແຜນເວລາການກໍ່ສ້າງລະບົບນ້ຳ
ເອກະສານຊ້ອນທ້າຍ 7: ແບບຟອມການສຳຫຼວດ,ເຄື່ອງມື Abney
ເອກະສານຊ້ອນທ້າຍ 8: ແບບຟອມການສຳຫຼວດດ້ວຍ GPS
ເອກະສານຊ້ອນທ້າຍ 9: ການນຳໃຊ້ເຄື່ອງມື Abney
ເອກະສານຊ້ອນທ້າຍ 10: ການນຳໃຊ້ GPS
ເອກະສານຊ້ອນທ້າຍ 11: ວິທີການສຳຫຼວດລະອຽດ
ເອກະສານຊ້ອນທ້າຍ 12: ຕົວຢ່າງ MoA ທີ່ເຊັນຮ່ວມກັບຊຸມຊົນ
ເອກະສານຊ້ອນທ້າຍ 13: ສັນຍາກັບຄົວເຮືອນໃນການຕິດຕັ້ງກົງເຕີ້ນ້ຳ

2.4. ການອອກແບບກໍ່ສ້າງ (ຂັ້ນຕອນ 4)

ນິຍາມ: ເພື່ອອອກແບບກໍ່ສ້າງລະບົບນ້ຳສະອາດຂອງບ້ານໃຫ້ມີຄວາມສອດຄ່ອງ, ຍືນຍົງ ແລະ ເໝາະສົມກັບລັກສະນະທາງດ້ານວິຊາການ ແລະ ສະພາບແວດລ້ອມຂອງແຫຼ່ງນ້ຳທີ່ມີຢູ່ໃນພື້ນທີ່ ແລະ ຄວາມຕ້ອງການໃນການນຳໃຊ້ນ້ຳທີ່ພຽງພໍ, ສະດວກ ແລະ ປະຊາຊົນນຳໃຊ້ແບບຍືນຍົງໃນ 10 ປີຂ້າງໜ້າ.

ຈຸດປະສົງ

- ການປະເມີນຄວາມຕ້ອງການນ້ຳຂອງກຸ່ມຄົນ ຫຼື ພາຍໃນບ້ານໂດຍອີງໃສ່ຄວາມສາມາດໃນການເກັບຮັກສານ້ຳຂອງແຫຼ່ງນ້ຳທີ່ໄດ້ກຳນົດໄວ້
- ການຄິດໄລ່ແຮງດັນນ້ຳໃນທໍ່ນ້ຳເພື່ອໃຫ້ສາມາດສົ່ງນ້ຳໄປຫາພື້ນທີ່ໄດ້
- ການກຳນົດປະເພດຂອງລະບົບນ້ຳສະອາດທີ່ຕ້ອງການເຊັ່ນ: ລະບົບນ້ຳລິນ, ລະບົບນ້ຳບາດານ, ລະບົບປັ໊ມສູບນ້ຳຈາກທີ່ຕ່ຳຫາທີ່ສູງກວ່າ.
- ການອະທິບາຍລັກສະນະທາງວິຊາການຂອງລະບົບນ້ຳສະອາດໃນແຕ່ລະຈຸດ (ແຫຼ່ງນ້ຳ, ຫ້ອງການ, ອ່າງເກັບນ້ຳ ...) ໂດຍຄຳນຶງເຖິງຄວາມປອດໄພ ແລະ ຄວາມເປັນໄປໄດ້ຂອງການກໍ່ສ້າງໃນລະດັບຊຸມຊົນ.
- ແຕ້ມແຜນວາດລະບົບນ້ຳສະອາດເພື່ອກຳນົດປະລິມານຄວາມຕ້ອງການທັງໝົດສຳລັບການກໍ່ສ້າງ (ວັດສະດຸທີ່ຕ້ອງການ, ແຮງງານ, ຄວາມຈຳເປັນໃນການວາງແຜນຂອງແຜນນ້ຳປອດໄພ, ...)

ຈະເຮັດແນວໃດ

1. ການກະກຽມແບບກໍ່ສ້າງ

<u>ຈັດຂໍ້ມູນທີ່ເກັບກຳມາໃນເວລາສຳຫຼວດ:</u> ຂໍ້ມູນລວມຂອງບ້ານ, ປະລິມານແຫຼ່ງນ້ຳ, ຂໍ້ມູນທີ່ດິນ (ຄວາມສູງ ແລະ ຄວາມຍາວຂອງທໍ່ນ້ຳທີ່ຕ້ອງການ), ເຂດແດນບ້ານເພື່ອຄາດຄະເນທໍ່ສົ່ງ ແລະ ທໍ່ແຈກນ້ຳພາຍໃນບ້ານທີ່ຕ້ອງການ, ທີ່ຕັ້ງຂອງກອັກນ້ຳທີ່ຈະຕິດຕັ້ງ, ຈຳນວນຄົວເຮືອນທີ່ຕ້ອງການຕິດຕັ້ງກົ໊ງເຕົ້ານ້ຳ.

2. ການອອກແບບ

ຕ້ອງມີທັກສະສູງ

- ວິທີການຄິດໄລ່ຄວາມດັນຂອງນ້ຳໃນທໍ່, ປະສົບການຜ່ານມາໃນການອອກແບບ ແລະ ການກໍ່ສ້າງລະບົບນ້ຳສະອາດ
- ທັກສະດ້ານການໃຊ້ຄອມພິວເຕີ: Word, Excel, AutoCAD ຫຼື ຊັອບແວທີ່ເທົ່າທຽມກັນ, Google Earth
- ການນຳໃຊ້ GPS

ວັດສະດຸທີ່ຕ້ອງການ

- ຊັອບແວທີ່ແນະນຳໃຫ້ໃຊ້: Microsoft Word, Excel ຫຼືເທົ່າທຽມກັນ; AutoCAD ຫຼືເທົ່າທຽມກັນ, Google Earth
- ຄອມພິວເຕີທີ່ມີໂປເຊດເຊີທີ່ມີປະສິດທິພາບ (ທຽບເທົ່າກັບ Intel5 ຫຼື Intel7 ຕ່ຳສຸດເນື່ອງຈາກການຄຳນວນ) ແລະ ເຄື່ອງພິມ

ຂໍ້ແນະນຳສຳລັບການອອກແບບທີ່ດີ

<u>ສຳລັບຫ້ວງານ</u>

- ກວດສອບໃຫ້ແນ່ໃຈວ່າລະບົບຫ້ວງານ**ແທດເໝາະກັບຫ້ວຍນ້ຳ**
- ກວດສອບໃຫ້ແນ່ໃຈວ່າຫ້ວງານມີຄວາມແຂງແຮງ ແລະ ທົນທານຕໍ່ກັບນ້ຳຖ່ວງໃນລະນີຝົນຕົກໜັກ
- ລະບົບຫ້ວງານຕ້ອງມີແນວກັ້ນສູງ ຫຼື ຝາປົກເພື່ອປ້ອງກັນນ້ຳຖ່ວງ
- ລະບົບຫ້ວງານຕ້ອງຈະຕ້ອງມີລະບົບກັ່ນຕອງນ້ຳທີ່ເໝາະສົມ

<u>ສຳລັບອ່າງເກັບນ້ຳ</u>

- ກວດສອບໃຫ້ແນ່ໃຈວ່າອ່າງນ້ຳເໝາະສົມກັບປະລິມານນ້ຳທີ່ສາມາດບັນຈຸໄດ້ໃນມື້ດຽວ (ຂະໜາດຂອງອ່າງເກັບບໍ່ຄວນໃຫຍ່ ຫຼື ນ້ອຍຈົນເກີນໄປ).

<u>ທໍ່ນ້ຳ</u>

- ການຄັດເລືອກທໍ່ນ້ຳທີ່ສາມາດຮອງຮັບຄວາມດັນຂອງນ້ຳ ຫຼື ເລືອກໃຊ້ທໍ່ນ້ຳທີ່ສາມາດຮັບແຮງດັນໄດ້ 100 ແມັດ (PN10).
- ການກຳນົດຈຳນວນທໍ່ນ້ຳເຫຼັກຂ້າມແມ່ນ້ຳ, ສາຍການ, ວາວອາກາດ, ວາວຕະກອນ ແລະ ອ່າງເພື່ອຫຼຸດຄວາມດັນ
- ກວດສອບໃຫ້ແນ່ໃຈວ່າທໍ່ສົ່ງນ້ຳທີ່ວາງໃນພື້ນທີ່ຂອງບ້ານເໝາະສົມກັບພື້ນທີ່ຂອງບ້ານ, ເຊັ່ນ: ເປັນກຸ່ມ, ມີຄວາມສູງແຕກຕ່າງກັນ, ຈຳນວນທໍ່ຈ່າຍນ້ຳອອກຈາກອ່າງ.

ການຫຼີກລ້ຽງຂໍ້ຜິດພາດ

- ການອອກແບບຫ້ວງານທີ່ບໍ່ຮັບປະກັນຄວາມແຂງແຮງ, ບໍ່ມີເຢຕ້ຽງເຫຼັກເສີມ ແລະ ບໍ່ມີລະບົບກັ່ນຕອງນ້ຳ
- ຂະໜາດຂອງອ່າງເກັບນ້ຳໃຫຍ່ ຫຼື ນ້ອຍເກີນໄປ
- ການຄັດເລືອກທໍ່ນ້ຳທີ່ບໍ່ສາມາດຮັບຄວາມດັນນ້ຳສູງໄດ້ ແລະ ເປັນທໍ່ນ້ຳທີ່ມີຄຸນນະພາບຕ່ຳ
- ບໍ່ມີທໍ່ເຫຼັກຂ້າມຫ້ວຍນ້ຳ, ສາຍການຂ້າມແມ່ນ້ຳ, ວາວອາກາດ, ວາວຕະກອນ ແລະ ອ່າງປ່ອຍ (ນີ້ກໍ່ເພື່ອຕ້ອງການຫຼຸດຜ່ອນຄວາມດັນນ້ຳໃນບ່ອນທີ່ມັນຈຳເປັນ)
- ບໍ່ມີຜັງວາງທໍ່ນ້ຳຢູ່ໃນບ້ານ, ບໍ່ໄດ້ກຳນົດຈຳນວນຂອງຂໍ້ຕໍ່, ຈຳນວນຂອງຂໍ້ຕໍ່ບໍ່ພຽງພໍ ຫຼື ແຜນສະເໜີຂໍ້ອຸປະກອນບໍ່ຄົບຖ້ວນຕາມທີ່ໄດ້ກຳນົດໄວ້.

- ມີງົບປະມານຈຳກັດຕອບສະໜອງຕາມຄວາມຕ້ອງການ, ໂດຍບໍ່ໄດ້ຄຳນຶງເຖິງອານາຄົດຄວາມຕ້ອງການ ແລະ ການນຳໃຊ້ນ້ຳ (ແນະນຳໃຫ້ມີການຄາດຄະເນຢ່າງໜ້ອຍ 10 ປີ)

ຕົວຢ່າງທີ່ດີ

ຕ້ອງຈຳໄວ້

ລະບົບຫ້ວງານທີ່ດີຕ້ອງມີ:

- ສາມຂາທີ່ດີ (ສະປ່ຽງເວ)
- ໂຄງສ້າງທີ່ດີ
- ຫ້ອງກັ່ນຕອງທີ່ດີ
- ອ່າງເກັບນ້ຳຂະນາດໃຫຍ່

ລະບົບຫ້ວງານທີ່ດີຕ້ອງມີ:

- ຝາປິກທີ່ດີທັງສອງຂ້າງເພື່ອປ້ອງກັນດິນເຈື່ອນແລະນ້ຳບ່ອງເວລາຝົນຕົກໜັກ
- ສູງກວ່າລະດັບຝາຍກັ້ນນ້ຳປະມານ 40cm
- ຝາປິດປະຕູນ້ຳສູງກວ່າລະດັບຝາຍປະມານ 40cm ແລະ ສາມາດປ້ອງກັນນ້ຳບ່ອງໄດ້

ອ່າງເກັບນ້ຳທີ່ດີຕ້ອງມີ:

- ພື້ນເບຕົ້ງເສີມເຫຼັກສອງຊັ້ນ ແລະ ໜາ 20cm
- ຝາອ່າງເກັບເປັນເບຕົ້ງເສີມເຫຼັກສອງຊັ້ນ ແລະ ໜາ 20cm.

ແລະ ຕົວຢ່າງທີ່ບໍ່ດີ...ບໍ່ຄວນເອົາແບບຢ່າງ

ລະບົບຫ້ອງນ້ຳບໍ່ດີຈະມີ :

- ສະປີງເວທີ່ບໍ່ສາມາດຕັນນ້ຳໄດ້
- ໂຄງສ້າງບໍ່ດີ
- ບໍ່ມີຫ້ອງກັ່ນຕອງນ້ຳ
- ອ່າງເກັບນ້ຳນ້ອຍ
- ບໍ່ມີຫ້ອງປົດວາວປະຕູນ້ຳ
- ປາກທໍ່ແບບປະຖົມປະຖານທີ່ສຸດ

ລະບົບຫ້ອງນ້ຳບໍ່ດີຈະ :

- ບໍ່ມີຝາປົກສອງຂ້າງເພື່ອປ້ອງກັນດິນເຈື່ອນ ແລະນ້ຳນ່ອງເວລາຝົນຕົກໜັກ
- ປາກທໍ່ເປ່ເຜຫຼືແຕກພັງຍ້ອນນ້ຳນ່ອງ

ອ່າງເກັບນ້ຳບໍ່ດີມີ:

- ທີ່ຕັ້ງບໍ່ເໝາະສົມ ແລະ ສ່ຽງຕໍ່ອຸບັດເຫດ
- ບໍ່ມີຫ້ອງປົດວາວປະຕູນ້ຳ ແລະ ບໍ່ມີທາງ ຟຸດບາດອ້ອມອ່າງເກັບນ້ຳ

2.5. ການຄາດຄະເນມູນຄ່າ ແລະ ວາງແຜນການກໍ່ສ້າງ (ຂັ້ນຕອນ 5)

ນິຍາມ: ໃບຄິດໄລ່ບໍລິມາດວຽກ ແມ່ນເອກະສານທີ່ສ້າງຂຶ້ນມາເພື່ອຄິດໄລ່ປະລິມານວັດສະດຸທີ່ຕ້ອງການ, ຈົນເຖິງຄຸນນະພາບ ແລະ ປະລິມານຂອງໜ້າວຽກທີ່ກຳນົດໄວ້ຈາກຜູ້ຮັບເໝົາເພື່ອດຳເນີນຕາມໜ້າວຽກ.

ຈຸດປະສົງ

- ການສຳຫຼວດລາຄາຫົວໜ່ວຍຢູ່ໃນຕະຫຼາດຂອງວັດສະດຸທີ່ຕ້ອງການສຳລັບການກໍ່ສ້າງລະບົບນ້ຳສະອາດອີງຕາມການອອກແບບ (ຖ້າໄລຍະເວລາໂຄງການເກີນ 1 ປີຈະຕ້ອງໄດ້ຄຳນຶງເຖິງອັດຕາເງິນເຟີ້),
- ການຄິດໄລ່ລາຄາວັດສະດຸທີ່ຕ້ອງການສຳລັບການກໍ່ສ້າງລະບົບນ້ຳສະອາດອີງຕາມການອອກແບບກໍ່ສ້າງ
- ລະບຸການປະກອບສ່ວນຈາກແຕ່ລະພາກສ່ວນເຊັ່ນ:
  - ຊຸມຊົນ/ຜູ້ໄດ້ຮັບປະໂຫຍດ: ແຮງງານ ແລະ ວັດສະດຸທີ່ມີໃນທ້ອງຖິ່ນ (ຊາຍ, ຫີນ,...) ການປະກອບສ່ວນເປັນເງິນສົດຖ້າຈຳເປັນ/ຖ້າເປັນໄປໄດ້.
  - ຄູ່ຮ່ວມພັດທະນາ: ການຈັດຊື້ອຸປະກອນທີ່ຈຳເປັນ ແລະ ວັດສະດຸກໍ່ສ້າງທີ່ບໍ່ມີຢູ່ໃນລະດັບທ້ອງຖິ່ນ ຫຼື ທີ່ຊຸມຊົນບໍ່ສາມາດສະໜອງໃຫ້ໄດ້.

ຈະເຮັດແນວໃດ

1. ***ການກະກຽມໃບຄິດໄລ່ບໍລິມາດວຽກ (BoQ)***

ການກະກຽມ BoQ ຕ້ອງອີງໃສ່ເອກະສານຕໍ່ໄປນີ້:

- ບັນຊີລາຍຊື່ລະອຽດຂອງອຸປະກອນທີ່ຕ້ອງການສຳລັບການກໍ່ສ້າງລະບົບນ້ຳສະອາດຢູ່ໃນແຕ່ລະຈຸດ: ສຳລັບຫ້ອງນ, ຄວາມຍາວຂອງທໍ່ນສິ່ງ, ຈຳນວນທໍ່ GI ຂ້າມຄອງ, ສາຍກາບຂ້າມແມ່ນ້ຳ, ວາວອາກາດ, ວາວຕະກອນ, ອ່າງຫຼຸດຄວາມດັນ, ອ່າງເກັບນ້ຳ, ທໍ່ສແຈກນ້ຳຢູ່ໃນບ້ານ,
- ລາຄາຫົວໜ່ວຍຂອງແຕ່ລະລາຍການ - ພິຈາລະນາຄຸນນະພາບ/ລາຄາທີ່ດີທີ່ສຸດທີ່ມີຢູ່ໃນຕະຫຼາດ (ທ້ອງຖິ່ນ, ລະດັບຊາດ)

2. ***ຕົວຢ່າງ BoQ***

ວິທີການກຳນົດການປະກອບສ່ວນຂອງຊຸມຊົນ ແລະ ໂຄງການຈະຊ່ວຍພັດທະນາດ້ານໃດແດ່?

ການປະກອບສ່ວນຂອງຊຸມຊົນແມ່ນມີຄວາມສຳຄັນເພື່ອສ້າງຄວາມເປັນເຈົ້າການຂອງຕົນ: ຊາວບ້ານຈະເຂົ້າໃຈວ່າຈະນຳໃຊ້ ແລະ ບຳລຸງຮັກສາມັນໄດ້ດີຂຶ້ນຖ້າເຂົາເຈົ້າສ້າງມັນ**<u>ດ້ວຍຕົນເອງ ແລະ ເພື່ອຕົນເອງ</u>**. ການປະກອບສ່ວນຂອງຊຸມຊົນຈະຕ້ອງຖືກກຳນົດຮ່ວມກັບເຂົາເຈົ້າ, ໂດຍພິຈາລະນາເປັນແຕ່ລະກໍລະນີໄປ,ຕົວຢ່າງ:

- ***ກຳລັງແຮງງານ:*** ກວດສອບໃຫ້ແນ່ໃຈວ່າມີກຳລັງແຮງງານຢູ່ພາຍໃນຊຸມຊົນ ແລະ ໃນໄລຍະການຈັດຕັ້ງປະຕິບັດ. ໃນບາງກໍລະນີ, ອາດມີກຳນົດເວລາຂັດກັນຖ້າການກໍ່ສ້າງຫາກດຳເນີນໄປໃນເວລາດຽວກັນກັບຊ່ວງລະດູການຜະລິດກະສິກຳ (ການກະກຽມເຮັດນາ, ການເກັບກ່ຽວຜົນຜະລິດ, ...) ຫຼື ຊ່ວງທີ່ມີງານບຸນປະເພນີ. ຢູ່ໃນເຂດທີ່ມີການເຄື່ອນຍ້າຍແຮງງານຫຼາຍ (ໄປເຮັດວຽກຢູ່ໃນຕົວເມືອງ ຫຼື ຢູ່ຕ່າງປະເທດ), ຄວາມພ້ອມຂອງແຮງງານອາດຈະມີໜ້ອຍລົງ.

ການສົນທະນາກັບຕົວແທນຊຸມຊົນແມ່ນມີຄວາມສຳຄັນຫຼາຍ: ກວດສອບໃຫ້ແນ່ໃຈວ່າເຂົາເຈົ້າມີແຜນການ ແລະ ວິທີການຈັດຕັ້ງການເຄື່ອນໄຫວຂອງຊຸມຊົນແນວໃດ, ຮັບປະກັນວ່າເຂົາເຈົ້າຈະບໍ່ໃຊ້ແຮງງານເດັກນ້ອຍ ແລະ ແມ່ຍິງຖືພາ.

ໃນບາງກໍລະນີ, ຊຸມຊົນອາດພ້ອມທີ່ຈະຈ່າຍຄ່າແຮງງານແທນທີ່ຈະເຮັດດ້ວຍຕົນເອງ. ໃນກໍລະນີນີ້, ກວດສອບໃຫ້ແນ່ໃຈວ່າມີການຮັບປະກັນເງື່ອນໄຂທີ່ເໝາະສົມໃຫ້ກັບຄົນງານ ຫຼື ບໍ່ (ດ້ານຄວາມປອດໄພ, ຄ່າຈ້າງສະເລ່ຍຕ່ຳສຸດ, ...)

- ***ວັດສະດຸທ້ອງຖິ່ນ:*** ບັນຫານີ້ຈະຕ້ອງໄດ້ປຶກສາຫາລືຢ່າງລະອຽດກັບຊຸມຊົນເພື່ອຮູ້ວ່າຊຸມຊົນຈະສາມາດສະໜອງວັດສະດຸປະເພດໃດໄດ້ແດ່ເຊັ່ນ: ຊາຍ, ຫີນ, ໄມ້...
ກວດສອບໃຫ້ແນ່ໃຈວ່າການປະກອບສ່ວນຂອງຊຸມຊົນນັ້ນຈະບໍ່ມີຄວາມສ່ຽງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ມີຜົນກະທົບຕ່ຳຕໍ່ສະພາບແວດລ້ອມທ້ອງຖິ່ນຂອງເຂົາເຈົ້າ: ສຳລັບການດູດເອົາຊາຍ, ການຕັດໄມ້, ...

ບັນຫານີ້ຈະຕ້ອງດຳເນີນການຢ່າງໃກ້ຊິດຮ່ວມກັບຫ້ອງກະສິກຳ ແລະ ປ່າໄມ້, ແລະ ຫ້ອງການຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມເມືອງ. ຖ້າຫາກເຫັນວ່າມີຜົນກະທົບທາງລົບຕໍ່ສະພາບແວດລ້ອມທ້ອງຖິ່ນ, ຄວນປຶກສາຫາລືເພື່ອຊອກຫາທາງເລືອກອື່ນ (ຊຸມຊົນຊື້ບ່ອນອື່ນບ່ອນທີ່ຜົນກະທົບຕ່ຳກວ່າ, ສະໜອງໃຫ້ໂດຍໂຄງການພັດທະນາ, ...). ຕົວຢ່າງ, ຢູ່ບ້ານຈີ່ໂຈະ, ແຂວງຜົ້ງສາລີ, ໂຄງການ SCALING ໄດ້ສະໜອງໄມ້ແປ້ນໃຫ້ປະຊາຊົນເພື່ອໃຫ້ແນ່ໃຈວ່າຊຸມຊົນຈະບໍ່ຕັດຕົ້ນໄມ້ຢູ່ໃນເຂດປ່າສະຫງວນໃກ້ຄຽງ.

- ***ການປະກອບສ່ວນເປັນເງິນສົດ:*** ບັນຫານີ້ຂຶ້ນກັບການອອກແບບໂຄງການ; ມັນອາດແມ່ນຄວາມຕ້ອງການ ຫຼື ອາດເປັນທາງເລືອກ (ຄືກັບຢູ່ໃນໂຄງການ SCALING) . ການປະກອບສ່ວນຂອງຊຸມຊົນຍັງເປັນບັນຫາທີ່ພົບພໍ້. ມັນເປັນສິ່ງສຳຄັນຫຼາຍທີ່ຈະຕ້ອງປຶກສາຫາລືກັບຕົວແທນຊຸມຊົນ ແລະ ນາຍບ້ານເພື່ອໃຫ້ໄດ້ຄຳຕອບຕໍ່ໄປນີ້: ໃນຊຸມຊົນ, ມີໃຜແດ່ທີ່ສາມາດປະກອບສ່ວນເປັນເງິນສົດໄດ້ (ທຸກຄົວເຮືອນບໍ ?). ສຳລັບຄົວເຮືອນທີ່ທຸກຍາກທີ່ສຸດເດ?ຈະເຮັດແນວໃດ? (ບໍ່ມີການປະກອບສ່ວນ ຫຼື ປະກອບສ່ວນໃນວົງເງິນທີ່ຫຼຸດລົງໄດ້ບໍ່ ຫຼື ໂຄງການຈະຈ່າຍໃຫ້ເຂົາເຈົ້າໄດ້ບໍ่)? ບາງຄົວເຮືອນມີຄວາມສ່ຽງຄ້າງຊຳລະໜີ້ສິນ (ຫຼື ມີໜີ້ເກີນ) ຫຼືບໍ່? ໄລຍະເວລາທີ່ດີທີ່ສຸດສຳລັບການເກັບກູ້ໜີ້ຄືນ (ຕົວຢ່າງ: ຫຼັງຈາກການເກັບກ່ຽວຜົນຜະລິດ) ເພື່ອໃຫ້ແນ່ໃຈວ່າທຸກຄົວເຮືອນມີເງິນພຽງພໍເພື່ອໃຊ້ຈ່າຍຕາມຄວາມຕ້ອງການໃນຄອບຄົວ ແລະ ໃຊ້ຈ່າຍເຂົ້າໃນກິດຈະກຳຂອງເຂົາເຈົ້າ (ຖ້າເຂົາເຈົ້າຕ້ອງການຊື້ແນວພັນສຳລັບລະດູການຕໍ່ໄປເດ?) ໃຜຈະເປັນຜູ້ຮັບຜິດຊອບຕໍ່ການເກັບໜີ້ຄືນ? ເງິນຈະຖືກມອບແນວໃດ ແລະ ມອບໃຫ້ກັບໃຜ (ຜູ້ສະໜອງວັດສະດຸ, ໂຄງການ)?

➡ ***ປະເດັນທັງໝົດນີ້ຈະຕ້ອງໄດ້ອະທິບາຍຢ່າງຈະແຈ້ງຢູ່ໃນບົດບັນທຶກຂໍ້ຕົກລົງ (MoA) ທີ່ໄດ້ເຊັນກັບຊຸມຊົນກ່ອນການກໍ່ສ້າງ***

ຂໍ້ແນະນຳ

- ຈະໃຫ້ຄວາມສຳຄັນກັບຄຸນນະພາບຂອງວັດສະດຸທີ່ດີທີ່ສຸດ: ອັນນີ້ບໍ່ໄດ້ໝາຍຄວາມວ່າຕ້ອງແມ່ນວັດສະດຸທີ່ມີລາຄາແພງທີ່ສຸດ. ໃຊ້ເວລາເພື່ອກຳນົດຄຸນນະພາບໂດຍການສຳຫຼວດຕະຫຼາດທີ່ແຕກຕ່າງກັນ.
- ລວມເອົາລາຍລະອຽດຂອງວັດສະດຸທີ່ຕ້ອງການໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້, ເພື່ອຮັບປະກັນວ່າຈະໄດ້ຮັບວັດສະດຸທີ່ມີຄຸນນະພາບດີທີ່ສຸດ
- ຜູ້ໃຫ້ທຶນບາງພາກສ່ວນບໍ່ຍອມຮັບທີ່ມາຂອງວັດສະດຸ: ກວດສອບລະບຽບການຂອງຜູ້ໃຫ້ທຶນກ່ອນ (ຕົວຢ່າງ: EU ບໍ່ຍອມຮັບສິນຄ້າທີ່ຜະລິດຢູ່ໃນປະເທດຈີນຖ້າມູນຄ່າສັນຍາສູງກວ່າ 10 000 €)
- ໃນການວາງແຜນ, ຄວນພິຈາລະນາເວລາທີ່ຈຳເປັນສຳລັບບໍລິສັດທີ່ຈະນຳເຂົ້າສິນຄ້າບາງຢ່າງຈາກຕ່າງປະເທດ.
- ຈົ່ງລະມັດລະວັງກັບປະລິມານທີ່ຈະຊື້: ຖ້າຈຳເປັນ, ຄວນຊື້ອຸປະກອນເພີ່ມຕື່ມເລັກນ້ອຍໃນກໍລະນີທີ່ທີ່ການແຕກຫັກ ໃນລະຫວ່າງການກໍ່ສ້າງ.
- ພະຍາຍາມຫຼີກເວັ້ນໃຫ້ຫຼາຍທີ່ສຸດທີ່ຈະຊື້ວັດສະດຸເພີ່ມເຕີມໃນລະຫວ່າງທຳການກໍ່ສ້າງ (ມັນອາດຈະຕ້ອງມີຂັ້ນຕອນເພີ່ມເຕີມເພື່ອຈັດຊື້ ແລະ ເສຍເວລາ).
- ບົດບັນທຶກຂໍ້ຕົກລົງ (MoA) ກັບຊຸມຊົນຈະຕ້ອງໄດ້ເຊັນກ່ອນເປີດປະມູນເພື່ອໃຫ້ແນ່ໃຈວ່າຊຸມຊົນເຫັນດີຈະປະກອບສ່ວນນຳ ແລະ ສາມາດກະກຽມເງິນໄວ້ (ເປັນວັດຖຸ ແລະ ເປັນເງິນສົດ).
- ຄ່າໃຊ້ຈ່າຍທາງອ້ອມຈະຕ້ອງຖືກພິຈາລະນາເພື່ອໃຫ້ມີງົບປະມານການກໍ່ສ້າງທີ່ພຽງພໍ. ໃນນີ້ລວມທັງຄ່າໃຊ້ຈ່າຍສຳລັບການຕິດຕາມ ແລະ ກວດກາການກໍ່ສ້າງ, ໂດຍວິຊາການນ້ຳສະອາດ (ໂດຍການຊຸກຍູ້ຊ່ວຍເຫຼືອຂອງຊ່ຽວຊານ WASH ຖ້າຈຳເປັນ), ການລະດົມຊຸມຊົນ ແລະ ການສ້າງຂີດຄວາມສາມາດ: ກ່ອນ/ລະຫວ່າງ/ຫຼັງການກໍ່ສ້າງ, ທົດສອບຄຸນນະພາບນ້ຳພາຍຫຼັງ ໃຊ້ໄດ້ 6 ເດືອນ.
- ໃນກໍລະນີທີ່ມີຫຼາຍໜ້າວຽກ/ລາຍການອຸປະກອນທີ່ຈະສະໜອງ, ການປະມູນອາດແບ່ງອອກເປັນຫຼາຍຊອງປະມູນ (ຕົວຢ່າງ: 1 ຊອງປະມູນຕໍ່ເມືອງ).

ເຊື່ອມໂຍງກັບເອກະສານທີ່ສຳຄັນຄື:

ເອກະສານຊ້ອນທ້າຍ 14 : ຕົວຢ່າງໃບຄິດໄລ່ບໍລິມາດວຽກ

ເອກະສານຊ້ອນທ້າຍ 15: ໃບປະເມີນລາຄາ

ເອກະສານຊ້ອນທ້າຍ 16: MoA ກໍ່ສ້າງນ້ຳສະອາດຊຸມຊົນສຳລັບໂຄງການ SCALING ລາວ

2.6. ການລະດົມຊຸມຊົນ (ຂັ້ນຕອນ 6)

ນິຍາມ:
ຂັ້ນຕອນນີ້ມີເປົ້າໝາຍກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບທີ່ຈະແຈ້ງຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ. ໄດ້ມີການເຊັນບົດບັນທຶກຂໍ້ຕົກລົງເພື່ອໃຫ້ຂໍ້ຕົກລົງ ແລະ ຄຳໝັ້ນສັນຍາເປັນທາງການ.

ຈຸດປະສົງ:
ກ່ອນທີ່ຈະລິເລີ່ມການກໍ່ສ້າງ, ການປຸກລະດົມຊຸມຊົນມີເປົ້າໝາຍເພື່ອ:

- ການສົນທະນາໃນລາຍລະອຽດທີ່ກ່ຽວກັບຂະບວນການທີ່ຈະຈັດຕັ້ງປະຕິບັດ
- ການມອບໝາຍໃນການປະກອບສ່ວນ, ບົດບາດແລະຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນໃນການກໍ່ສ້າງລະບົບນ້ຳສະອາດ (ຫ້ອງການສາທາລະນະສຸກເມືອງ, ບ້ານ ແລະ ໂຄງການ ຫຼື ຄູ່ຮ່ວມພັດທະນາ).
- ປຶກສາຫາລືກ່ຽວກັບດ້ານຄວາມປອດໄພ, ການປົກປ້ອງເດັກ ແລະ ສະຖານທີ່ເກັບຮັກສາວັດສະດຸ ແລະ ການກໍ່ສ້າງລະບົບນ້ຳສະອາດໃນລະຫວ່າງການກໍ່ສ້າງ, ເພື່ອໃຫ້ແນ່ໃຈວ່າມີຄວາມເຂົ້າໃຈ ແລະ ຍອມຮັບໃນພາລະບົດບາດແລະຄວາມຮັບຜິດຊອບທີ່ຖືກມອບໝາຍ;
- ຮັບປະກັນຄຳໝັ້ນສັນຍາຂອງແຕ່ລະພາກສ່ວນລວມທັງການປະກອບສ່ວນຂອງຊຸມຊົນເປັນເງິນສົດ/ເປັນວັດຖຸ, ແລະ ຄຳໝັ້ນສັນຍາຂອງຕົນໃນການນຳໃຊ້ ແລະ ການບຳລຸງຮັກສາສິ່ງອຳນວຍຄວາມສະດວກໃຫ້ຍືນຍົງພາຍຫຼັງການກໍ່ສ້າງສຳເລັດ (ສ້າງຕັ້ງຄະນະກຳມະການຄຸ້ມຄອງນ້ຳ ແລະ ເກັບຄ່ານ້ຳ, ປົກປັກຮັກສາແຫຼ່ງນ້ຳ, ...)

ຈະເຮັດແນວໃດ ?

1. ***ການກະກຽມຮ່າງສັນຍາ***

   ເນື້ອໃນຕ້ອງປະກອບມີ: ທີ່ຢູ່ຕິດຕໍ່ພ້ອມລວມທັງເອກະສານອ້າງອີງ, ຈຸດປະສົງຂອງສັນຍາ, ຜູ້ໄດ້ຮັບຜົນປະໂຫຍດ, ລາຍຊື່ສະມາຊິກຄະນະກຳມະການນ້ຳຂັ້ນບ້ານ, ບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ, ການສະໜັບສະໜູນຈາກໜ່ວຍງານພາກລັດໃນລະຫວ່າງການກໍ່ສ້າງ ແລະ ໃນຕໍ່ໜ້າ, ການປະກອບສ່ວນຂອງຊຸມຊົນສຳລັບການກໍ່ສ້າງ (ເງິນ ສົດ, ວັດສະດຸ, ແຮງງານທ້ອງຖິ່ນຂອງຊຸມຊົນ ...), ມາດຕະການປ້ອງກັນ ແລະ ຮັກສາຄວາມປອດໄພຂອງເດັກໃນລະຫວ່າງການກໍ່ສ້າງ, ຄຳໝັ້ນສັນຍາຂອງຊຸມຊົນເພື່ອຮັບປະກັນການບຳລຸງຮັກສາລະບົບ, ການນຳໃຊ້ທີ່ຍືນຍົງ (ປະຢັດນ້ຳ, ຕິດຕັ້ງກົງເຕີ້ນ້ຳ, ...), ແລະ ການປົກປັກຮັກສາແຫຼ່ງນ້ຳຊຶ່ງອາດລວມເຖິງຄຳໝັ້ນສັນຍາຂອງຊຸມຊົນໃນການສົ່ງເສີມການຮັກສາສຸຂະນາໄມ (ເຊັ່ນວ່າ: ແຕ່ລະຄົວເຮືອນຕ້ອງສ້າງວົດຖ່າຍ; ...)
2. ***ການຈັດປະຊຸມຂັ້ນຊຸມຊຸມ***

   ຈຸດປະສົງແມ່ນເພື່ອຜ່ານຮ່າງສັນຍາຕໍ່ກັບຊຸມຊົນ, ປຶກສາຫາລື ແລະ ດັດແປງມັນລວມທັງຂໍ້ສະເໜີຂອງຊຸມຊົນ. ຮ່າງສັນຍາໄດ້ຖືກອ່ານຜ່ານໃຫ້ທຸກຄົນໄດ້ຮັບຟັງເພື່ອໃຫ້ເປັນວິທີການແບບມີສ່ວນຮ່ວມ. ຕ້ອງໃຫ້ເວລາພຽງພໍສຳລັບຄຳຖາມ ແລະ ຄຳຕອບເພື່ອໃຫ້ແນ່ໃຈວ່າທຸກຄົນເຂົ້າໃຈແລ້ວ. ມາດຕະການສຳລັບການນຳໃຊ້ຕ້ອງໄດ້ຖືກປຶກສາຫາລືພາຍໃນຊຸມຊົນ, ເຈົ້າໜ້າທີ່ລັດສາມາດໃຫ້ຄຳແນະນຳເພີ່ມເຕີມ.

   ຜູ້ເຂົ້າຮ່ວມຈະປະກອບດ້ວຍ: 1 ຄົນ/ຄອບຄົວ, ອົງການປົກຄອງບ້ານ, ຕົວແທນພາກລັດ (ທີມງານນ້ຳສະອາດຢ່າງ ໜ້ອຍ), ຕົວແທນຄູ່ຮ່ວມພັດທະນາ.

3. ປັບປຸງສັນຍາເທື່ອສຸດທ້າຍແລະລົງນາມໂດຍແຕ່ລະຝ່າຍທີ່ມີສ່ວນຮ່ວມ

ຂໍ້ແນະນຳ

ອີງໃສ່ຜົນຂອງການລະດົມຊຸມຊົນ, ອາດກວດແກ້ຄືນໃບຄົດໄລ່ບໍລິມາດວຽກ (BoQ), ໃບປະເມີນລາຄາ ແລະ ແຜນການກໍ່ສ້າງ.

ເຊື່ອມໂຍງຫາບັນດາເອກະສານທີ່ສຳຄັນຄື:

ເອກະສານຊ້ອນທ້າຍ 12: ຕົວຢ່າງບົດບັນທຶກຂໍ້ຕົກລົງ (MoA) ທີ່ເຊັນກັບຊຸມຊົນ

ເອກະສານຊ້ອນທ້າຍ 16: MoA ກໍ່ສ້າງນ້ຳສະອາດຊຸມຊົນສຳລັບໂຄງການ SCALING ລາ

2.7. ຂະບວນການຈັດຊື້ (ຂັ້ນຕອນ 7)

ນິຍາມ: ການຈັດຊື້ແມ່ນຂັ້ນຕອນການຊື້ວັດສະດຸທີ່ຕ້ອງການສຳລັບການກໍ່ສ້າງ/ສ້ອມແປງລະບົບນ້ຳສະອາດ. ມັນປະຕິບັດຕາມຫຼາຍຂັ້ນຕອນຄື: i) ການກະກຽມເອກະສານ; ii) ຂັ້ນຕອນການປະມູນທີ່ຂຶ້ນກັບຈຳນວນເງິນ ແລະ ລະບຽບການເງິນ; iii) ການຄັດເລືອກຜູ້ສະໜອງຊື່ວຄາວ; iv) ການຕັດສິນໃຈຂັ້ນສຸດທ້າຍ ແລະ ການເຮັດສັນຍາ.

ຈຸດປະສົງ

ເພື່ອຄັດເລືອກເອົາບໍລິສັດໜຶ່ງ (ຫຼືຫຼາຍບໍລິສັດ) ໃນການສະ ໜອງວັດສະດຸກໍ່ສ້າງ/ສ້ອມແປງໃຫ້ສອດຄ່ອງກັບດຳລັດວ່າດ້ວຍ ການກໍ່ສ້າງ, ສ້ອມແປງ ແລະ ບໍລິການດ້ວຍທຶນຂອງລັດສະບັບ ເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004; ກົດໝາຍວ່າດ້ວຍ ການບັງຄັບໃຊ້ກົດໝາຍເລກທີ 063/Kong, ລົງວັນທີ 12 ມີນາ 2004 ແລະລະບຽບທາງດ້ານການເງິນຂອງຜູ້ໃຫ້ທຶນ (ຄວາມ ໂປ່ງໃສ, ປະມູນແຂ່ງຂັນ, ບໍ່ມີການຂັດຜືນປະໂຫຍດ).



ຮູບສະແດງ 2: ຫຼັກການຕົ້ນຕໍທີ່ຕ້ອງປະຕິບັດຕາມສຳລັບການຈັດຊື້

ຈະເຮັດແນວໃດ

ນີ້ແມ່ນລາຍການຂັ້ນຕອນທີ່ປະສົບຜົນສຳເລັດທີ່ຈະຕ້ອງໄດ້ປະຕິບັດຕາມ. ເຖິງຢ່າງໃດກໍ່ຕາມ, ມັນອາດຈະຕ້ອງໄດ້ດັດແກ້ໃຫ້ເໝາະສົມໂດຍພິຈາລະນາຕາມກົດລະບຽບຂອງຜູ້ໃຫ້ທຶນ ແລະ ມູນຄ່າຂອງສັນຍາ.

1. ການກະກຽມເອກະສານທີ່ສຳຄັນ

ໃນກໍລະນີມີຫຼາຍວຽກປະມູນ, ມີທາງເລືອກໃຫ້ 2 ທາງຄື: 1 ບໍລິສັດສາມາດຍື່ນຊອງປະມູນໄດ້ພຽງແຕ່ 1 ຊອງເທົ່ານັ້ນ; ຫຼື 1 ບໍລິສັດສາມາດຍື່ນຫຼາຍຊ່ອງປະມູນ. ກວດສອບໃຫ້ແນ່ໃຈວ່າທາງເລືອກໄດ້ຮັບການອະທິບາຍຢ່າງຈະແຈ້ງໃນເງື່ອນໄຂຂອງການ ປະມູນ.

2. ການແຈ້ງປະມູນ

ອີງຕາມລະບຽບການເງິນ ແລະ ມູນຄ່າສັນຍາ:

- *ຕ້ອງມີ ໃບສະເໜີລາຄາ (ທາງການ) ຢ່າງນ້ອຍ 3 ບໍລິສັດ*: ໃນກໍລະນີນີ້, ເອກະສານທີ່ຖືກກະກຽມຖືກສົ່ງໄປໃຫ້ຢ່າງ ໜ້ອຍ 3 ບໍລິສັດ. ກຳນົດເວລາຍື່ນປະມູນຢ່າງໜ້ອຍ 10 ວັນ.
- *ການປະມູນແບບເປີດກວ້າງ (ລະດັບທ້ອງຖິ່ນ ຫຼື ລະດັບປະເທດ): ໃນກໍລະນີທີ່ບໍ່ມີບໍລິສັດຢູ່ພາຍໃນແຂວງ, ຫຼື ເພື່ອໃຫ້ໄດ້ ຄຸນນະພາບທີ່ດີຂຶ້ນ ແລະ ມີທາງເລືອກຫຼາຍກວ່າເກົ່າ, ການປະມູນສາມາດເປີດໄດ້ໃນລະດັບທ້ອງຖິ່ນ ຫຼື ລະດັບຊາດ. ອັນນີ້ ສາມາດກຳນົດໄດ້ອີງຕາມມູນຄ່າສັນຍາ (ສຳລັບໂຄງການ SCALING, ມູນຄ່າສັນຍາສູງກວ່າ 60 000 USD).*

ໃນກໍລະນີນີ້, ການແຈ້ງປະມູນສາມາດແຈ້ງໃນໜ້າໜັງສືພິມທ້ອງຖິ່ນ ແລະ ລະດັບປະເທດ, ແຈ້ງໃນວິທະຍຸທ້ອງຖິ່ນ ແລະ ໂທລະໂຄ່ງຂອງ ແຂວງ ແລະ ແຈ້ງຢູ່ທີ່ຫ້ອງການ (ສາທາເມືອງ, ຫ້ອງການໂຄງການ). ກຳນົດຍື່ນຊອງປະມູນຢ່າງນ້ອຍ 3 ອາທິດເພື່ອຮັບປະກັນໃຫ້ທຸກບໍລິສັດມີເວລາພຽງພໍທີ່ຈະຍື່ນຊອງປະມູນຂອງຕົນ.

ໃນກໍລະນີການເປີດການປະມູນ, ທ່ານຕ້ອງຈຳໄວ້ວ່າຂະບວນການນີ້ຈະໃຊ້ເວລາ (ຢ່າງ ໜ້ອຍ **2** ເດືອນ!), ກຳນົດເວລານີ້ຈະຕ້ອງລວມເອົາການວາງແຜນເຂົ້ານຳເພື່ອປ້ອງກັນການຊັກຊ້າທີ່ອາດເກີດຂຶ້ນ.

ນັບແຕ່ວັນທີ 1 ຂອງການແຈ້ງປະມູນຈົນເຖິງກຳນົດເວລາການຍື່ນຊອງປະມູນ, ທ່ານຕ້ອງຮັບປະກັນໃຫ້ມີຜູ້ໜຶ່ງມີໜ້າປະຈຳໃນຊ່ວງໄລຍະການປະມູນເພື່ອສະໜອງເອກະສານໃຫ້ກັບບໍລິສັດທີ່ສົນໃຈເຂົ້າຮ່ວມ.

ເມື່ອມີບໍລິສັດເຂົ້າມາຂໍຮັບເອກະສານເງື່ອນໄຂການປະມູນ ແລະ ຂໍ້ມູນທີ່ກ່ຽວຂ້ອງທັງໝົດຢູ່ທີ່ຫ້ອງການ, ຕ້ອງລົງລາຍຊື່ໃນບັນຊີພ້ອມໃຫ້ລົງລາຍເຊັນ (ພ້ອມກັບວັນທີ, ເວລາຮັບເອກະສານອອກໄປ, ຊື່ຂອງບຸກຄົນທີ່ເປັນຕົວແທນຂອງບໍລິສັດ ແລະ ລາຍເຊັນຂອງເຂົາເຈົ້າ).

ນັບແຕ່ມື້ທຳອິດຂອງການແຈ້ງປະມູນຈົນເຖິງກຳນົດເວລາການຍື່ນປະມູນ, **ຫ້າມເດັດຂາດບໍ່ໃຫ້**ສະໜອງຂໍ້ມູນເພີ່ມເຕີມໃຫ້ກັບບາງບໍລິສັດ; ບໍ່ໃຫ້ປ່ຽນແປງເງື່ອນໄຂການປະມູນໂດຍບໍ່ໄດ້ແຈ້ງໃຫ້ບໍລິສັດ, ບໍ່ໃຫ້ເຈລະຈາຕໍ່ລອງກັບບາງບໍລິສັດ.

ໃນກໍລະນີຕ້ອງການຂໍ້ມູນເພີ່ມເຕີມ/ຄຳຊີ້ແຈງ/ການປ່ຽນແປງ:

- ໃນກໍລະນີຂອງການເປີດປະມູນ: ຈະຕ້ອງເຮັດແຈ້ງຄັ້ງທີສອງຕາມວິທີດຽວກັນກັບຄັ້ງທີ 1. ອາດແນະນຳໃຫ້ມີການຕໍ່ເວລາການຍື່ນປະມູນອອກໄປອີກຖ້າຫາກຈຳເປັນຕ້ອງມີການປ່ຽນແປງ. ບໍລິສັດທີ່ໄດ້ສົ່ງຊອງປະມູນແລ້ວຕ້ອງໄດ້ຮັບການແຈ້ງໃຫ້ຊາບ, ເອກະສານຂອງເຂົາເຈົ້າສາມາດຖອນຄືນ ແລະ ປ່ຽນແທນໄດ້ (ຖ້າບໍລິສັດຕ້ອງການ). ເຖິງຢ່າງໃດກໍ່ຕາມ, ການຕັດສິນໃຈຂັ້ນສຸດທ້າຍຈະຖືເອົາເງື່ອນໄຂການປະມູນສະບັບປັບປຸງເປັນທາງການ.
- ໃນກໍລະນີມີໃບສະເໜີລາຄາຂອງ 3 ບໍລິສັດ: ບໍລິສັດຕ້ອງໄດ້ຮັບການແຈ້ງໃຫ້ຊາບ. ບໍລິສັດທີ່ໄດ້ສົ່ງຊອງປະມູນໄປແລ້ວຕ້ອງໄດ້ຮັບການແຈ້ງໃຫ້ຊາບ, ເອກະສານຂອງເຂົາເຈົ້າສາມາດຖອນຄືນ ແລະ ປ່ຽນແທນໄດ້ (ຖ້າບໍລິສັດຕ້ອງການ). ເຖິງຢ່າງໃດກໍ່ຕາມ, ການຕັດສິນໃຈຂັ້ນສຸດທ້າຍຈະຖືເອົາເງື່ອນໄຂການປະມູນສະບັບປັບປຸງເປັນທາງການ.

3. ການຮັບຊ່ອງປະມູນ

ພະນັກງານການເງິນຈະເປັນຜູ້ຮັບຜິດຊອບ:

- ການຮັບຊອງປະມູນຈາກບໍລິສັດປະຕິບັດຕາມເງື່ອນໄຂການປະມູນຢ່າງເຂັ້ມງວດຄື: ຊອງປະມູນທີ່ມີກາຈ໋ຳຂອງບໍລິສັດທີ່ລະບຸ ຊື່ຂອງໂຄງການ, ພາກສ່ວນວຽກກໍ່ສ້າງ (ຖ້າມີ), ບໍ່ໃຫ້ລະບຸເຖິງອັນອື່ນຢູ່ໃນຊອງປະມູນ.
- ສະຖານທີ່ຍື່ນຊອງປະມູນແມ່ນຕ້ອງຖືກລະບຸຢ່າງຈະແຈ້ງໃນເງື່ອນໄຂການປະມູນ (ສະຖານທີ່, ກຳນົດເວລາ - ວັນ ແລະ ເວລາ)
- ຕ້ອງໃຫ້ມີພະນັກງານຄົນໜຶ່ງຢູ່ປະຈຳເພື່ອຮັບຊອງປະມູນໃນລະຫວ່າງເວລາເຮັດວຽກ.
- ເມື່ອບໍລິສັດຍື່ນຊອງປະມູນ, ເອກະສານຈະຕ້ອງຖືກເຊັນໂດຍລະບຸວັນ ແລະ ເວລາຂອງການຍື່ນ. ເລກລຳດັບທີການຍື່ນຊອງປະມູນຈະຕ້ອງເອົາໃຫ້ກັບຜູ້ມາຍື່ນຊອງປະມູນ (ເລີ່ມແຕ່ເລກທີ 1 ສຳລັບການຍື່ນຊອງປະມູນຊອງທີ 1 ແລະ ຕໍ່ໆໄປ) ແລະ ເລກທີດັ່ງກ່າວຕ້ອງໄດ້ຂຽນໃສ່ໃນເທິງໜ້າຊອງປະມູນເມື່ອມັນຖືກຍື່ນແລ້ວ.

- ເພື່ອຫຼີກເວັ້ນຄວາມເຂົ້າໃຈຜິດ, ຂໍແນະນຳໃຫ້ຖືເອົາສະເພາະແຕ່ອັນທີ່ໂຄງການ/ຫ້ອງການສາທາເມືອງຮັບເອົາຊອງປະມູນ ແລ້ວເປັນຕົ້ນໄປ (ແລະ ບໍ່ແມ່ນອັນທີ່ທີ່ບໍລິສັດສົ່ງມາທາງບໍລິສັດຈັດສົ່ງໃດໜຶ່ງ, ຖ້າໃຊ້ບໍລິການຈັດສົ່ງ).

4. ກອງປະຊຸມເປີດຊອງປະມູນ

ຄະນະກຳມະການ

- ຄະນະກຳມະການດັ່ງກ່າວຈະຕ້ອງປະກອບດ້ວຍຢ່າງໜ້ອຍມີ: ຕົວແທນຫ້ອງການສາທາລະນະສຸກເມືອງ 1 ທ່ານ (ຫົວໜ້າຫ້ອງການ ຫຼື ຜູ້ຕາງໜ້າ), ຕົວແທນຈາກຂະແໜ່ງນ້ຳສະອາດ 1 ທ່ານ, ຕົວແທນຈາກຫ້ອງວ່າການປົກຄອງເມືອງ 1 ທ່ານ, ຕົວແທນຫ້ອງການແຜນການ ແລະ ການລົງທຶນເມືອງ 1 ທ່ານ, ຕົວແທນຈາກພະແນກການເງິນ 1 ທ່ານ, ຕົວແທນໂຄງການ (ຜູ້ບໍລິຫານໂຄງການ ແລະ ຕົວແທນພະແນກບໍລິຫານ/ການເງິນ 1 ທ່ານ).
- ຄະນະກຳມະການຕ້ອງໄດ້ຖືກກຳນົດຂຶ້ນມາໃນເວລາເລີ່ມຕົ້ນຂະບວນການປະມູນ.
- ສະມາຊິກຄະນະກຳມະການຕ້ອງໄດ້ຮັບການແຈ້ງລ່ວງໜ້າກ່ຽວກັບວັນ ແລະ ເວລາຂອງກອງປະຊຸມປະມູນ. ໃນກໍລະນີທີ່ບໍ່ສາມາດມາຮ່ວມໄດ້, ຕ້ອງໄດ້ເລືອກຕົວແທນ 1 ທ່ານມາແທນແຕ່ສະມາຊິກຄົນອື່ນຕ້ອງໄດ້ຮັບແຈ້ງໃຫ້ຊາບລ່ວງໜ້າຢ່າງເປັນທາງການ.
- ໃນກໍລະນີມີສະມາຊິກໜ້ອຍກວ່າ 3 ຄົນ, ຄະນະກຳມະການບໍ່ສາມາດດຳເນີນກອງປະຊຸມເປີດຊອງປະມູນໄດ້. ແລະຕ້ອງໄດ້ກຳນົດເອົາວັນອື່ນແທນແລະສະມາຊິກທຸກຄົນຕ້ອງໄດ້ຮັບການແຈ້ງໃຫ້ຊາບ.

ການເຂົ້າຮ່ວມຂອງຕົວແທນບໍລິສັດ

- ໃນເງື່ອນໄຂການປະມູນ, ແມ່ນສາມາດອະນຸຍາດໃຫ້ຕົວແທນຂອງບໍລິສັດທີ່ໄດ້ຍື່ນຊອງປະມູນໄດ້ເຂົ້າຮ່ວມໃນກອງປະຊຸມເປີດຊອງປະມູນ. ເຂົາເຈົ້າອາດສາມາດເຂົ້າຮ່ວມໄດ້ພຽງແຕ່ໃນຕອນເລີ່ມຕົ້ນເທົ່ານັ້ນ (ການຮັບຊອງປະມູນ) ແຕ່ບໍ່ແມ່ນໃນຊ່ວງການວິເຄາະຊອງປະມູນໂດຍຄະນະກຳມະການທັງໃນອາລະການຕັດສິນຄັດເລືອກ.ຫ້າມບໍ່ໃຫ້ມີການເຈລະຈາຕໍ່ລອງໃນລະຫວ່າງການປະຊຸມ.
- ໃບລົງທະບຽນຈະຕ້ອງໄດ້ເຊັນໂດຍຕົວແທນຂອງບໍລິສັດ, ຕົວແທນຕ້ອງສະແດງເອກະສານຢັ້ງຢືນວ່າຕົນເອງເປັນຕົວແທນຂອງບໍລິສັດ (ໜັງສືມອບອຳນາດທີ່ມີລາຍເຊັນຜູ້ອຳນວຍການບໍລິສັດ, ຖ້າແມ່ນຜູ້ອຳນວຍການບໍລິສັດຕ້ອງສະແດງບັດປະຈຳຕົວ, ...)

ວາລະກອງປະຊຸມ

- 1. ກ່າວເປີດກອງປະຊຸມໂດຍປະທານຄະນະກຳມະການ
- 2. ສະເໜີຄວາມເປັນມາຂອງການປະມູນ (ໂດຍຜູ້ບໍລິຫານໂຄງການ, ຕົວຢ່າງ)
- 3. ກວດຊອງປະມູນ: ເລກທີ, ການຈ້ຳບໍລິສັດ, ຂໍ້ມູນອື່ນໆທີ່ລະບຸເທິງຊອງປະມູນ
- 5. ເປີດຊ່ອງປະມູນເທື່ອລະຊ່ອງເພື່ອທຳການວິເຄາະ

ຫາກການຍື່ນປະມູນມີໜ້ອຍກວ່າ 3 ຊອງ, ແມ່ນບໍ່ສາມາດເປີດຊອງປະມູນໄດ້. ກອງປະຊຸມຈະສະຫຼຸບວ່າບໍ່ມີການຍື່ນສະໜັກທີ່ພຽງພໍ. ຄະນະກຳມະການມີທາງເລືອກຫຼາຍຢ່າງເຊັ່ນ: ຕໍ່ເວລາແຈ້ງປະມູນອອກໄປອີກໃນລະດັບທີ່ກວ້າງຂວາງກວ່າເກົ່າ (ໃນລະດັບປະເທດຖ້າເປັນການປະມູນໃນລະດັບທ້ອງຖິ່ນ); ຕໍ່ກຳນົດເວລາໝົດກຳນົດໄປອີກ; ທົບທວນເອກະສານແລະເງື່ອນໄຂຕ່າງ (ການສົ່ງທາງອີເມລ, ໃຫ້ຜູ້ສົນໃຈຍື່ນຊອງປະມູນໄດ້ໃນຫຼາຍສະຖານທີ່...).

5. ການວິໄຈ ແລະ ຄັດເລືອກຜູ້ສະໜອງຊື່ວຄາວ

ຄະນະກຳມະການໄດ້ທຳການວິໄຈດ້ວຍຄວາມລະມັດລະວັງຕາມ 3 ເງື່ອນໄຂດັ່ງນີ້:

- ຄວາມສອດຄ່ອງ: ໝາຍເຖິງການນຳສະເໜີຊອງປະມູນ (ກຳນົດເວລາ, ຊອງປະມູນທີ່ມີການຈ້ຳ, ການລະບຸຂໍ້ມູນທີ່ຈຳເປັນເທິງໜ້າຊອງປະມູນ, ເອກະສານຄົບຖ້ວນຕາມທີ່ກຳນົດໄວ້, ການແຍກອອກເປັນພາກສ່ວນວຽກຫາກມີຫຼາຍໜ້າວຽກ, ...)
- ຄຸນສົມບັດ: ໝາຍເຖິງມາດຖານທີ່ຈະຖື ກາຄັດເລືອກເຊັ່ນ: ປະສົບການຕ່ຳສຸດທີ່ຕ້ອງການ, ເອກະສານອ້າງອີງຜົນງານທີ່ຄ້າຍຄືກັນທີ່ໄດ້ເຮັດຜ່ານມາ, ສະຖານະພາບທາງກົດໝາຍຂອງບໍລິສັດ, ຫຼັກຖານທີ່ຢັ້ງຢືນວ່າບໍລິສັດບໍ່ໄດ້ຫຼີກລ້ຽງການຊຳລະອາກອນ, ມີບັນຊີທະນາຄານ, ມີແຜນວຽກ.

ຖ້າເງື່ອນໄຂຂອງຄວາມສອດຄ່ອງ ແລະ /ຫຼື ຄຸນສົມບັດບໍ່ຄົບຖ້ວນ, ເອກະສານຍື່ນປະມູນແມ່ນຈະບໍ່ຖືກຄັດເລືອກ.

- ຄຸນນະພາບທາງດ້ານວິຊາການແລະ ການເງິນ:
  - ເຄີຍມີປະສົບການເຮັດວຽກໃນໂຄງການແບບດຽວກັນນີ້ໃນຜ່ານມາ
  - ມີເງື່ອນໄຂໃນການຂົນສົ່ງອັດສະດຸ (ລົດບັນທຸກ, ...)
  - ວັດສະດຸທີ່ລະບຸໃນບັນຊີແມ່ນມີຄຸນນະພາບ (ທີ່ມາເຊື່ອຖືໄດ້, ຮັບປະກັນຄຸນນະພາບ)
  - ມູນຄ່າຫົວໜ່ວຍ

ຄະນະກຳມະການຕ້ອງກວດກາການຄິດໄລ່ທຸກຢ່າງໃນໃບຄິດໄລບໍລິມາດວຽກແຕ່ລະຢ່າງ (BoQ) (ລາຄາຫົວໜ່ວຍ ແລະ ປະລິມານ) ເພື່ອໃຫ້ແນ່ໃຈວ່າມູນຄ່າລວມຖືກຕ້ອງ.
ຫຼັງຈາກນັ້ນ, ກໍ່ຕ້ອງທຳການປຽບທຽບກັບລາຄາກາງ ແລະ ປະເມີນມູນຄ່າໃຊ້ຈ່າຍເພື່ອໃຫ້ແນ່ໃຈວ່າລາຄາບໍ່ຕ່ຳຫຼືສູງເກີນໄປ.

- ໃນກໍລະນີມີຄວາມຜິດພາດ, ຄະນະກຳມະການຈະພິຈາລະນາພຽງແຕ່ມູນຄ່າຫົວໜ່ວຍ ແລະ ບໍລິມາດທີ່ໄດ້ກຳນົດໄວ້ໃນການຍື່ນປະມູນເພື່ອປຽບທຽບມູນຄ່າສະເໜີປະມູນທີ່ໄດ້ຮັບ.

ຄະນະກຳມະການອາດພຽງແຕ່ປຽບທຽບ ແລະ ວິເຄາະໂດຍອີງໃສ່ຂໍ້ມູນໃນລະດັບດຽວກັນ: ຖ້າບໍ່ໃສ່ລາຄາຫົວໜ່ວຍໃນບາງລາຍການ, ຄະນະກຳມະການກໍ່ບໍ່ສາມາດສະຫຼຸບໄດ້. ຄະນະກຳມະການຈະສົ່ງໜັງສືແຈ້ງໃຫ້ແຕ່ລະບໍລິສັດຊາບເພື່ອຂໍໃຫ້ສົ່ງຂໍ້ມູນທີ່ຂາດຫາຍໄປມາໃຫ້ພາຍໃນ 7 ວັນ. ຫາກມີການຊັກຊ້າຕາມກຳນົດເວລານີ້, ຊອງປະມູນຈະບໍ່ໄດ້ຖືກຄັດເລືອກຖ້າບໍ່ສົ່ງຂໍ້ມູນມາໃຫ້.

ຖ້າຂໍ້ມູນຄົບຖ້ວນ, ຄະນະກຳມະການກໍ່ສາມາດສະຫຼຸບໄດ້ອີງໃສ່ອັດຕາສ່ວນຄຸນນະພາບ/ລາຄາທີ່ດີທີ່ສຸດ.

ຜູ້ເຂົ້າຮ່ວມກອງປະຊຸມເປີດຊອງປະມູນທັງໝົດຈະຕ້ອງໄດ້ເຊັນບົດບັນທຶກໃນຕອນທ້າຍຂອງກອງປະຊຸມ. ບົດບັນທຶກຈະລະບຸເຖິງ:

- ຜົນການວິໄຈໃນແຕ່ລະເງື່ອນໄຂ
- ຄຳຕັດສິນຂອງຄະນະກຳມະການ: ບໍລິສັດທີ່ໄດ້ຮັບການຄັດເລືອກ, ມູນຄ່າສັນຍາຕໍ່ພາກສ່ວນວຽກ.

- ຄະນະກຳມະການຈະໃຫ້ຄຳແນະນຳ ຫຼື ຊີ້ແຈງເລັກນ້ອຍເພື່ອນຳມາສົນທະນາ. ເຖິງຢ່າງໃດກໍ່ຕາມ, ຈະບໍ່ມີຕໍ່ລອງລາຄາກັນໄດ້ເພື່ອໃຫ້ສອດຄ່ອງກັບການປະມູນທີ່ມີການແຂ່ງຂັນຢ່າງເປີດເຜີຍ.

6. ເຮັດສັນຍາແລະລົງນາມ

ຮ່າງສັນຍາຈະຖືກສົ່ງໄປໃຫ້ບໍລິສັດທີ່ຊະນະການປະມູນພ້ອມຂໍ້ສະເໜີວັນເລີ່ມຕົ້ນການເຮັດວຽກແລະເງື່ອນໄຂການເບີກຈ່າຍ. ໃນກໍລະນີທີ່ຊຸມຊົນຕ້ອງໄດ້ຈ່າຍເປັນເງິນສົດໃຫ້ກັບບໍລິສັດ, ຈະຕ້ອງລະບຸລາຍລະອຽດຢູ່ໃນສັນຍາໂດຍອີງຕາມບົດບັນທຶກຂໍ້ຕົກລົງ (MoA) ທີ່ໄດ້ເຊັນກັບຊຸມຊົນ.

- ຖ້າບໍລິສັດທີ່ຊະນະການປະມູນຕົກລົງເຫັນດີກັບເງື່ອນໄຂ, ສັນຍາກໍ່ສາມາດລົງນາມໄດ້ໂດຍທຸກພາກສ່ວນ; ສ່ວນບໍລິສັດອື່ນໆທີ່ບໍ່ຊະນະການປະມູນກໍ່ຈະໄດ້ຮັບແຈ້ງໃຫ້ຊາບວ່າເຂົາເຈົ້າບໍ່ໄດ້ຮັບການຄັດເລືອກ.

ບໍ່ອະນຸຍາດໃຫ້ມີການຕໍ່ລອງລາຄາ, ປະລິມານ ແລະ ຄຸນນະພາບຂອງວັດສະດຸ. ມີພຽງແຕ່ການດັດແປງເລັກນ້ອຍທາງດ້ານວິຊາການ (ເງື່ອນໄຂການຈັດສົ່ງ, …) ສາມາດສົນທະນາກັນໄດ້.

- ຖ້າບໍລິສັດບໍ່ເຫັນດີກັບເງື່ອນໄຂຂອງສັນຍາ, ບໍລິສັດຕ້ອງແຈ້ງໃຫ້ຄະນະກຳມະການຮັບຊາບ. ບໍລິສັດທີ່ໄດ້ອັນດັບສອງໃນການປະມູນຈະຖືກຄັດເລືອກ ແລະ ຮ່າງສັນຍາຈະຖືກສົ່ງໃຫ້ຜູ້ກ່ຽວ. ຖ້າບໍລິສັດທີສອງຕົກລົງເຫັນດີ, ບໍລິສັດຜູ້ຍື່ນປະມູນອື່ນໆກໍ່ຈະໄດ້ຮັບແຈ້ງໃຫ້ຊາບວ່າເຂົາເຈົ້າບໍ່ໄດ້ຮັບການຄັດເລືອກ.

ຂໍ້ແນະນຳ:

- ການຈັດຊື້ຕ້ອງໃຊ້ເວລາດົນ (ໂດຍສະເລ່ຍ 2 ເດືອນລະຫວ່າງການກະກຽມເອກະສານຈົນຮອດການເຊັນສັນຍາ): ຈຳເປັນຈະຕ້ອງພິຈາລະນາຕັ້ງແຕ່ເລີ່ມຕົ້ນ ເພື່ອຫຼີກເວັ້ນຄວາມຊັກຊ້າທີ່ອາດເກີດຂຶ້ນ.
- ພະແນກການເງິນ ແລະ ເຕັກນິກຕ້ອງເຮັດວຽກຢ່າງໃກ້ຊິດເພື່ອຮັບປະກັນໃຫ້ຂະບວນການປະຕິບັດຕາມລະບຽບພາຍໃນ ແລະຂອງຜູ້ໃຫ້ທຶນ
- ຮ່າງເອກະສານແມ່ນນຳໃຊ້ງ່າຍແຕ່ຕ້ອງດັດແກ້ໃຫ້ເໝາະສົມເປັນກໍລະນີໄປ.

ເຊື່ອມໂຍງກັບເອກະສານທີ່ສຳຄັນຕ່າງໆເຊັ່ນ:

ເອກະສານຊ້ອນທ້າຍ 15: **ໃບປະເມີນລາຄາ**
ເອກະສານຊ້ອນທ້າຍ 17: **ຮ່າງ** BoQ **ສຳລັບການຈັດຊື້**
ເອກະສານຊ້ອນທ້າຍ 18: **ເອກະສານແລະແບບຟອມເງື່ອນໄຂການປະມູນ**
ເອກະສານຊ້ອນທ້າຍ 19: **ແຈ້ງປະມູນລະດັບຊາດ**
ເອກະສານຊ້ອນທ້າຍ 20: **ຕາຕະລາງວິໄຈ (ຄວາມສອດຄ່ອງ, ຄຸນສົມບັດ)**
ເອກະສານຊ້ອນທ້າຍ 21: **ຕົວຢ່າງບົດບັນທຶກ-ກອງປະຊຸມເປີດຊອງປະມູນ**
ເອກະສານຊ້ອນທ້າຍ 22: **ຕົວຢ່າງສັນຍາ**

2.8. ການກະກຽມ (ຂັ້ນຕອນ 8)

ນິຍາມ:

ເພື່ອກະກຽມການກໍ່ສ້າງ ແລະ ຮັບປະກັນວ່າທຸກເງື່ອນໄຂໄດ້ຖືກກຳນົດໄວ້ເພື່ອຮັບປະກັນການຈັດຕັ້ງປະຕິບັດການກໍ່ສ້າງໃຫ້ສະດວກສະບາຍ ແລະ ມີປະສິດທິພາບ. ຂັ້ນຕອນນີ້ປະກອບດ້ວຍການໃຫ້ທິດທາງກ່ຽວກັບແຜນການຄວາມປອດໄພຂອງນ້ຳ.

ວັດສະດຸທີ່ຕ້ອງການ:
- *ໂປສເຕີກ່ຽວກັບຄວາມປອດໄພ*
- *ຄອມພິວເຕີ, LCD*
- *ນ້ຳຢາເພື່ອກວດຫາຢີນຂອງ coliform ໃນນ້ຳ*
- *ຈອກຢາງ (1/ຄົນ)*

ເຮັດຫຍັງແດ່

- *ການກະກຽມ*: ກຳນົດມື້ທີ່ຈະໄປ, ກະກຽມທີມງານ, ເອກະສານທີ່ຈຳເປັນ, ການນຳສະເໜີ, ໂປສເຕີ, ແຜ່ນຜ້າສາກສຳລັບການຝຶກອົບຮົມ ແລະອຸປະກອນອື່ນໆ
- *ການຝຶກອົບຮົມ* ການຈັດຕັ້ງປະຕິບັດຢູ່ຂັ້ນບ້ານ ແລະ ວິທີການຕ່ຳໜ້າ

ເຮັດແນວໃດ

ມື້ທີ 1

ຜູ້ເຂົ້າຮ່ວມ: ຊາວບ້ານທັງໝົດ, ພະນັກງານສຸກສາລາ.

ເວລາເລີ່ມກິດຈະກຳ: 1:30 ເຖິງ 4:00 ໂມງແລງ

1. *ໃນພາກປ່າຍ: ແບ່ງອອກເປັນ 2 ທີມ (ພະນັກງານນ້ຳສະອາດ, ສຸກສາລາ ແລະ ໂຄງການ):*

ທີມທີ 1 ຕ້ອງເກັບຕົວຢ່າງນ້ຳໃນແຕ່ລະຄົວເຮືອນ (ນ້ຳດື່ມ, ນ້ຳໃຊ້) ແລະ ເລີ່ມໃຫ້ຄວາມຮູ້ກ່ຽວກັບສຸຂະນາໄມ (ນ້ຳສະອາດເພື່ອສຸຂະພາບທີ່ດີ, ຂີ້ເຫຍື້ອ, ການເຮັດອະນາໄມ, ...)

ທີມທີ 2 ຖ່າຍຮູບສະພາບແວດລ້ອມຂອງບ້ານ (ບ່ອນເປິເປື້ອນ, ຂີ້ເຫຍື້ອ, ...). ຈາກນັ້ນຈັດຮູບພາບເຂົ້າເປັນ PowerPoint ເພື່ອນຳສະເໜີ

2. *ພາກຄ່ຳ*: ຈັດກອງປະຊຸມຮ່ວມກັບຊຸມຊົນທັງໝົດ (ເດັກນ້ອຍຕັ້ງແຕ່ຊັ້ນ ป 5 ຂຶ້ນໄປ, ຜູ້ສູງອາຍຸແລະຜູ້ໃຫຍ່ໝົດທຸກຄົນ).
ກອງປະຊຸມນີ້ສາມາດເລີ່ມປະມານ 19:00ໂມງ ຫຼັງຈາກສະມາຊິກຊຸມຊົນກິນເຂົ້າແລງແລ້ວ.

ການສົນທະນາແມ່ນໄດ້ຈັດຂຶ້ນກ່ຽວກັບກິດຈະກຳແຜນນ້ຳປອດໄພ ແລະ ສຸຂະອະນາໄມໂດຍຜ່ານການຖາມ-ຕອບ. ວິດີໂອທີ່ກ່ຽວຂ້ອງກັບສຸຂະອະນາໄມ ແລະ ໂພຊະນາການອາດຖືກນຳມາໃຊ້ໃນກິດຈະກຳນີ້.

ມື້ທີ 2

ພາກເຊົ້າ: ເຊີນແຕ່ລະຄອບຄົວທັງຊາຍ ແລະ ຍິງເຂົ້າຮ່ວມເພື່ອເລີ່ມກິດຈະກຳໃນເວລາ 8: 30 ຫາ 12: 00ມ

- ແນະນຳຜົນກວດຫາສານ coliform ຂອງແຕ່ລະຄົວເຮືອນ. ໃຫ້ສະມາຊິກໃນຊຸມຊົນດຶມກິ່ນຕົວຢ່າງການກວດ coliform. ຈາກນັ້ນອະທິບາຍສີຂອງຂວດທົດສອບ coliform (ດ້ວຍການຄິດໄລ່ປະລິມານຂີ້ເຫຍື້ອໃນບ້ານໂດຍສະເລ່ຍ 0.2 ກລກ/ຄົນ/ມື້). ເຈົ້າສາມາດອະທິບາຍເຖິງປະລິມານຂີ້ເຫຍື້ອຕໍ່ມື້, ຕໍ່ເດືອນ ແລະ ຕໍ່ປີ ແລະ ການປົນເປື້ອນດ້ວຍມື ຫຼື ທາງຜາຊະນະນຳເຊື້ອເປັນຕົ້ນແມ່ນແມງວັນ.
- ອະທິບາຍບົດບາດຂອງຄະນະກຳມະການຄຸ້ມຄອງນ້ຳຂັ້ນບ້ານ (ບົດບາດ, ຄວາມຮັບຜິດຊອບ, ເງື່ອນໄຂ ...)

- ນຳພາເລືອກສະມາຊິກຄະນະກຳມະການ ແລະ ຖ່າຍຮູບຂອງຄະນະກຳມະການເມື່ອເຂົາເຈົ້າຖືກຄັດເລືອກ (***** ເບິ່ງພາກທີ 3 ຢູ່ໜ້າອົງການຈັດຕັ້ງທາງສັງຄົມ***)
- ນຳພາການສົນທະນາພາຍໃນສະມາຊິກຄະນະກຳມະການກ່ຽວກັບລະບຽບການຄຸ້ມຄອງແຜນນ້ຳປອດໄພຂັ້ນບ້ານ
- ນຳສະເໜີ ແລະ ອະທິບາຍແຜນວາດລະບົບນ້ຳຂອງບ້ານຜ່ານ GOOGLE Earth
- ນຳສະເໜີຄວາມສ່ຽງ ແລະ ບັນຫາທີ່ອາດຈະເກີດຂຶ້ນຈາກແຫຼ່ງນ້ຳ ແລະ ສຸຂາພິບານໃນບ້ານ ແລະ ກຳນົດເຂດທີ່ມີຂີ້ເຫຍື້ອພາຍໃນບ້ານ.

ໃນຂັ້ນຕອນນີ້, ຄະນະກຳມະການຄຸ້ມຄອງນ້ຳເປັນພຽງແຕ່ຈຸດປະສານງານຂອງການຈັດຕັ້ງປະຕິບັດການກໍ່ສ້າງ. ສະມາຊິກຈະໄດ້ຮັບການຝຶກອົບຮົມຢ່າງລະອຽດກ່ຽວກັບບົດບາດແລະຄວາມຮັບຜິດຊອບຂອງເຂົາເຈົ້າຫຼັງຈາກການກໍ່ສ້າງສຳເລັດ.

<u>ພາກປະຍ:</u> ຜູ້ເຂົ້າຮ່ວມທັງຊາຍ ແລະ ຍິງຈາກແຕ່ລະຄົວເຮືອນ, ເລີ່ມແຕ່ເວລາ 1: 30 ຫາ 16: 00ມ

- ການກຳນົດບູລິມະສິດທາງດ້ານສຸຂະອະນາໄມ ແລະ ສະພາບແວດລ້ອມດ້ານສຸຂະພາບຢູ່ພາຍໃນບ້ານ (ແຜນປະຕິບັດງານສາມາດເຮັດໄດ້ເຊັ່ນ: ການສ້າງວົງຖ່ານ, ...)
- ຝຶກອົບຮົມທາງດ້ານການເງິນ ແລະ ການບັນຊີໃຫ້ຜູ້ຮັບຜິດຊອບກອງທຶນນ້ຳຂັ້ນບ້ານ
- ຝຶກອົບຮົມເຕັກນິກການສ້ອມແປງ ແລະ ທຳຄວາມສະອາດລະບົບນ້ຳສະອາດ (ການຝຶກອົບຮົມອີກຊຸດໜຶ່ງຈະໄດ້ຮັບການ ຈັດຕັ້ງຂຶ້ນເມື່ອການກໍ່ສ້າງສຳເລັດ)
- ການນຳສະເໜີ ແລະ ການໃຫ້ຄຳແນະນຳກ່ຽວກັບຄວາມປອດໄພໃນລະຫວ່າງການກໍ່ສ້າງ (ນຳໃຊ້ໂປສເຕີ)

ຂໍ້ແນະນຳ

- ແຈ້ງການຫາອົງການຈັດຕັ້ງບ້ານຕ້ອງມີລາຍລະອຽດ, ຊັດເຈນ ແລະ ສົ່ງລ່ວງໜ້າເພື່ອຮັບປະກັນໃຫ້ສະມາຊິກຊຸມຊົນທຸກຄົນໄດ້ເຂົ້າຮ່ວມ
- ປະຊຸມພາຍໃນບ້ານເພື່ອປຶກສາຫາລືກ່ຽວກັບລະບົບນ້ຳສະອາດກ່ອນເລີ່ມການກໍ່ສ້າງແມ່ນມີຄວາມຈຳເປັນໂດຍສະເພາະ ເພື່ອປຶກສາຫາລືກ່ຽວກັບ:
    - ຊາວບ້ານຕ້ອງການຕິດຕັ້ງກົງເຕີ້ນ້ຳໃນລະດັບຄົວເຮືອນ (ບັນຫານີ້ແມ່ນໄດ້ມີການປຶກສາຫາລືກັນແລ້ວໃນຂັ້ນຕອນທຳອິດແຕ່ກໍ່ຕ້ອງໄດ້ຜ່ານການກວດກາກ່ອນເລີ່ມຕົ້ນການກໍ່ສ້າງ).
    - ຈະມີວິທີປະຫຍັດນ້ຳ ແລະ ຄວບຄຸມການນຳໃຊ້ນ້ຳແນວໃດເພື່ອຮັບປະກັນໃຫ້ມີນ້ຳໃຊ້ພຽງພໍຕະຫຼອດປີໃຫ້ກັບທຸກຄົວເຮືອນ
    - ຄວາມສຳຄັນຂອງກອງທຶນນ້ຳເພື່ອສ້ອມແປງ ແລະ ບຳລຸງຮັກສາລະບົບນ້ຳສະອາດ
- ກອັກນ້ຳສາທາລະນະແມ່ນແນະນຳໃຫ້ມີໜ້ອຍລົງເພາະວ່າມັນຍາກທີ່ຈະຄວບຄຸມການບໍລິໂພກນ້ຳ. ຄວາມເປັນເຈົ້າການສ່ວນບຸກຄົນຕ່ຳອາດຈະເຮັດໃຫ້ການເກັບຄ່ານ້ຳຫຼຸດລົງ ແລະ ບໍ່ມີຄວາມເຕັມໃຈທີ່ຈະທຳຄວາມສະອາດພື້ນທີ່
- ຄະນະກຳມະການວາງແຜນກ່ຽວກັບແຜນນ້ຳປອດໄພລວມມີ 8 ຄົນ, ທຸກຄົນຮູ້ໜັງສື. ບັນດາຫົວໜ້າກຸ່ມທີ່ເປັນແມ່ຍິງກໍ່ສາມາດເຂົ້າຮ່ວມໄດ້ເພື່ອເປັນຕົວແທນຂອງແມ່ຍິງພາຍໃນບ້ານ.

ເຊື່ອມຕໍ່ໄປຍັງເອກະສານທີ່ເປັນປະໂຫຍດ:

ເອກະສານຊ້ອນທ້າຍ **23 :** ແຜ່ນຜ້າສາທາລະນະຊົນ

ເອກະສານຊ້ອນທ້າຍ **24 :** ການເຮັດອະນາໄມ ແລະ ສ້ອມແປງລະບົບນ້ຳສະອາດຊຸມຊົນ

ເອກະສານຊ້ອນທ້າຍ **25 :** ແບບຟອມປະເມີນຜົນການວາງແຜນຂອງແຜນນ້ຳປອດປອດໄພຂອງຊຸມຊົນ

ເອກະສານຊ້ອນທ້າຍ **26 :** ຝຶກອົບຮົມດ້ານການບໍລິຫານການເງິນໃຫ້ກັບຄະນະກຳມະການຄຸ້ມຄອງນ້ຳ

ເອກະສານຊ້ອນທ້າຍ **27 :** ແບບຟອມການເງິນສຳລັບກອງທຶນນ້ຳ

ເອກະສານຊ້ອນທ້າຍ **28 :** ການວາງແຜນໆນ້ຳປອດໄພແຕ່ລະຂັ້ນຕອນ

ເອກະສານຊ້ອນທ້າຍ **29 – 32 :** ໂປສເຕີ້ການປູກຈິດສຳນຶກຊຸມຊົນ

ຮູບ 3 : ອະທິບາຍແຜນຄວາມປອດໄພນ້ຳໃຫ້ຊຸມຊົນ

ຮູ – 4: ສາຍວິດີໂອກ່ຽວກັບສຸຂະນາໄມແລະໂພຊະນາການ

ຮູບ 6 : ສະມາຊິກຊຸມຊົນເຫັນດີໃຫ້ກໍ່ສ້າງລະບົບນ້ຳປະປາ

ຮູບ 5 : ອະທິບາຍຄວາມຮັບຜິດຊອບຂອງຄະນະກຳມະການນ້ຳຂັ້ນບ້ານ



ກຳນົດບັນຫາ ແລະ ຄວາມສ່ຽງໃນບ້ານແລະ ຈັດບຸລິມະສິດສຳລັບ ການວາງແຜນຄວາມ ປອດໄພດ້ານນ້ຳຄັ້ງທີໜຶ ງ

ແຜນຄວາມປອດໄພ ດ້ານນ້ຳທຳອິດຂອງບ້ານ ທີ່ຊຸມຊົນສ້າງຂຶ້ນມາ ແລະໄດ້ຮັບອະນຸມັດ ຈາກເຜື່ອນບ້ານ



ວິທີການຄິດໄລ່ຈຳນວນ ອາຈົມໃຂອງບ້ານໃນ1 ວັນ, 1 ເດືອນແລະ 1 ປີ; ບັນຫາການປົນ ເປື້ອນ

ຜົນກວດກາສານ coliform ໃນນ້ຳດື່ມ ຈາກໂຮງງານ.

1. ສີແດງແມ່ນບໍ່ມີ ອາຈົມ.
2. ສີເຫຼືອງແມ່ນມີ ອາຈົມ.

2.9. ການສົ່ງວັດສະດຸ (ຂັ້ນຕອນ 9)

ເຮັດຫຍັງແດ່

- ກະກຽມເງື່ອນໄຂການຂົນສົ່ງ ແລະ ການສົ່ງມອບວັດສະດຸໄປໃຫ້ບ້ານ: ການເກັບຮັກສາ, ເງື່ອນໄຂການຂົນສົ່ງ (ການເຂົ້າເຖິງໝູ່ບ້ານ, ສະພາບເສັ້ນທາງ, ...)
- ກະກຽມເອກະສານສົ່ງມອບຮັບ
- ຮັບປະກັນໃຫ້ຊຸມຊົນມີຄວາມພ້ອມທີ່ຈະເລີ້ມຕົ້ນ (ມີການປະກອບສ່ວນຂອງຊຸມຊົນ, ອະນາໄມພື້ນທີ່ເພື່ອການເກັບຮັກສາ, ສະຖານທີ່ກໍ່ສ້າງ ...)

ເຮັດແນວໃດ

1. ລົງຢ້ຽມຢາມບ້ານກ່ອນການສົ່ງມອບຮັບ

ຢ່າງໜ້ອຍ 3 ວັນກ່ອນການສົ່ງມອບ, ຈຳເປັນຕ້ອງໄດ້ໄປຫາບ້ານເພື່ອຮັບປະກັນວ່າ:

- ທາງບ້ານໄດ້ຮັບແຈ້ງລ່ວງໜ້າແລ້ວກ່ຽວກັບວັນເວລາສົ່ງມອບວັດສະດຸ
- ສະຖານທີ່ເກັບຮັກສາມີຄວາມພ້ອມ, ສະອາດ, ປອດໄພ
- ເຂດສະນາມກໍ່ສ້າງມີຄວາມພ້ອມ, ສະອາດ ແລະ ໄດ້ຮັບການກະກຽມ
- ຊຸມຊົນມີຄວາມພ້ອມ, ສະດວກໃນການປະກອບສ່ວນ (ເປັນເງິນສົດ, ວັດຖຸ, ແຮງງານໄດ້ຮັບການມອບໝາຍ)
- ມີຈຸດປະສານງານທີ່ປອດໄພພາຍໃນບ້ານ ແລະ ມີຄວາມພ້ອມ.

2. ການສົ່ງມອບຮັບວັດສະດຸ

ປະລິມານ ແລະ ຄຸນນະພາບຂອງວັດສະດຸທັງໝົດທີ່ລະບຸໄວ້ໃນ BoQ ຈະຕ້ອງຖືກກວດກາກັບທີ່. ຖ້າວັດສະດຸຫາກສອດຄ່ອງກັບປະລິມານ ແລະ ຄຸນນະພາບຕາມສະເປັນລະອຽດ, ທຸກຝ່າຍຕ້ອງເຊັນໃບຢັ້ງຢືນການສົ່ງມອບຮ່ວມກັນ (ຕົວແທນຫ້ອງ ການສາທາລະນະສຸກເມືອງ, ຕົວແທນໂຄງການ, ຕົວແທນບ້ານ ແລະ ຜູ້ສະໜອງ).

ຖ້າບາງລາຍການຂາດ ຫຼື ບໍ່ໄດ້ຮັບຄຸນນະພາບ, ຈຳເປັນຕ້ອງເຮັດບັນທຶກທີ່ເຊັນໂດຍທຸກພາກສ່ວນ ແລະ ອີງຕາມເງື່ອນໄຂຂອງສັນຍາ (ບໍລິສັດຕ້ອງສະໜອງວັດສະດຸທີ່ຂາດໄປ ຫຼື ປ່ຽນແທນດ້ວຍຄ່າໃຊ້ຈ່າຍຂອງຕົນເອງຖ້າຄຸນນະພາບຂອງວັດສະດຸທີ່ສົ່ງມອບບໍ່ຖືກຕ້ອງກັບ BoQ). ໃນກໍລະນີນີ້, ໂຄງການຈະອອກໃບຢັ້ງຢືນການສົ່ງມອບຮັບໃຫ້ສະເພາະແຕ່ເມື່ອວັດສະດຸໄດ້ຖືກສົ່ງມອບ 100% ຕາມປະລິມານ ແລະ ຄຸນນະພາບທີ່ກຳນົດໄວ້ເທົ່ານັ້ນ.

ເງື່ອນໄຂການເກັບຮັກສາຈະຕ້ອງຖືກປະເມີນ ແລະ ຮັບປະກັນ: ຊີມັງ ແລະ ແທ່ງເຫຼັກຄວນວາງໄວ້ຢູ່ບ່ອນສູງ, ບໍ່ໃຫ້ຖືກຝົນແລະບໍ່ມີຄວາມສ່ຽງທີ່ຈະຖືກລັກ.

3. ການປະກອບສ່ວນເປັນເງິນສົດຂອງຊຸມຊົນ

ໃນກໍລະນີການປະກອບສ່ວນຂອງຊຸມຊົນເປັນເງິນສົດສຳລັບວັດສະດຸ, ໃບຢັ້ງຢືນການຈ່າຍເງິນຈະຕ້ອງໄດ້ເຊັນໂດຍຕົວແທນຂອງຜູ້ສະໜອງ ແລະ ຕົວແທນຂອງບ້ານ; ຊຶ່ງມີຕົວແທນຂອງເມືອງ (ຕົວຢ່າງ: ຫ້ອງການນ້ຳສະອາດ ແລະ ຫ້ອງວ່າການປົກຄອງ ເມືອງ) ແລະ ຕົວແທນຂອງໂຄງການ/ຄູ່ຮ່ວມພັດທະນາເປັນພະຍານ.

ເຊື່ອມຕໍ່ໄປຍັງເອກະສານທີ່ເປັນປະໂຫຍດ:

ເອກະສານຊ້ອນທ້າຍ 34: ໃບສິ່ງມອບວັດສະດຸກໍ່ສ້າງລະບົບນ້ຳສະອາດ

ເອກະສານຊ້ອນທ້າຍ 35: ໃບຢັ້ງຢືນການສິ່ງມອບ

ເອກະສານຊ້ອນທ້າຍ 36: ໃບຢັ້ງຢືນການຈ່າຍເງິນປະກອບສ່ວນຂອງຊຸມຊົນ

ເງື່ອນໄຂການເກັບຮັກສາທີ່ດີ

ວັດສະດຸກໍ່ສ້າງທີ່ສິ່ງມອບຕ້ອງກົງກັບລາຍລະອຽດໃນ BoQ : ຕ້ອງມີການກວດເຊັກປະລິມານແລະຄຸນນະພາບ

ຖ້າບໍ່ມີສະຖານທີ່ເກັບຮັກສາຢູ່ພາຍໃນບ້ານ; ຊີມັ້ງສາມາດເກັບມ້ຽນໄວ້ກ້ອງເຮືອນກໍ່ໄດ້ແຕ່ຕ້ອງຮອງພື້ນຂຶ້ນສູງແລະໃຊ້ແຜ່ນຢາງປົກ

ຖ້າບໍ່ມີສະຖານທີ່ເກັບຮັກສາຢູ່ພາຍໃນບ້ານ; ສາຍທໍ່ສາມາດເກັບມ້ຽນໄວ້ກ້ອງເຮືອນກໍ່ໄດ້ແຕ່ບໍ່ໃຫ້ຖືກແສງແດດແລະໃນບ່ອນທີ່ໄກຈາກເດັກ

ຊາຍຫຼືຫີນຄວນກອງໄວ້ໃນບ່ອນທີ່ຮາບພຽງແລະໃຊ້ວັດສະດຸປົກໄວ້ເພື່ອຫຼີກເວັ້ນຝົນ, ຫ້າມບໍ່ໃຫ້ເດັກນ້ອນຫຼິ້ນໃນທີ່ນັ້ນ.

2.10. ການດຳເນີນການກໍ່ສ້າງ ແລະ ຕິດຕາມກວດກາ (ຂັ້ນຕອນ 10)

ນິຍາມ:

ການກໍ່ສ້າງເປັນວຽກຫຼັກທີ່ຕ້ອງການງົບປະມານ, ເວລາ, ແຮງງານ, ຄວາມຮູ້ດ້ານວິຊາການ, ການກະກຽມພື້ນທີ່ກໍ່ສ້າງ ແລະ ການແກ້ໄຂບັນຫາກ່ອນທີ່ມັນຈະເລີ່ມການກໍ່ສ້າງ. ການຕິດຕາມການກໍ່ສ້າງມີຈຸດປະສົງເພື່ອແນ່ໃສ່ຮັບປະກັນໃຫ້ການກໍ່ສ້າງເປັນໄປຕາມແບບກໍ່ສ້າງທີ່ໄດ້ອອກແບບມາເບື້ອງຕົ້ນ ແລະ /ຫຼື ດັດແກ້ໃຫ້ເໝາະສົມໄດ້ຖ້າໃນການຈັດຕັ້ງປະຕິບັດຕົວຈິງຫາກພົບວ່າມີຂໍ້ຈຳກັດ.

ເຮັດຫຍັງແດ່

1. ***ການແຕ່ງຕັ້ງພະນັກງານເພື່ອຕິດຕາມການກໍ່ສ້າງພາກສະນາມປະຈຳວັນ***

ແນະນຳໃຫ້ແຕ່ງຕັ້ງພະນັກງານນ້ຳສະອາດ 1 ຄົນໄປປະຈຳຢູ່ກັບບ້ານໃນຊ່ວງເວລາການກໍ່ສ້າງເພື່ອກຳກັບດູແລການກໍ່ສ້າງປະຈຳວັນ.

2. ***ຈັດກອງປະຊຸມປະຖົມນິເທດໃຫ້ກັບພະນັກງານທີ່ຮັບຜິດຊອບຕິດຕາມວຽກກໍ່ສ້າງພາກສະນາມ:***

ໃນກອງປະຊຸມ, ຈະໄດ້ອະທິບາຍກ່ຽວກັບການວາງແຜນການຈັດຕັ້ງປະຕິບັດ, ຫຼັກການປົກປ້ອງ ແລະ ຮັກສາຄວາມປອດໄພໃຫ້ເດັກ, ການນຳໃຊ້ບັນຊີກວດເຊັກແລະປຶ້ມບັນທຶກໃຫ້ກັບເຈົ້າໜ້າທີ່ນ້ຳສະອາດ.

ຄວາມປອດໄພເປັນສິ່ງສຳຄັນ: ຕ້ອງມີການປ້ອງກັນຄວາມສ່ຽງຕະຫຼອດເວລາໃນຈຸດປະສານງານດ້ານຄວາມປອດໄພຂອງບ້ານແລະທີມງານຕິດຕາມກວດກາ

3. ***ດັດແກ້ແຜນການກໍ່ສ້າງໃຫ້ແທດເໝາະຕາມວັນທີຂອງການສົ່ງມອບ ແລະ ສະພາບຕົວຈິງຂອງບ້ານ (ຄວາມພ້ອມ, ສະພາບອາກາດ, ...)***

ກ່ອນເລີ່ມການກໍ່ສ້າງໃນພາກສະນາມ, ສິ່ງສຳຄັນແມ່ນຕ້ອງຮັບປະກັນໃຫ້ຄະນະກຳມະການຄຸ້ມຄອງນ້ຳ ແລະ ພະນັກງານຮັບຜິດຊອບການຕິດຕາມກວດກາເຂົ້າໃຈແຜນການກໍ່ສ້າງ. ມັນອາດຈະຕ້ອງມີການປັບຄວາມເໝາະສົມບາງຢ່າງ (ໃນກໍລະນີທີ່ມີການຈັດຜິດທີ່ຢູ່ໃນບ້ານ, ເຫດການທີ່ບໍ່ຄາດຄິດ, ຝົນຕົກໜັກຫຼາຍວັນ,...)

4. ***ການຕິດຕາມປົກກະຕິ (ໂທຕິດຕາມ)***

ການສົນທະນາແບບປົກກະຕິ (ຕົວຢ່າງໃນທຸກໆ 3 ວັນ) ໂດຍໃຊ້ໂທລະສັບຫາກັນລະຫວ່າງນາຍບ້ານ ແລະ ພະນັກງານພາກສະນາມ (ແລະ ຊ່ຽວຊານ WASH) ເພື່ອປຶກສາຫາລືກ່ຽວກັບຄວາມຄືບໜ້າຂອງການກໍ່ສ້າງ. ຖ້າບັນຫາໃດໜຶ່ງຫາກຖືກພົບເຫັນ , ມັນອາດຈະຕ້ອງດັດແກ້ແຜນ ແລະ /ຫຼື ແກ້ແບບກໍ່ສ້າງ. ການຮ່ວມມືຢ່າງໃກ້ຊິດແມ່ນມີຄວາມສຳຄັນຫຼາຍໃນຂັ້ນຕອນນີ້.

5. ***ວາງແຜນການຕິດຕາມລ່ວງໜ້າເພື່ອກວດວຽກສຳເລັດ 50% ແລະ 100%***

ພາຍຫຼັງໄລຍະເວລາ **30** ວັນ, ຕ້ອງໄດ້ຈັດການລົງຕິດຕາມສະນາມກໍ່ສ້າງເພື່ອປະເມີນຄວາມຄືບໜ້າ: ການກໍ່ສ້າງຫ້ອງນ, ການວາງທໍ່ສົ່ງ (ທໍ່ແມ່) ແຕ່ຫ້ອງນໄປຫາອ່າງເກັບນ້ຳ, ສາຍທໍ່ຫຼັກທີ່ຕິດຕັ້ງກັບເຫຼັກທໍ່ຂ້າມຄອງ, ສາຍກາບຂ້າມແມ່ນ້ຳ, ວາວອາກາດ, ວາວຕະກອນ, ອ່າງຫຼຸດຄວາມດັນຂອງນ້ຳໃນທໍ່.

ຫຼັງຈາກ 30 ວັນແລ້ວ, ການກໍ່ສ້າງສາມາດສືບຕໍ່ດ້ວຍ: ອ່າງເກັບນ້ຳ ແລະ ສາຍທໍ່ແຈກນ້ຳຈາກອ່າງເກັບນ້ຳໄປຫາບ້ານ, ກອັກນ້ຳສາທາລະນະ ຫຼື ຈຸດຕໍ່ກົ໊ງເຕົ້ານ້ຳສ່ວນຕົວປະຈຳແຕ່ລະຄົວເຮືອນ.

ຂໍ້ແນະນຳ

ວຽກກໍ່ສ້າງເປັນວຽກຫຼັກທີ່ຕ້ອງການການຮ່ວມມື ແລະ ການສື່ສານທີ່ດີລະຫວ່າງທຸກພາກສ່ວນທີ່ກ່ຽວຂ້ອງ. ຖ້າພົບປະເຄັ່ນ ຫຼື ບັນຫາ, ບ້ານ ແລະ ເພະນັກງານຈະຮູ້ສຶກໝັ້ນໃຈທີ່ຈະແຈ້ງໃຫ້ກັບຊ່ຽວຊານ WASH ໄວເທົ່າທີ່ຈະໄວໄດ້ເພື່ອຊອກຫາວິທີແກ້ໄຂໃນທັນທີ.

ການອະທິບາຍໃນສະນາມແມ່ນມີຄວາມຈຳເປັນ

ສະຖານທີ່ເໝາະສົມໃນການປະສົມປຸນເພື່ອສ້າງຫ້ວງານ

ການເຮັດວຽກໃນລະດູຝົນໂດຍໃຊ້ແຜ່ນຢາງປລາສຕິກປົກຄຸມວັດສະດຸກໍ່ສ້າງໂດຍສະເພາະຊີມັງ

ການເທພື້ນຄອນກີດຫຍາບຖານຂອງອ່າງເກັບນ້ຳ. ມັນເປັນສິ່ງຈຳເປັນແລະຕ້ອງໄດ້ເຮັດກ່ອນທີ່ຈະສ້າງໂຄງສ້າງຫຼັກຂອງອ່າງເກັບນ້ຳ.

ການຕີໄມ້ແບບແລະການເທຄອນກຣີດທີ່ດີເພື່ອສ້າງອ່າງເກັບນ້ຳ

ການຕີໄມ້ແບບທີ່ດີແລະແຂງແຮງໃນເງື່ອນໄຂທີ່ປອດໄພກ່ອນເທ
ຄອນກຣີດອ່າງເກັບນ້ຳ

ຫ້ອງຄອນກຣີດ
ເສີມເຫຼັກເພື່ອປ້ອງ
ກັນວາວອາກາດ

ຫ້ອງຄອນກຣີດ
ປ້ອງກັນວາວຕະ
ກອນ

2.11. ການກວດວຽກ 50 % ແລະ 100 % (ຂັ້ນຕອນ 11)

ນິຍາມ:

ການກວດກາວຽກກໍ່ສ້າງມີເປົ້າໝາຍເພື່ອຕິດຕາມຄວາມຄືບໜ້າຂອງວຽກກໍ່ສ້າງ, ກວດກາຄຸນນະພາບຂອງວຽກ ແລະ ວິທີການແກ້ໄຂບັນຫາທີ່ອາດຈະເກີດຂຶ້ນໃນລະຫວ່າງການກໍ່ສ້າງ. ການກວດວຽກ 50% ແລະ 100% ເປັນຂັ້ນຕອນທີ່ສຳຄັນຫຼາຍ: ການກວດວຽກທີ່ສຳເລັດໃນລະດັບ 50% ມີຈຸດປະສົງເພື່ອຮັບປະກັນວ່າການກໍ່ສ້າງແມ່ນສຳເລັດຕາມແຜນການ (ໃນລະດັບ 50%) ແລະ ດັດແປງມັນຖ້າຈຳເປັນ; ການກວດວຽກ 100% ມີຈຸດປະສົງເພື່ອຮັບປະກັນວ່າລະບົບທີ່ກໍ່ສ້າງຂຶ້ນມານັ້ນໃຊ້ງານໄດ້ກ່ອນທີ່ຈະມອບໃຫ້ຊຸມຊົນ.

ເຮັດຫຍັງແດ່

1. ***ການເຮັດບົດລາຍງານ***

ວິຊາການນ້ຳສະອາດທີ່ຖືກແຕ່ງຕັ້ງຢູ່ໃນບ້ານຈະຕ້ອງລາຍງານສະພາບການຈັດຕັ້ງປະຕິບັດໃຫ້ຫ້ອງການສາທາລະນະສຸກເມືອງ ແລະ ໂຄງການໄດ້ຮັບຊາບ. ບົດລາຍງານຈະຕ້ອງມີລາຍເຊັນຂອງນາຍບ້ານພ້ອມປະທັບກາ.

ຖ້າຫາກການກໍ່ສ້າງຫ້ອງນ ແລະ ການວາງທໍ່ສິ່ງ (ທໍ່ແມ່) ຫາກສຳເລັດ, ຈະຕ້ອງໄດ້ກວດກາຄວາມຄືບໜ້າການກໍ່ສ້າງ 50%.

ຖ້າການກໍ່ສ້າງລະບົບຫ້ອງນສຳເລັດໃນທຸກຈຸດຕາມແຜນ, ຈະຕ້ອງໄດ້ກວດວຽກສຳເລັດ 50%.

2. ***ຈັດຕັ້ງການລົງຢ້ຽມຢາມ***

ຫຼັງຈາກໄດ້ຮັບບົດລາຍງານແລ້ວ, ຫ້ອງການສາທາລະນະສຸກເມືອງ ແລະ ພະນັກງານໂຄງການຕ້ອງໄດ້ຈັດຕັ້ງການໄປຢ້ຽມຢາມຮ່ວມກັບຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງເຊັ່ນ (ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ...). ການກວດກາຈຳເປັນຕ້ອງກວດກາທຸກຈຸດຂອງລະບົບນ້ຳນັບແຕ່ຫ້ວງນໄປຕາມແລວທໍ່ນ້ຳແຕ່ຫ້ວງນໄປຫາອ່າງເກັບນ້ຳ, ອ່າງເກັບນ້ຳ, ທໍ່ແຈກຈ່າຍ, ກອັກນ້ຳສາທາລະນະ ແລະ ການຕິດຕັ້ງກົງເຕີ້ນ້ຳໃນແຕ່ລະຄົວເຮືອນ.

3. ***ຂໍ້ແນະນຳແລະທິດທາງສຳລັບຂັ້ນຕອນຕໍ່ໄປ***

ສາມາດໃຫ້ຄຳສະເໜີປັບປຸງລະບົບໄດ້. ຂໍ້ສະເໜີດັ່ງກ່າວຈະຕ້ອງຖືກບັນທຶກແລະລົງລາຍເຊັນພ້ອມທັງເອກະສານຢັ້ງຢືນການສຳເລັດວຽກຕາມແຜນການ.

ຂໍ້ແນະນຳ

ທຸກກິດຈະກຳຂອງການກໍ່ສ້າງຕ້ອງຜ່ານຂະບວນການກວດກາເພື່ອຮັບປະກັນຄຸນນະພາບທີ່ດີຂອງວຽກ. ເຈົ້າຂອງໂຄງການ ແລະ ຄູ່ຮ່ວມພັດທະນາຮັບຜິດຊອບການຕິດຕາມ ແລະ ກວດກາເປັນປົກກະຕິ.

ເຊື່ອມໂຍງກັບເອກະສານທີ່ສຳຄັນຄື:

ເອກະສານຊ້ອນທ້າຍ 38: ແບບຟອມກວດກາວຽກກໍ່ສ້າງລະບົບນ້ຳສະອາດສຳເລັດ 50%

ເອກະສານຊ້ອນທ້າຍ 39: ແບບຟອມກວດກາວຽກກໍ່ສ້າງລະບົບນ້ຳສະອາດສຳເລັດ100%

ການຕິດຕາມກວດກາການກໍ່ສ້າງລະບົບນ້ຳສະອາດໂດຍ ພະນັກງານເມືອງກໍ່ແມ່ນແຫຼ່ງແຮງຈູງໃຈໃຫ້ກັບບ້ານ. ສະຖານທີ່ກໍ່ສ້າງກໍ່ມີຄວາມສຳຄັນຄືກັນ (ຢູ່ທີ່ນີ້ພວກເຮົາເຫັນໄມ້ແບບ, ຖົງຊີມັງ ແລະ ຕະປູຢູ່ໃນໄມ້ໃນເວລາຕີແບບ).

ບ້ານແຂມກໍແມ່ນບ້ານຊົນເຜົ່າອາຄ່າໃນເມືອງບຸນເໜືອທີ່ໄດ້ຖືກຍົກຍ້າຍໄປຢູ່ບ່ອນໃໝ່ທີ່ຕ່ຳກວ່າເກົ່າເພື່ອໃຫ້ເຂົ້າເຖິງນ້ຳ, ຍ້ອນການສະໜັບສະໜູນຈາກໂຄງການ SCALING.

ຮູບຂ້າງເທິງແຕ່ຊ້າຍຫາຂວາແມ່ນ:

1. ໜ້າປັດກົງເຕີ້ນ້ຳໃນສະພາບທີ່ດີ ແລະ ສະອາດ, ພວກເຮົາສາມາດອ່ານຕົວເລກໄດ້ງ່າຍ.
2. ກົງເຕີ້ນ້ຳຄວນໄດ້ຮັບການປ້ອງກັນ ແລະ ບໍ່ໃຫ້ຢູ່ໃກ້ກັບນ້ຳເກີນໄປ (ອັນນີ້ບໍ່ແມ່ນຕົວຢ່າງທີ່ດີ)
3. ຂໍແນະນຳໃຫ້ວ່າພື້ນທີ່ຄວນຈະກວ້າງພໍສົມຄວນເພື່ອເກັບນ້ຳຈາກກອັກນ້ຳ

ການລົງກວດກາລະບົບນ້ຳສະອາດເທື່ອສຸດທ້າຍຢູ່ບ້ານບຸນຊາງ, ເມືອງບຸນເໜືອ, ແຂວງຜົ້ງສາລີຂອງຄະນະກຳມະການຈາກ ຫ້ອງການທີ່ກ່ຽວຂ້ອງແລະທີມງານໂຄງການ SCALING

ການລົງຕິດຕາມກວດກາຢູ່ບ້ານສີດາ, ເມືອງນ້ຳທາ, ແຂວງຫຼວງນ້ຳ ທາຂອງຄະນະກຳມະການຈາກຂະ ແໜ່ງນ້ຳສະອາດຂັ້ນເມືອງ, ແຂວງ ແລະ ທີມງານໂຄງການ SCALING

ການລົງກວດກາລະບົບນ້ຳສະອາດຄັ້ງສຸດທ້າຍຢູ່ບ້ານແຂ້ມກໍ, ເມືອງ ບຸນເໜືອ, ແຂວງຜົ້ງສາລີຂອງຄະນະກຳມະການຈາກຫ້ອງການທີ່ ກ່ຽວຂ້ອງ ແລະທີມງານໂຄງການ SCALING.

ການລົງກວດກາລະບົບນ້ຳສະອາດເທື່ອສຸດທ້າຍຢູ່ບ້ານພົງເຊກ, ເມືອງຜົ້ງສາລີ, ແຂວງຜົ້ງສາລີຂອງຄະນະກຳມະການຈາກຫ້ອງການ ທີ່ກ່ຽວຂ້ອງ ແລະທີມງານໂຄງການ SCALING.

2.12. ການມອບໃຫ້ຊຸມຊົນ (ຂັ້ນຕອນ 12)

ນິຍາມ:

ການມອບແມ່ນການຢັ້ງຢືນຢ່າງເປັນທາງການຂອງການສຳເລັດການກໍ່ສ້າງລະບົບນ້ຳສະອາດ ແລະ ການມອບໂອນກຳມະສິດໃຫ້ຊຸມຊົນເປັນຜູ້ນຳໃຊ້ ແລະ ເປັນເຈົ້າຂອງໂຄງການ. ການມອບດັ່ງກ່າວມີຈຸດປະສົງເພື່ອມອບຄວາມຮັບຜິດຊອບທັງໝົດຕໍ່ກັບລະບົບນ້ຳສະອາດໃຫ້ກັບຊຸມຊົນ (ເພື່ອຄຸ້ມຄອງ, ການບຳລຸງຮັກສາ, ການປົກປັກຮັກສາແຫຼ່ງນ້ຳ, ການອະນຸລັກສິ່ງແວດລ້ອມເຂດແຫຼ່ງນ້ຳ).

ເຮັດແນວໃດ

ຜູ້ເຂົ້າຮ່ວມ: ຊຸມຊົນ (ທັງໝົດ); ເຈົ້າເມືອງ/ຮອງເຈົ້າເມືອງ, ຕົວແທນບັນດາຫ້ອງການທີ່ກ່ຽວຂ້ອງພາຍໃນເມືອງ (ຫ້ອງການສາທາ, ຫ້ອງການກະສິກຳ ແລະ ປ່າໄມ້, ສະຫະພັນແມ່ຍິງລາວ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ...) ແລະ ຕົວແທນຈາກໂຄງການ.

ວາລະພິທີ:

1. **ຄຳປາໃສນຳສະເໜີ:** ນາຍບ້ານ, ເຈົ້າເມືອງ, ຕົວແທນຫ້ອງການສາທາເມືອງ ແລະ ຕົວແທນໂຄງການ
2. **ການສະເໜີລະບົບນ້ຳສະອາດ**, ໂດຍວິຊາການຮັບຜິດຊອບກຳກັບດູແລການກໍ່ສ້າງ: ສະຫຼຸບຄືນຂະບວນການກໍ່ສ້າງ, ລາຍລະອຽດການກໍ່ສ້າງລະບົບນ້ຳສະອາດ (ໄລຍະເວລາການກໍ່ສ້າງ, ຈຸດດີ ແລະ ບັນຫາທີ່ພົບໃນເວລາກໍ່ສ້າງ).
3. **ຂໍ້ແນະນຳ**

   ໂດຍຕົວແທນໂຄງການ: ຫຼັງຈາກການສະເໜີກິດຈະກຳແລະຈຸດປະສົງຂອງໂຄງການ, ຜູ້ກ່ຽວສາມາດໃຫ້ຂໍ້ແນະນຳແກ່ບ້ານ ແລະ ຄູ່ຮ່ວມງານຝ່າຍລັດຖະບານກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ລະບົບນ້ຳສະອາດ ແລະ ການປົກປັກຮັກສາແຫຼ່ງນ້ຳໃນອະນາຄົດ.

   ຮອງເຈົ້າເມືອງ ຫຼື ຕົວແທນຫ້ອງວ່າການປົກຄອງເມືອງ: ສາມາດໃຫ້ທິດຊີ້ນຳແກ່ບ້ານ ແລະ ການນຳໃຊ້ລະບົບນ້ຳສະອາດ, ແລະ ຄວາມສຳຄັນຂອງວຽກງານດ້ານສຸຂະນາໄມ (ການນຳໃຊ້ນ້ຳສະອາດ ແລະ ວິດຖ່າຍຂອງທຸກໆຄອບຄົວພາຍ ໃນບ້ານ).

ຂໍ້ແນະນຳ

ພິທີມອບ-ຮັບແມ່ນມີຄວາມສຳຄັນຫຼາຍ: ມັນເປັນໂອກາດດີສຳລັບອຳນາດການປົກຄອງເມືອງ ແລະ ພາກສ່ວນກ່ຽວຂ້ອງທີ່ຈະໄດ້ເຂົ້າໃຈບັນຫາທີ່ຊຸມຊົນປະສົບຢູ່ໃນເຂດຫ່າງໄກສອກຫຼີກແລະນັ້ນໝາຍເຖິງຄວາມຮັບຜິດຊອບຂອງລັດຖະບານ (ການອະນຸລັກຮັກສາສິ່ງແວດລ້ອມ ແລະ ປ້ອງກັນມົນລະພິດ,...). ມັນຍັງມີຄວາມສຳຄັນສຳລັບຊຸມຊົນທີ່ຈະເຂົ້າໃຈຄວາມເປັນເຈົ້າຂອງເຂົາ ເຈົ້າຕໍ່ກັບລະບົບນ້ຳສະອາດ ແລະ ການຢືນຢັດຕໍ່ຄວາມຮັບຜິດຊອບທັງໝົດຂອງເຂົາເຈົ້າ. ການມີສ່ວນຮ່ວມຂອງແມ່ຍິງໃນຊຸມຊົນແມ່ນມີຄວາມສຳຄັນຫຼາຍຍ້ອນວ່າເຂົາເຈົ້າມີບົດບາດສຳຄັນທີ່ກ່ຽວຂ້ອງກັບການນຳໃຊ້ນ້ຳໃນຊຸມຊົນ (ການໄປຕັກນ້ຳ, ວຽກເຮືອນແມ່ນເປັນຫຼັກ,...)

ເຊື່ອມໂຍງກັບບັນດາເອກະສານທີ່ສຳຄັນຄື:

ເອກະສານຊ້ອນທ້າຍ 40 : ການມອບໂຄງການໃຫ້ກັບຊຸມຊົນ

2.13. ການຕິດຕາມຫຼັງຈາກການນຳໃຊ້ 6 ເດືອນ (ຂັ້ນຕອນ 13)

ນິຍາມ:
ການຕິດຕາມ ແລະ ການປະເມີນການປະຕິບັດແຜນນ້ຳປອດໄພໃນຊຸມຊົນແມ່ນສອດຄ່ອງກັບການປະເມີນການນຳໃຊ້ລະບົບນ້ຳປະປາພາຍຫຼັງ 6 ເດືອນທີ່ເປີດນຳໃຊ້. ຈຸດປະສົງກໍ່ເພື່ອກຳນົດສິ່ງທີ່ຊຸມຊົນບໍ່ສາມາດຈັດຕັ້ງປະຕິບັດແຜນນ້ຳປອດໄພໃນເບື້ອງຕົ້ນໄດ້.

ເຮັດແນວໃດ

1. ປະເມີນຜົນແຜນນ້ຳປອດໄພ

ຫ້ອງການສາທາລະນະສຸກເມືອງ ແລະ ບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງມີຄວາມຮັບຜິດຊອບໃນການປະເມີນແຜນນ້ຳປອດໄພພາຍຫຼັງການມອບຮັບ.

ທີມງານຂັ້ນເມືອງ, ອຳນາດການປົກຄອງບ້ານ ແລະ ຄະນະກຳມະການວາງແຜນນ້ຳປອດໄພຂອງບ້ານຈະສຳຫຼວດລະບົບນ້ຳປະປາຕັ້ງແຕ່ເຂດແຫຼ່ງນ້ຳໄປຫາຫົວງານ, ລະບົບທໍ່ສົ່ງນ, ນ້ຳຢູ່ອ່າງເກັບນ້ຳ, ທໍ່ແຈກນ້ຳໃນບ້ານ, ການນຳໃຊ້ນ້ຳ ແລະ ສິ່ງແວດລ້ອມຂອງບ້ານ. ການປະເມີນໃນແຕ່ລະຈຸດ, ທີມງານຕ້ອງໃຊ້ແບບຟອມບັນທຶກຂໍ້ມູນ.

2. ຄຳເຫັນ ແລະ ຂໍ້ແນະນຳໃຫ້ກັບບ້ານ

ທີມງານ ແລະ ອົງການປົກຄອງບ້ານຈະຕ້ອງໄດ້ປຶກສາຫາລືກັນກ່ຽວກັບບັນຫາທີ່ໄດ້ພົບເຫັນ ແລະ ວາງແຜນນ້ຳປອດໄພຮອບທີສອງເພື່ອຊອກຫາວິທີແກ້ໄຂ.

ມື້ຕໍ່ມາ, ກໍ່ໄດ້ຈັດກອງປະຊຸມກັບຊາວບ້ານທັງໝົດເພື່ອນຳສະເໜີຜົນໄດ້ຮັບ ແລະ ໃຫ້ຂໍ້ແນະນຳຕໍ່ຊຸມຊົນຄືນ.

ຂໍ້ແນະນຳ

ການຕິດຕາມ ແລະ ການປະເມີນຜົນຫຼັງຈາກການມອບ-ຮັບແມ່ນມີຄວາມສຳຄັນ ແລະ ຕ້ອງໄດ້ເຮັດຢ່າງໜ້ອຍ 6 ເດືອນຫຼັງຈາກການນຳໃຊ້ນ້ຳ. ຫ້ອງການສາທາລະນະສຸກເມືອງ ແລະ ບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງຄວນໃຫ້ຄວາມສຳຄັນ ແລະ ຊຸກຍູ້ໃຫ້ຊຸມຊົນເພີ່ມຄວາມເປັນເຈົ້າການຂອງເຂົາເຈົ້າເທື່ອລະກ້າວ, ແຕ່ນີ້ເປັນຂະບວນການທີ່ໃຊ້ເວລາຍາວນານຊຶ່ງຕ້ອງຈຳເປັນຕ້ອງໄດ້ໃຫ້ການສະໜັບສະໜູນຊຸມຊົນ.

ເຊື່ອມໂຍງກັບບັນດາເອກະສານທີ່ສຳຄັນຄື:

ເອກະສານຊ້ອນທ້າຍ 41: ແບບຟອມປະເມີນສຳລັບການວາງແຜນນ້ຳປອດໄພຂອງຊຸມຊົນ

3. ການສະໜັບສະໜຸນຂອງການຈັດຕັ້ງທາງສັງຄົມໃຫ້ແກ່ຄະນະກຳມະການຄຸ້ມຄອງນ້ຳ

3.1. ຄະນະກຳມະການຄຸ້ມຄອງນ້ຳແມ່ນຫຍັງ ?

ຄະນະກຳມະການຄຸ້ມຄອງນ້ຳປະກອບດ້ວຍ 8 ທ່ານທີ່ຖືກຄັດເລືອກພາຍໃນຊຸມຊົນ, ຄະນະນີ້ມີໜ້າທີ່ຮັບຜິດຊອບແຜນນ້ຳປອດໄພ , ການຄຸ້ມຄອງ ແລະ ການບຳລຸງຮັກສາລະບົບນ້ຳສະອາດຂັ້ນບ້ານ.

ຄະນະກຳມະການຄຸ້ມຄອງນ້ຳຕ້ອງຮັບປະກັນໃຫ້:

- ຊຸມຊົນໄດ້ມີນຳໃຊ້ເປັນປົກກະຕິ ແລະ ມີນ້ຳສະອາດທີ່ເໝາະສົມ,
- ໃຫ້ໝົດທຸກຄົນມີນ້ຳໃຊ້
- ມີນ້ຳທີ່ປອດໄພເພື່ອສຸຂະພາບ
- ແຫຼ່ງນ້ຳໄດ້ຮັບການອະນຸລັກ
- ລະບົບນ້ຳສະອາດໄດ້ຮັບການປົກປັກຮັກສາ, ບຳລຸງຮັກສາ
- ໝົດທຸກຄົນຕ້ອງຊຳລະຄ່ານ້ຳຕາມການຊົມໃຊ້ນ້ຳຂອງແຕ່ລະຄົວເຮືອນ

ຄະນະກຳມະການຄຸ້ມຄອງນ້ຳປະກອບມີ: ປະທານ 1 ທ່ານ, ຮອງປະທານ 1 ທ່ານ, ພະນັກງານບັນຊີ 1 ທ່ານ, ຜູ້ຮັບຜິດຊອບດ້ານການເງິນ 1 ທ່ານ, ຜູ້ຮັບຜິດຊອບໃຫ້ຄຳປຶກສາຫາລື 1 ທ່ານ, ຜູ້ຮັບຜິດຊອບດ້ານຄວາມປອດໄພ 1 ທ່ານ ແລະ ນັກວິຊາການ 2 ທ່ານ. ແຕ່ລະຕຳແໜ່ງແມ່ນກ່ຽວຂ້ອງກັບຄວາມຮັບຜິດຊອບ, ຢ່າງໜ້ອຍຈະຕ້ອງມີເພດຍິງ 2 ທ່ານເພື່ອຮັບປະກັນການເປັນຕົວແທນໃຫ້ແກ່ແມ່ຍິງ. ຕົວເລກ ແລະ ຕາຕະລາງລຸ່ມນີ້ສະແດງລາຍລະອຽດຂອງການຈັດຕັ້ງແລະຄວາມຮັບຜິດຊອບ.

ກຸ່ມຜູ້ໃຊ້ນຳໃຊ້ນ້ຳໄດ້ຖືກສ້າງຕັ້ງຂຶ້ນພາຍໃນບ້ານ (ປະມານ 10 ຫາ 15 ຄົວເຮືອນ) ເພື່ອຄວາມສະດວກໃນການຄຸ້ມຄອງ ການນຳໃຊ້ ນ້ຳ ແລະ ລະບົບນ້ຳສະອາດ.



ຮູບ 7: ໂຄງຮ່າງການຈັດຕັ້ງຄະນະກຳມະການຄຸ້ມຄອງນ້ຳ

ພາລະບົດບາດ ແລະ ຄວາມຮັບຜິດຊອບ

ປະທານ	ການປະສານງານ ແລະ ການປຶກສາຫາລືກັບຊຸມຊົນ ແລະ ຫ້ອງການສາທາລະນະສຸກເມືອງ (ນ້ຳສະອາດ) ແລະ ບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງ.
	ຊອກຫາແຫຼ່ງທຶນສຳລັບກອງທຶນແຜນນ້ຳປອດໄພ.
	ລາຍງານຢ່າງເປັນປົກກະຕິໃຫ້ກັບນ້ຳສະອາດກ່ຽວກັບບັນຫາ ແລະ ສະພາບຂອງແຜນນ້ຳປອດໄພ
	ເຜີຍແຜ່ກິດລະບຽບການຄຸ້ມຄອງ ແລະ ການນຳໃຊ້ລະບົບນ້ຳສະອາດໃຫ້ປະຊາຊົນໄດ້ຮັບຮູ້ແລະເຂົ້າໃຈ.
	ຈັດກອງປະຊຸມເພື່ອປຶກສາຫາລື ແລະ ແກ້ໄຂບັນຫາ, ຂໍ້ຄົງຄ້າງແລ້ວນຳສະເໜີສະພາບການເງິນ (ລາຍຮັບ/ລາຍຈ່າຍ/ຍອດເຫຼືອ) ຂອງກອງທຶນຕໍ່ກັບຊຸມຊົນທຸກໆເດືອນ.
	ອະນຸມັດການນຳໃຊ້ທຶນເພື່ອສ້ອມແປງ ແລະ ຂະຫຍາຍລະບົບນ້ຳສະອາດໃນບ້ານຖ້າຈຳເປັນ
ຮອງປະທານ	ຊ່ວຍຫົວໜ້າຄະນະກຳມະການໃນການຈັດຕັ້ງປະຕິບັດແຜນນ້ຳປອດໄພ
	ການຕິດຕາມ ແລະ ກວດກາລະບົບນ້ຳສະອາດຢ່າງເປັນປົກກະຕິ
	ຮັບຜິດຊອບດ້ານວິຊາການໃນກໍລະນີລະບົບນ້ຳສະອາດໃນບ້ານຕ້ອງໄດ້ຮັບການສ້ອມແປງ
	ຊີ້ນຳວຽກງານການເງິນ
	ລາຍງານໃຫ້ຫົວໜ້າຖ້າພົບເຫັນບັນຫາ
ທີ່ປຶກສາ	ສະໜັບສະໜູນ ແລະ ສົ່ງເສີມການມີສ່ວນຮ່ວມຂອງບ້ານໃນການກໍ່ສ້າງ, ການຈັດຕັ້ງປະຕິບັດແຜນນ້ຳປອດໄພ
ບັນຊີ/ການເງິນ	ຮັບການຈ່າຍຊຳລະປະຈຳເດືອນຈາກຫົວໜ້າໜ່ວຍງານນ້ຳສະອາດ ຫຼື ຫົວໜ້າກຸ່ມໜ່ວຍ
	ເຮັດບັນຊີລາຍຮັບ ແລະ ລາຍຈ່າຍເປັນປະຈຳເດືອນເດືອນ.
	ດຳເນີນການເບີກຈ່າຍຕາມການສັ່ງຈ່າຍ (PO) ຂອງຫົວໜ້າ.
	ເຮັດລາຍງານການເງິນໃຫ້ຫົວໜ້າທຸກໆເດືອນ
ຜູ້ຮັກສາຄວາມປອດໄພ	ເປັນເຈົ້າການໃນການປ້ອງກັນອຸບັດຕິເຫດທີ່ອາດຈະເກີດຂຶ້ນໃນລະຫວ່າງການກໍ່ສ້າງ ແລະ ຫຼັງຈາກການກໍ່ສ້າງລະບົບນ້ຳສະອາດແລະ ວິດຖ່າຍສຳເລັດຢູ່ໃນບ້ານ.
	ປຸກຈິດສຳນຶກໃນຊຸມຊົນກ່ຽວກັບຄວາມປອດໄພ
	ຕິດຕັ້ງປ້າຍຄວາມປອດໄພຢູ່ສະຖານທີ່ກໍ່ສ້າງ
	ແນະນຳຊາວບ້ານໃຫ້ເຮັດຮົ້ວອ້ອມຮອບສະຖານທີ່ກໍ່ສ້າງ

	ຈັດຕັ້ງການກວດກາຄວາມປອດໄພປະຈຳວັນຢູ່ໃນສະນາມກໍ່ສ້າງໃນລະຫວ່າງການກໍ່ສ້າງ
“ວິຊາການ” ລະບົບນ້ຳສະອາດ	ຕິດຕາມ ແລະ ກວດກາລະບົບນ້ຳສະອາດຂອງບ້ານຢ່າງເປັນປົກກະຕິ.
	ທຳຄວາມສະອາດຫ້ອງການ, ອ່າງເກັບນ້ຳ, ແລະ ທໍ່ນ້ຳສະອາດຂອງລະບົບນ້ຳພາຍໃນບ້ານ
	ປະສານສົມທົບກັບກຸ່ມຂອງກຸ່ມຜູ້ຊົມໃຊ້ນ້ຳ ແລະ ຊຸມຊົນເພື່ອບຳລຸງຮັກສາລະບົບນ້ຳສະອາດຕາມການນຳໃຊ້ ແລະ ແຜນນ້ຳປອດໄພ
	ປະເມີນຄ່າໃຊ້ຈ່າຍສຳລັບການສ້ອມແປງ, ການສ້ອມແປງຂະໜາດນ້ອຍ ແລະ ການບຳລຸງຮັກສາເຄື່ອງມື.
	ລາຍງານໃຫ້ຫົວໜ້າ
ຫົວໜ້າກຸ່ມຜູ້ໃຊ້ນ້ຳ	ຮັບປະກັນໃຫ້ຜູ້ຊົມໃຊ້ນ້ຳໄດ້ຊົມໃຊ້ນ້ຳແບບລຽບງ່າຍ ແລະ ເໝາະສົມ
	ລະດົມສະມາຊິກຜູ້ທີ່ໃຊ້ນ້ຳພາຍໃນກຸ່ມເຂົ້າຮ່ວມກິດຈະກຳບຳລຸງຮັກສາ, ສ້ອມແປງເລັກນ້ອຍ ແລະ ສ້ອມແປງໃຫຍ່ຕາມການສະເໜີຂອງວິຊາການຂັ້ນບ້ານ.
	ເກັບເງິນຈາກສະມາຊິກທີ່ນຳໃຊ້ນ້ຳພາຍໃນກຸ່ມ ແລະ ມອບໃຫ້ບັນຊີທຸກໆເດືອນ
	ລາຍງານຫົວໜ້າປົກກະຕິ

3.2. ການຄັດເລືອກສະມາຊິກຄະນະກຳມະການຄຸ້ມຄອງນ້ຳ

ສະມາຊິກຄະນະກຳມະການຄຸ້ມຄອງນ້ຳໄດ້ຖືກຄັດເລືອກໂດຍຊາວບ້ານດ້ວຍວິທີການທີ່ມີສ່ວນຮ່ວມ. ຜູ້ສະໝັກຈະຖືກຄັດເລືອກໂດຍອີງໃສ່ 10 ມາດຖານຕໍ່ໄປນີ້:

- ❖ ມີຄວາມຮູ້ຄວາມສາມາດ, ມີຄວາມເຂົ້າໃຈເລື່ອງນ້ຳໃນການນ້ຳລະບົບນ້ຳ
- ❖ ມີຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນນ້ຳປອດໄພ
- ❖ ສະໝັກໃຈປະກອບສ່ວນເຂົ້າໃນວຽກພາຍໃນບ້ານ
- ❖ ມີຄວາມກະຕືລືລົ້ນໃນການຊອກຮູ້ຮ່ຳຮຽນ
- ❖ ສາມາດອ່ານ ແລະ ຂຽນພາສາລາວໄດ້
- ❖ ມີສຸຂະພາບແຂງແຮງ
- ❖ ຫ້າວຫັນຕໍ່ວຽກງານ ແລະ ມີຄວາມອົດທົນ
- ❖ ໄດ້ຮັບຄວາມນັບຖື ແລະ ຄວາມເຊື່ອໝັ້ນຈາກປະຊາຊົນ
- ❖ ມີອາຍຸລະຫວ່າງ 25-50 ປີ
- ❖ ຊຸກຍູ້ແມ່ຍິງໃຫ້ເຂົ້າຮ່ວມເປັນຄະນະກຳມະການ

3.3. ການບຳລຸງຮັກສາ

ການບຳລຸງຮັກສາຕ້ອງເຮັດຢ່າງໜ້ອຍທຸກໆປີ. ຕາຕະລາງລຸ່ມນີ້ສະຫຼຸບປະເພດການສ້ອມແປງ

ສ້ອມແປງໃຫຍ່	ສ້ອມແປງທົ່ວໄປ
ຫ້ວງານເພຍ້ອນຝົນຕົກໜັກ ແລະ ນ້ຳບ່ອງ	ທໍ່ນ້ຳຂາດ
ລະບົບທໍ່ເປ່ເພຍ້ອນດິນເຈື່ອນ	ເບ້ົາ, ຢາງຮອງເປ່ເພ
ອ່າງເກັບນ້ຳແຕກຍ້ອນດິນເຈື່ອນຢູ່ໃກ້ກັບອ່າງເກັບນ້ຳ	ວາວປະຕູນ້ຳ, ຫົວຈຸກ ແລະ ຈຸດເຊື່ອມຕໍ່ເປ່ເພ
ວາວອາກາດເປ່ເພ	ກອັກນ້ຳເພ
	ທໍ່ອາກາດອ່າງເກັບນ້ຳເປ່ເພ

ເຮັດຫຍັງແດ່ໃນກໍລະນີການສ້ອມແປງໜັກ ?

ສ້ອມແປງໃຫຍ່	ລາຍການກວດເຊັກ	ຂໍ້ແນະນຳ	ໝາຍເຫດ
ຫ້ວງານເປ່ເພ ຍ້ອນຝົນຕົກໜັກ ແລະ ນ້ຳບ່ອງ	- ປະເມີນສະພາບຄວາມເສຍຫາຍໂດຍລວມ - ປະເມີນຈຸດໃດໜຶ່ງຂອງຫ້ວງານ - ຖ່າຍຮູບທຸກດ້ານ ແລະ ຈຸດເສ່ຍຫາຍຕ່າງໆ - ວັດແທກຄວາມຍາວ, ຄວາມກວ້າງ ແລະ ຄວາມສູງ ຈຸດທີ່ເປ່ເພເສຍຫາຍ	- ຄະນະກຳມະການນ້ຳປະຈຳບ້ານ ຕ້ອງເຮັດໃບສະເໜີຫາຫ້ອງ ການສາທາລະນະສຸກເມືອງຫຼືນ້ຳ ສະອາດເພື່ອປະເມີນຄວາມເສຍ ຫາຍແລະຄາດຄະເນຄ່າໃຊ້ຈ່າຍ ໃນການສ້ອມແປງຫຼືກໍ່ສ້າງຫ້ວ ງານໃໝ່.	ນ້ຳສະອາດເມືອງຈະ ສະໜັບສະໜູນ
ລະບົບທໍ່ຂາດ ຍ້ອນດິນເຈື່ອນ	- ປະເມີນເຂດທີ່ດິນເຈື່ອນໃນເວລາສ້ອມແປງ - ທໍ່ນ້ຳຍັງໃຊ້ໄດ້ບໍ່ ຫຼື ຄວນປ່ຽນໃໝ່? - ຖ່າຍຮູບດິນເຈື່ອນທຸກດ້ານ - ວັດແທກຄວາມຍາວຂອງທໍ່ທີ່ສາມາດແປງຄືນໄດ້ ຕາມຈຳນວນຂໍ້ຕໍ່ແລະຂະນາດຂອງທໍ່ທີ່ຕ້ອງການ.	- ຄະນະກຳມະການຄຸ້ມຄອງນ້ຳຂັ້ນ ບ້ານສາມາດສັ່ງວັດສະດຸແລະ ສ້ອມແປງເອງໄດ້	
ອ່າງເກັບນ້ຳແຕກ ຍ້ອນດິນເຈື່ອນຢູ່ ໃກ້ກັບ ອ່າງເກັບນ້ຳ	- ປະເມີນສະພາບຄວາມເສຍຫາຍໂດຍລວມ - ປະເມີນຄວາມເສຍຫາຍທີ່ເກີດຂຶ້ນໃນຈຸດໃດໜຶ່ງ ຂອງຫ້ວງານ - ຖ່າຍຮູບທຸກຂ້າງແລະຈຸດເສຍຫາຍຕ່າງໆ - ວັດແທກຄວາມຍາວ, ຄວາມກວ້າງແລະຄວາມສູງ ຈຸດທີ່ເປ່ເພເສຍຫາຍ	- ຄະນະກຳມະການນ້ຳປະຈຳບ້ານ ຕ້ອງເຮັດໃບສະເໜີຫາຫ້ອງການ ສາທາລະນະສຸກເມືອງຫຼືນ້ຳ ສະອາດເພື່ອປະເມີນຄວາມເສຍ ຫາຍແລະຄາດຄະເນຄ່າໃຊ້ຈ່າຍ ໃນການສ້ອມແປງ ຫຼື ກໍ່ສ້າງຖັງ ເກັບນ້ຳໃໝ່.	ນ້ຳສະອາດເມືອງຈະ ສະໜັບສະໜູນ
ວາວອາກາດເປ່ເພ	- ສາມາດແປງຄືນໄດ້ບໍ່? - ຖ້າບໍ່ໄດ້, ຈຳເປັນຕ້ອງຊື້ອັນໃໝ່.	- ຄະນະກຳມະການຄຸ້ມຄອງນ້ຳຂັ້ນ ບ້ານສາມາດສັ່ງວັດສະດຸ ແລະ ສ້ອມແປງເອງໄດ້	

ນີ້ແມ່ນຕົວຢ່າງຂອງການວາງແຜນການບຳລຸງຮັກສາໃນໄລຍະເວລາ 12 ປີ

ລດ	ໜ້າວຽກ	ປີ											
		1	2	3	4	5	6	7	8	9	10	11	12
1	ທຳຄວາມສະອາດ ແລະ ສ້ອມແປງຮົ້ວອ້ອມຮອບອ່າງເກັບນ້ຳ	■			■				■				■
2	ທຳຄວາມສະອາດຮ່ອງລະບາຍນ້ຳ ແລະ ສິ່ງແວດລ້ອມຂອງບ້ານ	■	■	■	■	■	■	■	■	■	■	■	■
3	ທຳຄວາມສະອາດຕາມທໍ່ສົ່ງນ້ຳ, ສ້ອມແປງທາງເຂົ້າເຖິງ ແລະ ການຖົມດິນຕື່ມໃສ່ເທິງສາຍທໍ່				■						■		
4	ທຳຄວາມສະອາດຫ້ອງນ ແລະ ທຳຄວາມສະອາດວັດສະດຸຂອງເຄື່ອງກັ່ນຕອງຢູ່ຫ້ອງນ ແລະ ອ່າງເກັບນ້ຳ		■				■		■			■	
5	ກວດເຊັກກົງເຕີນ້ຳ	■	■	■	■	■	■	■	■	■	■	■	■

3.4. ການຄຸ້ມຄອງການເງິນ

ການບຳລຸງຮັກສາຕ້ອງເຮັດຢ່າງໜ້ອຍທຸກໆປີ. ຄ່າໃຊ້ຈ່າຍໃນການສ້ອມແປງລະບົບນ້ຳສະອາດແມ່ນຂຶ້ນກັບປະເພດຂອງລະບົບທີ່ນຳໃຊ້. ພວກເຮົາສາມາດພິຈາລະນາຕາມຂໍ້ມູນອ້າງອີງຕໍ່ໄປນີ້:

- ລະບົບນ້ຳລິນ: 1 ລ້ານ ຫາ to 1.5 ລ້ານ ກີບຕໍ່ປີ
- ລະບົບໃຊ້ປໍ້າດູດນ້ຳ: 3 ລ້ານ ຫາ 6 ລ້ານ ກີບຕໍ່ປີ
- ລະບົບໃຊ້ພະລັງງານແສງຕາເວັນ 5 ລ້ານ ຫາ 10 ລ້ານ ກີບຕໍ່ປີ

ການບຳລຸງຮັກສາໜັກອາດຈະແພງ (ສູງເຖິງ 5 000 000 ກີບ). ເພື່ອຮັບປະກັນວ່າມີເງິນພຽງພໍທີ່ຈະຮັບຜິດຊອບຄ່າໃຊ້ຈ່າຍຫຼັກ, ແນະນຳໃຫ້ເກັບເງິນ **350 000 ກີບ/ເດືອນ** ເພື່ອຮັບປະກັນໃຫ້ມີງົບປະມານພຽງພໍ. ບາງລາຍຈ່າຍອື່ນໆອາດຈະຍັງມີຄວາມຈຳເປັນ (ເຊັ່ນ: ຄ່າຂົນສົ່ງເຂົ້າໄປໃນຕົວເມືອງເພື່ອຊື້ວັດສະດຸບາງຢ່າງເພື່ອມາທຳການບຳລຸງຮັກສາ, ...). ຜູ້ຮັບຜິດຊອບບັນຊີມີບົດບາດສຳຄັນຫຼາຍ ເພື່ອຮັບປະກັນລ່ວງໜ້າວ່າມີເງິນທຶນສາມາດຮັບຜິດຊອບຄ່າໃຊ້ຈ່າຍນັ້ນໄດ້. ໃນກໍລະນີທີ່ມີການສ້ອມແປງໜັກຫຼາຍ, ນາຍບ້ານຈະປຶກສາຫາລືກັບວິຊາການນ້ຳສະອາດ ແລະ ອາດຈະຕ້ອງໄດ້ຂໍການປະກອບສ່ວນພິເສດຈາກຊຸມຊົນ.

ຕາຕະລາງລຸ່ມນີ້ສະແດງຕົວຢ່າງຂອງງົບປະມານ (ເດືອນ, ປີ ແລະ 5 ປີ)

ລດ	ລາຍລະອຽດ	ຫົວໜ່ວຍ	ຈຳນວນເງິນ(ກີບ)	ລວມ (ກີບ)	ລວມທັງໝົດ (ກີບ)
I	**ແຕ່ລະເດືອນ**				
1.	ອາໄຫຼ່ (Socket, Tee...)	3	80 000	240 000	240 000
ແຕ່ລະເດືອນ : 110 000 ກີບຖືກປະຫຍັດໄວ້ເພື່ອໃຊ້ໃນລາຍຈ່າຍ "ປະຈຳປີ" *(ເກັບ 350 000 – ຈ່າຍ 240 000)* ໃນທ້າຍປີປະຫຍັດໄດ້ : 1 320 000 ກີບ.					
II	**ແຕ່ລະປີ**				
1.	ອາໄຫຼ່ (Socket, Tee...)	9	80 000	720,000	820 000
2.	ຄ່າເດີນທາງຂອງຄະນະກຳມະການ	2	50 000	100 000	
ແຕ່ລະປີ : 1 320 000 -820 000 = 500 000 ກີບເປັນເງິນປະຫຍັດເຂົ້າກອງທຶນ ທຸກໆ 5 ປີ, ກອງທຶນຈະມີເງິນ : 5 *500 000 ກີບ = 2 500 000 ກີບເພື່ອໃຊ້ເປັນຄ່າໃຊ້ຈ່າຍ 5 ປີ					
III	**ທຸກໆ 5 ປີ**				
1.	ອາໄຫຼ່	24	80 000	1 920 000	2 120 000
2.	ຄ່າເດີນທາງຂອງຄະນະກຳມະການ	2	50 000	100 000	

ມີເງິນເຫຼືອໜ້ອຍໃນກໍລະນີທີ່ມີລາຍຈ່າຍເລັກໆນ້ອຍໆໜ້ອຍອື່ນໆທີ່ຈຳເປັນ. ມັນອາດຈະຂຶ້ນກັບມູນຄ່າຫົວ ໜ່ວຍວັດສະດຸນຳ ອີກ. ໃນກໍລະນີນີ້, ຖ້າລາຄາເພີ່ມຂຶ້ນ, ຄະນະກຳມະການຕ້ອງເພີ່ມຈຳນວນເງິນທີ່ເກັບໃນແຕ່ລະເດືອນຂຶ້ນ.

<u>ໃນກໍລະນີຕິດຕັ້ງກົງເຕີ້ນ້ຳໃນລະດັບຄົວເຮືອນ:</u>

ໃນກໍລະນີນີ້, ຄົວເຮືອນຕ້ອງໄດ້ຈ່າຍໂດຍອີງຕາມປະລິມານນ້ຳທີ່ນຳໃຊ້ໃນໜຶ່ງເດືອນ. ໝາຍຄວາມວ່າລາຄາ/ມ^3 ແມ່ນມີລາຄາຖືກກວ່າຢູ່ໃນບ້ານທີ່ມີປະຊາກອນຫຼາຍກວ່າຢູ່ໃນຊຸມຊົນຂະນາດນ້ອຍ. ຍົກຕົວຢ່າງ:

- ບ້ານທີ່ມີປະຊາຊົນ 350 ຄົນນຳໃຊ້ນ້ຳໂດຍສະເລ່ຍ 630 ມ^3. ຄ່ານ້ຳທີ່ແນະນຳໃຫ້ເກັບແມ່ນ: 350,000/630 = 555 ຫຼື 550 ກີບ /ມ^3
- ບ້ານທີ່ມີປະຊາຊົນ 550 ຄົນນຳໃຊ້ນ້ຳໂດຍສະເລ່ຍ 990 ມ^3. ຄ່ານ້ຳທີ່ແນະນຳໃຫ້ເກັບແມ່ນ: 350,000/990 = 350 ຫຼື 355 ກີບ /ມ^3

<u>ໃນກໍລະນີໃຊ້ກາອັກນ້ຳສາທາລະນະ</u>

ໃນກໍລະນີນີ້, ການເກັບເງິນຄ່ານ້ຳຕໍ່ເດືອນແມ່ນອີງຕາມຈຳນວນຄົນໃນບ້ານ; ເພື່ອໃຫ້ໄດ້ຮັບ 350 000 ກີບຕໍ່ເດືອນ.

350 ຄົນພາຍໃນບ້ານ	350 000 / 350 =	1 000 ກີບ/ ຄົນ / ເດືອນ
600 ຄົນພາຍໃນບ້ານ	350 000 / 600 =	580 ກີບ/ ຄົນ / ເດືອນ

3.5. ບົດຮຽນທີ່ຖອດຖອນໄດ້ ແລະ ກໍລະນີສຶກສາ

ການວາງແຜນນ້ຳປອດໄພ ແລະ ການສ້າງຕັ້ງຄະນະກຳມະການຄຸ້ມຄອງນ້ຳເປັນວິທີການໃໝ່ທີ່ໃຊ້ໃນ ສປປ ລາວ: ສູນນ້ຳສະອາດ ແລະ ສິ່ງແວດລ້ອມ(ສູນນ້ຳສະອາດ) ໄດ້ພັດທະນາຄູ່ມືຄຳແນະນຳສຳລັບການຈັດຕັ້ງປະຕິບັດແຜນນ້ຳປອດໄພສຳລັບທຸກລະບົບ ແລະ ເລີ່ມນຳໃຊ້ຢ່າງເປັນທາງການໃນທົ່ວປະເທດໃນປີ 2011.

ນັບຕັ້ງແຕ່ປີ 2011 ເປັນຕົ້ນມາ, ການຈັດຕັ້ງປະຕິບັດແຜນນ້ຳປອດໄພຍັງມີຂໍ້ຈຳກັດແລະຈະຕ້ອງມີຄວາມຄືບໜ້າ ຕື່ມອີກເພື່ອຮັບປະກັນຄວາມຍືນຍົງຂອງລະບົບການສະໜອງນ້ຳ. ບັນຫາຫຼັກທີ່ເຮັດໃຫ້ຄວາມຄືບໜ້າຂອງແຜນນ້ຳປອດໄພມີຂໍ້ຈຳກັດທີ່ພວກເຮົາສັງເກດເຫັນແມ່ນ:

- ການກໍ່ສ້າງລະບົບລະບົບນ້ຳສະອາດບໍ່ໄດ້ຕາມມາດຕະຖານ, ບໍ່ສອດຄ່ອງກັບການພັດທະນາແຜນນ້ຳປອດໄພໃນລະດັບຊຸມຊົນ
- ຂາດນະໂຍບາຍ ແລະ ຍຸດທະສາດທ້ອງຖິ່ນໃນການປົກປັກຮັກສາແຫຼ່ງນ້ຳ: ບັນຫາຫຼາຍຢ່າງສິ່ງຜົນກະທົບຕໍ່ການກໍ່ສ້າງລະບົບນ້ຳສະອາດໃນຊຸມຊົນ ແລະ ຍັງບໍ່ໄດ້ຮັບການແກ້ໄຂ (ການນຳໃຊ້ທີ່ດິນເຂດແຫຼ່ງນ້ຳສຳລັບການປູກຝັງ, ການນຳໃຊ້ຢາປາບສັດຕູພືດ ແລະ ການນຳໃຊ້ສານເຄມີ, ການຕັດໄມ້ທຳລາຍປ່າ ...)
- ຂາດນະໂຍບາຍທ້ອງຖິ່ນທີ່ຈະແຈ້ງໃນການຈັດຕັ້ງປະຕິບັດເຖິງແຜນນ້ຳປອດຂອງຊຸມຊົນແລະ ຄວາມສຳຄັນຂອງກິດຈະກຳການວາງແຜນນ້ຳປອດໃນຊຸມຊົນ
- ການຈັດຕັ້ງປະຕິບັດແຜນນ້ຳປອດໄພຍັງບໍ່ເຂົ້າໃຈດີແມ່ນກະທັ່ງຄູຝຶກ (ຈາກຄູ່ຮ່ວມງານພາກລັດ) ແລະ ຊຸມຊົນ. ທັກສະກ່ຽວກັບການຈັດຕັ້ງສັງຄົມທີ່ກ່ຽວຂ້ອງກັບການຄຸ້ມຄອງນ້ຳຂອງພະນັກງານນ້ຳສະອາດຍັງມີຈຳກັດຫຼາຍ
- ການວາງແຜນໆນ້ຳປອດໄພແມ່ນອາໄສວິທີການແບບມີສ່ວນຮ່ວມທີ່ມີລະດັບຄວາມເປັນເຈົ້າການສູງຂອງຊຸມຊົນຕໍ່ລະບົບນ້ຳສະອາດ.

ຈັດຝຶກອົບຮົມກ່ຽວກັບການວາງແຜນນ້ຳປອດໄພແລະ ເພື່ອສະໜັບສະໜູນຄະນະກຳມະການຄຸ້ມຄອງນ້ຳຕ້ອງການທັກສະ ແລະ ປະສົບການໃນຫົວຂໍ້ຕ່າງໆ (ການກໍ່ສ້າງລະບົບນ້ຳ, ການສົ່ງເສີມສຸຂະພາບຂອງຊຸມຊົນ, ການປຸກລະດົມຊຸມຊົນ, ...). ວິທີການຈະຕ້ອງມີລັກສະນະປະຖົມນິເທດ, ແບບມີສ່ວນຮ່ວມ ແລະ ແທດເໝາະກັບຜູ້ໃຫຍ່. ທີມງານຫຼາຍພາກສ່ວນໄດ້ຖືກແນະນຳໃຫ້ລວບລວມທັກສະ ແລະ ປະສົບການທັງໝົດເພື່ອເຮັດໃຫ້ມັນປະສົບຜົນສຳເລັດ.

ເຮັດແນວໃດຈຶ່ງຈະຮັບປະກັນໃຫ້ຄະນະກຳມະການຄຸ້ມຄອງນ້ຳມີຄວາມຍືນຍົງ ?

ສອງປັດໃຈຫຼັກທີ່ຈະຮັບປະກັນໄດ້ວ່າຄະນະກຳມະການຄຸ້ມຄອງນ້ຳຈະສາມາດດຳເນີນວຽກງານຂອງຕົນໄດ້ຄື:

- ***ລະດັບຄວາມເປັນເຈົ້າຕົນເອງ ແລະ ຄຳໝັ້ນສັນຍາຂອງສະມາຊິກ***: ສະມາຊິກຄະນະກຳມະການຕ້ອງເພີ່ມຄວາມເຂັ້ມແຂງແລະໄດ້ຮັບການສະໜັບສະໜູນເພື່ອໃຫ້ເຂົ້າໃຈຈຸດປະສົງຂອງແຜນຄວາມປອດໄພນ້ຳຂອງບ້ານແລະຮັບປະກັນໃຫ້ຊຸມຊົນສາມາດຈັດຕັ້ງປະຕິບັດແຜນການດັ່ງກ່າວ;

- ***ການກະໜັບສະໜຸນໃນລະດັບສູງ ແລະ ຕໍ່ເນື່ອງຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງຂອງພາກລັດ:*** ບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງຕ້ອງໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນນ້ຳປອດໄພຂອງບ້ານຢ່າງຕໍ່ເນື່ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃຫ້ມີສະຕິຄວາມເປັນເຈົ້າຂອງແຜນດັ່ງກ່າວ.

4. ການຕິດຕັ້ງກົງເຕີ້ນ້ຳໃນຄົວເຮືອນ: ວິທີແກ້ໄຂເພື່ອປະຫຍັດນ້ຳ ?

4.1. ກົງເຕີ້ນ້ຳແມ່ນຫຍັງ ?

ກົງເຕີ້ນ້ຳແມ່ນລະບົບທີ່ຕິດຕັ້ງຢູ່ໃນລະດັບຄົວເຮືອນເພື່ອວັດແທກປະລິມານການຊົມໃຊ້ນ້ຳຂອງຄົວເຮືອນ.

ຈຸດກວດເພື່ອເບິ່ງວ່າກົງເຕີ້ໃຊ້ງານໄດ້ຫຼືບໍ

ຈຳນວນເປັນ m^3 : ບໍລິມາດນ້ຳທີ່ໃຊ້

X0.01 ແມ່ນມາດຕາສ່ວນການໝຸນຖ້າໝຸນເປັນຮອບ ຫຼື 0 ເຖິງ 10 ຈະເທົ່າກັບ X0.1 ຮອບ 1 ຫົວນ່ວຍ

X0.1 ແມ່ນມາດຕາສ່ວນການໝຸນ ຖ້າໝຸນເປັນຮອບຫຼື 0 ເຖິງ 10 ຈະເທົ່າກັບຈຳນວນ m^3 ຮອບ 1 ຫົວນ່ວຍ

ກົງເຕີ້ນ້ຳໄດ້ຖືກຕິດຕັ້ງໄກ້ກັບກ໊ອກນ້ຳຂອງຄົວເຮືອນ. ແນະນຳໃຫ້ປິດມັນຕະຫຼອດເວລາເພື່ອປົກປ້ອງລະບົບຈາກນ້ຳຝົນ, ແດດ, ອຸນຫະພູມ ຄວາມຮ້ອນ



ເພື່ອເຕືອນຄວາມຈຳ :
1 m^3 = ນ້ຳ 1 000 ລິດ

4.2. ຂັ້ນຕອນທາງດ້ານເຕັກນິກສຳລັບການຕິດຕັ້ງກົງເຕີນ້ຳ



ຮູບ 8 : ແຜນວາດການຕິດຕັ້ງກົງເຕີ້ນ້ຳ

No	Materials	Unit	Amount
1	PE FMT tee reduce 32mm-1/2"	PCS	1
2	PVC Nipple f 1/2"	PCS	1
3	FMT socket reduce f 20mm-18mm	PCS	2
4	PE f 20mm	ml	15
5	PVC MT socket f 1/2"	PCS	2
6	PVC pipe f 1/2", L=4m	Line	1
7	PVC Elow 90	PCS	6
8	Gate Valve f 1/2" (SANWA)	PCS	1
9	Copper socket reduce FMT and MT f 18mm-18mm	PCS	2
10	Steel Water meter 1/2" (SANWA)	Suit	1
11	PVC FT socket f 1/2"	PCS	2
12	Water tap (SANWA) f 1/2"	PCS	1

ລາຍການເຄື່ອງອາໄຫຼ່ເພື່ອຕິດຕັ້ງກົງເຕົ້ນ້ຳ

ລດ	ວັດສະດຸ	ຫົວ່ວຍ	ຈຳນວນ
1	ທໍ່ຫຼຸດ PE FMT 32ມມ-1/2”	ອັນ	1
2	ທໍ່ PVC Nipple f 1/2”	ອັນ	1
3	ທໍ່ຫຼຸດ FMT f 20ມມ-18ມມ	ອັນ	2
4	ທໍ່ PE f 20ມມ	ມລ	15
5	ທໍ່ PVC MT Socket f 1/2”	ອັນ	2
6	ທໍ່ PVC f 1/2” ຍາວ 4 ມ	ເສັ້ນ	1
7	ທໍ່ PVC Elow 90	ອັນ	6
8	ວາວປະຕູນ້ຳ f 1/2” (SANWA)	ອັນ	1
9	ຂໍ້ຕໍ່ຫຼຸດກຽວທອງ **socket FMT** ແລະ **MT f** 18ມມ-18ມມ	ອັນ	2
10	ກົງເຕົ້ນ້ຳທີ່ເປັນເຫຼັກ 1/2” (SANWA)	ຊຸດ	1
11	ທໍ່ PVC FT Socket f 1/2”	ອັນ	2
12	ກ໊ອກນ້ຳ SANWA f 1/2”	ອັນ	1

ການຕິດຕັ້ງກົງເຕົ້ນ້ຳ

1. ຕັດທໍ່ PVC ½” ຕາມລວງຍາວຂະນາດ 30 cm, 45cm, 150 cm, 15 cm, 45 cm, 80 cm, 150 cm ແລະ 20 cm ທ່ອນ.
2. ເຮັດຮູຂະໜາດນ້ອຍພ້ອມທໍ່ແຈກນ້ຳ PE32 ດ້ວຍເຄື່ອງເຈາະ.
3. ປະກອບອາໄຫຼ່ຕາມສະແດງໃນຮູບຮູບ 8

4.3. ຂໍ້ດີ ແລະ ຂໍ້ເສຍຂອງກົງເຕີ້ນ້ຳສຳລັບຄົວເຮືອນແມ່ນຫຍັງ ?

ການຕິດຕັ້ງກົງເຕີ້ນ້ຳໃນຄົວເຮືອນຕ້ອງໄດ້ຕິດຕັ້ງເຊື່ອມຕໍ່ເຂົ້າແຕ່ລະຄົວເຮືອນ ແລະ ບິນຄ່ານ້ຳປະປາແຕ່ລະເດືອນແມ່ນຄົວເຮືອນເປັນຜູ້ຈ່າຍອີງຕາມການບໍລິມາດນ້ຳທີ່ເຂົາເຈົ້າຊົມໃຊ້. ລະບົບນີ້ມີຂໍ້ດີ/ຂໍ້ເສຍດັ່ງຕໍ່ໄປນີ້::

ຂໍ້ດີ	ຂໍ້ເສຍ
• **ຄວາມສະເໝີພາບ** ລະຫວ່າງຄົວເຮືອນໃນການຊຳລະ: ໃບບິນຄ່ານ້ຳແມ່ນອີງໃສ່ບໍລິມາດນ້ຳຕົວຈິງທີ່ເຂົາເຈົ້າໃຊ້. • ນ້ຳໃຫ້ທັງ "ຄຸນຄ່າ" ແລະ "ຄ່າໃຊ້ຈ່າຍ". ປະຊາຊົນໄດ້ຮັບການຊຸກຍູ້ໃຫ້**ປະຢັດນ້ຳ**ໂດຍທາງອ້ອມຊຶ່ງໃຫ້ຜົນກະທົບທາງບວກຕໍ່ສິ່ງແວດລ້ອມ ແລະ ຄວາມຍືນຍົງໂດຍສະເພາະບ່ອນທີ່ມີນ້ຳໜ້ອຍ. • **ການຄຸ້ມຄອງຂອງຊຸມຊົນ ແລະ ຄວາມເປັນເຈົ້າການສູງ**: ຄະນະກຳມະການຄຸ້ມຄອງນ້ຳຈະເປັນຜູ້ເກັບເງິນເຂົ້າກອງທຶນເພື່ອການບຳລຸງຮັກສາ. ຄະນະກຳມະການຄຸ້ມຄອງນ້ຳມີບົດບາດສູງຂຶ້ນເມື່ອກົງເຕີ້ນ້ຳໄດ້ຖືກຕິດຕັ້ງ, ຄວາມເປັນເຈົ້າການຂອງຊຸມຊົນຕໍ່ກັບລະບົບນ້ຳປະປາສູງຂຶ້ນ. ເຮັດໃຫ້ແຕ່ລະຄົວເຮືອນມີຄວາມຮັບຜິດຊອບເພື່ອຮັກສາທໍ່ນ້ຳ, , ກົງເຕີ້ນ້ຳ ແລະ ກອັກນ້ຳຂອງຕົນ. • **ຄວາມເປັນສ່ວນຕົວສຳລັບຄົວເຮືອນສູງຂຶ້ນ:** ມັນເປັນເລື່ອງສ່ວນຕົວ ແລະ ສະດວກຫຼາຍຂຶ້ນສຳລັບຄົວເຮືອນທີ່ຈະເອົານ້ຳຈາກອັກນ້ຳແຕ່ລະອັກເພື່ອແຕ່ງກິນ, ຊັກເຄື່ອງ, ອາບນ້ຳ, ອະນາໄມ, ລ້າງຫ້ອງນ້ຳຂອງເຂົາເຈົ້າ, ແລະ ອື່ນໆແທນທີ່ຈະໃຊ້ກ໊ອກນ້ຳລວມຂອງບ້ານທີ່ໃຊ້ຮ່ວມກັບຫຼາຍໆເຮືອນ. • **ປ້ອງກັນການລ່ວງລະເມີດ (ແມ່ຍິງ ແລະ ເດັກນ້ອຍ):** ມັນຫຼຸດຜ່ອນແຮງງານຂອງແມ່ຍິງ ແລະ ເດັກນ້ອຍໃນການໄປເອົານ້ຳຈາກນ້ຳປະປາສາທາລະນະ ແລະ ຈາກແຫຼ່ງນ້ຳທີ່ຢູ່ໄກຈາກບ້ານ. ຄວາມສ່ຽງຂອງການຖືກລະເມີດກໍ່ຈະຖືກຫຼຸດລົງໂດຍສະເພາະແມ່ນເດັກນ້ອຍ, ໄວລຸ້ນ ແລະ ຜູ້ຍິງຖ້າເຂົາເຈົ້າສາມາດອາບນ້ຳຢູ່ເຮືອນຂອງເຂົາເຈົ້າເອງ (ແລະບໍ່ແມ່ນອາບຢູ່ກາງບ້ານ, ໂດຍໃຊ້ກອັກນ້ຳລວມໂດຍບໍ່ມີຄວາມເປັນສ່ວນຕົວ).	• **ຄ່າໃຊ້ຈ່າຍ**: ແຕ່ລະຄົວເຮືອນຕ້ອງໄດ້ລົງທຶນເພື່ອຕິດຕັ້ງກົງເຕີ້ນ້ຳເຂົ້າເຮືອນຂອງຕົນ (300 000 ກີບຫຼື 30 ດອນລາສະຫະລັດ ຕໍ່ 1 ຄົວເຮືອນໂດຍສະເລ່ຍ) ມັນສາມາດເປັນສິ່ງທ້າທາຍສຳລັບຜູ້ທຸກຍາກທີ່ສຸດ. ໃນບາງກໍລະນີ, ໂຄງການແລະຄູ່ຮ່ວມງານພາກລັດອາດຕ້ອງໄດ້ສະໜັບສະໜູນຄົວເຮືອນທີ່ທຸກຍາກທີ່ສຸດ. • **ເວລາ**: ການຕິດຕັ້ງກົງເຕີ້ນ້ຳເຂົ້າແຕ່ລະຄົວເຮືອນເຮັດໃຫ້ການກໍ່ສ້າງໃຊ້ເວລາຍາວຂຶ້ນ (ຕົວຢ່າງ: 10-15 ວັນ ສຳລັບບ້ານທີ່ມີ 150 ຄົວເຮືອນ) • **ການສ້າງຂີດຄວາມສາມາດ ແລະ ການສະໜັບສະໜູນ:** ຕ້ອງໄດ້ຈັດຝຶກອົບຮົມໃຫ້ຄະນະກຳມະການຄຸ້ມຄອງນ້ຳກ່ຽວກັບການບຳລຸງຮັກສາ ແລະ ການເກັບເງິນກອງທຶນ. ເຂົາເຈົ້າມີຕ້ອງການຄວາມຊ່ວຍເຫຼືອທາງດ້ານເຕັກນິກເພີ່ມເຕີມຈາກພາກສ່ວນກ່ຽວຂ້ອງ. • **ຄຳໝັ້ນສັນຍາຂອງຊຸມຊົນແລະຄວາມສ່ຽງດ້ານຄວາມຂັດແຍ່ງ:** ໃບບິນຄ່ານ້ຳຕ້ອງໄດ້ເຮັດເປັນປົກກະຕິ, ຄຸ້ມຄອງ ແລະເກັບເງິນກອງທຶນ. ບັນດາອັນນີ້ຕ້ອງມີການຕົກລົງເຫັນດີຈາກສ່ວນລວມ ແລະ ຮ່ວມກັນກ່ຽວກັບຄ່າທຳນຽມ ແລະ ແຕ່ລະຄົວເຮືອນຕ້ອງໃຫ້ຄຳໝັ້ນສັນຍາທີ່ຈະຈ່າຍຄ່ານ້ຳໃຫ້ທັນເວລາ. ທີມງານພັດທະນາຂັ້ນບ້ານແລະອຳນາດການປົກຄອງບ້ານແມ່ນຕ້ອງຫຼັກເຜື່ອຮັບປະກັນບໍ່ໃຫ້ມີຂໍ້ຂັດແຍ້ງຫຼືຄວນບໍ່ເຫັນດີໃນການຈ່າຍເງິນຄ່ານ້ຳ.

ແລະຂໍ້ດີ/ຂໍ້ເສຍຂອງກອັກນ້ຳສາທາລະນະມີຫຍັງແດ່?

ຂໍ້ດີ	ຂໍ້ເສຍ
• **ຄ່າໃຊ້ຈ່າຍ**: ລາຄາຖືກກວ່າການຕິດຕັ້ງກົງເຕີ້ນ້ຳປະຈຳຄົວເຮືອນ • **ເຕັກນິກງ່າຍແລະເປັນທີ່ຮູ້ຈັກດີ:** ລາຄາຖືກກວ່າການຕິດຕັ້ງກົງເຕີ້ນ້ຳໃສ່ຄົວເຮືອນ • ການກໍ່ສ້າງໃຊ້ເຕັກນິກບໍ່ຫຼາຍ • **ຜົນກະທົບທາງສັງຄົມ**: ພື້ນຖານໂຄງລ່າງລວມໝູ່ປະກອບສ່ວນເຂົ້າໃນວິຖີຊີວິດທາງສັງຄົມພາຍໃນບ້ານ (ລົມກັນແລະພົບປະກັນເວເວໄປເອົານ້ຳ ...)	• **ຄວາມສ່ຽງສູງຕໍ່ການເປ່ເພເສຍຫາຍແລະການແຕກເພ:** ກອັກນ້ຳສາທາລະນະມັກຈະຫັກໄວເພາະວ່າຫຼາຍຄົນໃຊ້ກ໊ອກນ້ຳດຽວກັນ • **ເສຍເວລາຫຼາຍໃນການໄປເອົານ້ຳ:** ຊາວຕ້ອງໄດ້ລໍຖ້າເປັນເວລາດົນນານເພື່ອທີ່ຈະໄດ້ນ້ຳຈາກກອັກນ້ຳສາທາລະນະໂດຍສະ ເພາະຕອນເຊົ້າຫຼືຕອນແລງ • **ຄວາມສ່ຽງຈາກການຖືກລະເມີດ, ມີຄວາມເປັນສ່ວນຕົວຕ່ຳ:** ຂາດຄວາມເປັນສ່ວນຕົວເມື່ອອາບນ້ຳຢູ່ທີ່ກອັກນ້ຳສາທາລະນະ. ແມ່ຍິງແລະເດັກນ້ອຍຕ້ອງປະສົບກັບການຖືກຄຸກຄາມແລະການລ່ວງລະເມີດໂດຍທາງກົງຫຼືທາງອ້ອມ. • **ການບຳລຸງຮັກສາຕ່ຳລົງ**: ການນຳໃຊ້ນ້ຳສະອາດສາທາລະນະ, ລະດັບຄວາມເປັນເຈົ້າການແລະຄວາມເອົາໃຈໃສ່ໃນການປົກປັກຮັກສາແລະສ້ອມແປງຈະບໍ່ສູງ.

4.4. ຂໍ້ແນະນຳກ່ຽວກັບກົງເຕີ້ນ້ຳ

ການຕິດຕັ້ງກົງເຕີ້ນ້ຳໃນຄົວເຮືອນຍັງເປັນບັນຫາໃໝ່ຢູ່ໃນ ສປປ ລາວ. ຕາຕະລາງຕໍ່ໄປນີ້ສັງລວມບາງຄຳແນະນຳໃນການຈັດຕັ້ງປະຕິບັດຂອງໂຄງການ SCALING.

	ຂໍ້ແນະນຳ
ການປະເມີນຄວາມເປັນໄປໄດ້ເບື້ອງຕົ້ນ	- ພະນັກງານຂອງ WASH ຕ້ອງປະເມີນເງື່ອນໄຂຂອງບ້ານ ແລະ ຄວາມສົນໃຈຂອງຊຸມຊົນກ່ອນ - ພະນັກງານຂອງ WASH ຕ້ອງປຶກສາຫາລືຢ່າງຈະແຈ້ງກັບຊຸມຊົນ ແລະ ອະທິບາຍຄວາມໝາຍຂອງການນຳໃຊ້ນ້ຳລາຍເດືອນແລະຄ່ານ້ຳລາຍເດືອນ - ໂດຍທາງອ້ອມ, ໃນລະຫວ່າງການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນ, ພະນັກງານຂອງ WASH ຈະປະເມີນລະດັບຄວາມເປັນຜູ້ນຳຂອງນາຍບ້ານ.
ໃນຊ່ວງກໍ່ສ້າງ ແລະ ຕິດຕັ້ງກົງເຕີ້ນ້ຳ	- ພະນັກງານຂອງ WASH ຈະພິຈາລະນາພື້ນທີ່ຈະຕິດຕັ້ງກົງເຕ້ (ຄວາມປອດໄພ, ເໝາະສົມແລະສະດວກສະບາຍໃນການນຳໃຊ້) - ກົງເຕີ້ນ້ຳບໍ່ຄວນຢູ່ໃກ້ກ້ອກນ້ຳແລະຈະຕ້ອງມີຝາປິດ
ຫຼັງຈາກຕິດຕັ້ງແລ້ວ	- ພະນັກງານນ້ຳສະອາດຂອງເມືອງຄວນຈັດອົບຮົມກ່ຽວກັບວິທີຈັດບັນທຶກເລກກົງເຕ້, ວິທີຄິໄລ່ບໍລິມາດແມ້ດກ້ອນຂອງນ້ຳທີ່ນຳໃຊ້ - ທຳການປະເມີນຜົນແຜນນ້ຳປອດໄພໃຫ້ໄດ້ຄຸນນະພາບ